# ທຳມະນູນຊີວິດ

## ສະບັບສຳລັບປະຊາຊົນ

ພຣະພົມຄຸນາພອນ (ປ.ອ. ປະຍຸດໂຕ)
ປັດຈຸບັນດຳລົງຕຳແໜ່ງ ສົມເດັດພຣະພຸດທະໂຄສາຈານ

ແປໂດຍ: ອຸຊຸຈາໂຣ ພິກຂຸ



**ຄະນະຈັດພິມ**

**ທຳມະນູນຊີວິດ ສະບັບສຳລັບປະຊາຊົນ**

ພຣະພົມຄຸນາພອນ (ປ.ອ ປະຍຸດໂຕ): ຂຽນ

ອຸຊຸຈາໂຣ ພິກຂຸ: ແປ

ກວດອັກສອນ: ພຣະອາຈານ ພູວົງ ຂາວຄູນປະເສີດ,ທ່ານໂອທອງ ຄຳອິນຊູ

ອອກແບບໜ້າປົກ: ພຣະອາຈານວ່າທີ່ ປ.ທ ແສງແກ້ວ ມະນີເພັດ

ຈັດຮູບເຫຼັ້ມ: ທ້າວສິງໄຈ ໄຊຍະສຸກ

ຂະໜາດພິມ: 15x2o cm

ຈຳນວນພິມ: 1,000 ຫົວ

ພິມເປັນທຳມະທານເທື່ອທຳອິດ ວັນທີ 29 ເດືອນ ກຸມພາ ປີ 2018

## ຄຳສະເໜີຂອງທ່ານໂອທອງ ຄຳອິນຊູ

ທຳມະນູນຊີວິດ ສະບັບສຳລັບປະຊາຊົນ ເປັນປຶ້ມທີ່ຂຽນຈາກຫຼັກທຳຂອງພຸດທະສາສະໜາແຕ່ໄດ້ຮັບການຮຽບຮຽງເພື່ອໃຫ້ສາມັນຊົນທົ່ວໄປອ່ານເຂົ້າໃຈງ່າຍ

ປຶ້ມຫົວນີ້ມີສາລະດີໆທີ່ທຸກຄົນຄວນອ່ານ ເພື່ອນຳໄປເປັນແນວທາງໃນການປະຕິບັດຕົນໃຫ້ພົ້ນຈາກທຸກ, ເປັນຂໍ້ຄິດໃນການວາງຕົນເພື່ອໃຫ້ເປັນທີ່ຮັກແພງຂອງຄົນຮອບຂ້າງ, ເປັນແນວທາງຊີວິດເພື່ອກ້າວໄປສູ່ຈຸດໝາຍໃນການປະຕິບັດໜ້າທີ່ ແລະ ດຳລົງຊີວິດຢ່າງເໝາະສົມ ສ້າງຕົນເປັນສະມາຊິກທີ່ດີຂອງສັງຄົມ.

ຂ້ານ້ອຍຮູ້ສຶກພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ມີສ່ວນຮ່ວມເລັກໆນ້ອຍໆ ເຂົ້າໃນການປາກົດຕົວຂອງປຶ້ມທຳນູນຊີວິດສະບັບສຳລັບປະຊາຊົນ ສະບັບພາສາລາວ ເຊິ່ງເຊື່ອວ່າການອ່ານປຶ້ມຫົວນີ້ ຈະເກີດປະໂຫຍດແກ່ຜູ້ອ່ານບໍ່ຫຼາຍກໍໜ້ອຍ.

*ໂອທອງ ຄຳອິນຊູ*

*ຫົວໜ້າບັນນາທິການ ວາລະສານວັນນະສິນ*

*ວັນທີ 3 ພະຈິກ 2017*



## ຄໍາເຫັນຂອງຜູ້ແປ

ໜັງສືທໍາມະນູນຊີວິດ ສະບັບສໍາລັບປະຊາຊົນຫົວນີ້ ຜູ້ແປໄດ້ຮັບມາຈາກພຣະອາຈານໃຫຍ່ມະຫາວຸດທິໄຊ ວະຊິຣະເມທີ (ວໍ ວະຊິຣະເມທີ) ໃນໂຄງການອົບຮົມພຣະທໍາມະທູດຮຸ່ນໃໝ່ກ້າວໄກສູ່ອາຊຽນ (The New Generation Buddhist Missionary Monk to ASEAN Project 2016 ) ທີ່ສູນວິປັດສະນາກໍາມະຖານສາກົນໄຮ່ເຊີນຕາເວັນ ຈັງຫວັດຊຽງຮາຍ ປະເທດຣາຊະອານາຈັກໄທ ໂດຍທີ່ພຣະອາຈານໃຫຍ່ເພິ່ນໄດ້ກ່າວຍ້ອງຍໍໜັງສືຫົວນີ້ວ່າ ໃຫ້ຜູ້ເຂົ້າຮ່ວມອົບຮົມທຸກອົງໄປໃສໃຫ້ນໍາໃສ່ຖົງຍ່າມຕິດຕົວໄປນໍາ.

ດັ່ງນັ້ນ, ຜູ້ແປໄດ້ລອງອ່ານເບິ່ງແລ້ວກໍເຫັນວ່າເໝາະ ແລະ ເຂົ້າໃຈງ່າຍ ຄິດວ່າຄົງເປັນການດີ ຫາກໄດ້ພິມເຜີຍແຜ່ແກ່ພຣະສົງສາມະເນນ ແລະ ພຸດທະສາສະນິກະຊົນໃນລາວເຮົາ

ຫວັງຢ່າງຍິ່ງວ່າຄົງຈະເປັນປະໂຫຍດແກ່ຜູ້ໄດ້ອ່ານທຸກທ່ານທຸກຄົນໂດຍທຸກຖ້ວນໜ້າ

ຂ້ານ້ອຍຂໍສະແດງຄວາມຮູ້ບຸນຄຸນໃນພຣະເດດພຣະຄຸນພຣະພົມຄຸນາພອນ (ປ.ອ. ປະຍຸດໂຕ) ເປັນຢ່າງສູງຍິ່ງ ທີ່ເມດຕາໃຫ້ຂ້ານ້ອຍສາມາດນໍາມາແປເຜີຍແຜ່ເພື່ອເປັນແບບແຜນແກ່ຄວາມຈະເລີນຮຸ່ງເຮືອງໃນການດໍາເນີນຊີວິດປະຈໍາວັນ, ໜ້າທີ່ວຽກງານ ລວມທັງການປະພຶດປະຕິບັດຕົນຕໍ່ຄອບຄົວ, ສັງຄົມ ແລະ ປະເທດຊາດບ້ານເມືອງໃຫ້ຈະເລີນຜາສຸກຍິ່ງໆຂຶ້ນໄປໃນຄັ້ງນີ້ດ້ວຍ

ພ້ອມນີ້ຜູ້ແປກໍຕ້ອງຂໍອະນຸໂມທະນາບຸນນຳ ທ່ານອາຈານ ໂອທອງ ຄຳອິນຊູ ຫົວໜ້າບັນນາທິການວາລະສານວັນນະສິນ ທີ່ໄດ້ໃຫ້ກຽດເສຍສະຫຼະເວລາພິສູດອັກສອນໃຫ້ ເຖິງແມ່ນວ່າອາຈານມີວຽກງານຫຼາຍຢ່າງຫຼາຍປະການຢູ່ກໍຕາມ ແຕ່ກໍໄດ້ເອົາໃຈໃສ່ຊ່ວຍເຫຼືອເຕັມທີເມື່ອມີໂອກາດ

ຂໍອະນຸໂມທະນາບຸນໃນກຸສົນສັດທາຂອງຜູ້ທີ່ມີສ່ວນຮ່ວມຈັດພິມໜັງສືຫົວນີ້ທັງຫຼາຍເປັນຕົ້ນແມ່ນ ພຣະອາຈານວ່າທີ ປ.ທ ແສງແກ້ວ ມະນີເພັດ ແລະ ທ.ສິງໃຈ ໄຊຍະສຸກ ທີ່ໄດ້ຊ່ວຍກັນອອກແບບໜ້າປົກ ແລະ ຈັດຮູບເຫຼັ້ມໃຫ້. ທີ່ຂາດບໍ່ໄດ້ກໍແມ່ນພໍ່ແມ່ຄູບາອາຈານ ແລະ ເຫຼົ່າພຸດທະບໍລິສັດຄົນໃຈບຸນທັງຫຼາຍທີ່ໄດ້ສະຫຼະປັດໃຈອັນມີຄຸນຄ່າການໃນຈັດພິມໜັງສືເປັນທຳມະທານໃນຄັ້ງນີ້ດ້ວຍ ໆ

*ດ້ວຍຄວາມເຄົາລົບ ແລະ ໄມຕຣີຈິດ ຢ່າງສູງ*

*ອຸຊຸຈາໂຣ ພິກຂຸ*

*ວັນທີ 30 ທັນວາ 2017*

*ທ່ານໃດທີ່ມີຈິດສັດທາ ແລະ ປະສົງຢາກໄດ້ຕົ້ນສະບັບ ເພື່ອນຳໄປພິມເຜີຍແຜ່ເປັນທຳມະທານ ກະລຸນາຕິດຕໍ່ຮັບຕົ້ນສະບັບຟຣີທີ່ ພຣະອຸດົມ ອຸຊຸຈາໂຣ ໂທ: 020 94463951 udomlaointhai@gmail.com ມີຄວາມຍິນດີເປັນຢ່າງຍິ່ງ*



วัดป่าสามัคคีทัม เมือງไຊทานี นะคอนຫຼວງວຽງຈັນ สปป ลาว
วันที19 เดือนกันยา พ.ส 2560

# จดหมายขอะนุยาด

ธຽນ: เจ้าพระคุนสมเด็ดพระพุดทะโคสาจาน (ป.อ. ปะยุดโต)
วัดยานะเวสะกะวัน ต. บางกะทึก อ. สามพาน จ. นะคอนปะถม ธาชะอานาจักไท
เลื่อง: **ขอะนุยาดแปหนังสือ ทำมะนูนชีวิด สะบับสำลับปะชาชน เป็นพาสาลาว**

ข้าน้อย พระอุดม อุชุจาโร เป็นพระสงลาวอะดีดนิสิดนักสึกสาของมะหาจุลาลงกอนธาชะวิทะยาไล วิทะยาเขดชຽງใหม่ ได้เข้าร่วมโคงการอบรมพระทำมะทูดรุ่นใหม่ก้าวไกสู่อาชຽນ ที่สูนวิปัดสะนาสากน ไร่เชินตะเวัน จังหวัดชຽງราย ของพระอาจานใหย่มะหาวุดทิไช วะชิระเมทิ เมื่อ ปี พ.ส 2559 ที่ผ่านมา ซึ่งพระอาจานเพิ่นได้เมดตามอบหนังสือทำมะนูนชีวิด สะบับสำลับปะชาชนหัวนี้ ให้แก่ผู้เข้าอบรมผู้ละหัวพ้อมทังกล่าวว่า: ทุกคนควนนำหนังสือหัวนี้ใส่ถงย่ามไปนำบ่ว่าจะเดินทางไปใสก็ตาม ข้าน้อยเองเมื่อได้อ่านเบิ่งแล้วก็เกิดความปีติยินดีเป็นย่างยิ่ง และ มีความปะสงยากแปเป็นพาสาแม่ของตน เพื่อนำไปเผียแผ่เป็นทำมะทาน คิดว่าคงเป็นปะโหยดทั้งส่วนตน และ พ่อแม่ปะชาชนลาวผู้สนใจทั่วไปบ่หຼายก็หน้อย จึ่งขาบธຽນขอะนุยาดมานะโอกาดนี้ ควนบ่ควนแต่ปะการใด สุดแล้วแต่เจ้าพระคุนสมเด็ดจะกะลุนาเทิ้น.

ธຽນมาด้วยความเคົາລົบย่างสูงยิ่ง

พระอุดม อุชุจาโร

## สาละบาน

**ພາກ ໑ ວິໄນຊາວພຸດ** 1

**ໝວດໜຶ່ງ** *ວາງຖານຊີວິດໃຫ້ໝັ້ນ* 2

**ກົດ໑: ເວັ້ນຊົ່ວ ໑໔ ປະການ** 2

ກ. ເວັ້ນກຳກິເລດ ໔ 2

*ຂ. ເວັ້ນອະຄະຕິ ໔* 2

ຄ .ເວັ້ນອະບາຍຍະມຸກ ໖ 2

**ກົດ ໒: ກຽມທຶນຊີວິດ ໒ ດ້ານ** 3

*ກ. ເລືອກສັນຄົບທີ່ຈະເສວະນາ* 3

*ກ) ຮູ້ທັນມິດທຽມ* 3

*ຂ). ຮູ້ເຖິງມິດແທ້* 4

*ຂ. ຈັດສັນຊັບທີ່ຫາມາໄດ້* 5

**ກົດ ໓: ຮັກສາຄວາມສຳພັນ ໖ ທິດ** 5

*ກ. ສ້າງທຸກທິດໃຫ້ຊື່ນຊົມຍິນດີ* 5

*ທິດທີ ໑ ບິດາມານດາ* 5

*ທິດທີ ໒ ຄູອາຈານ* 6

*ທິດທີ ໓ ພັນລະຍາ* 6

*ທິດທີ ໔ ມິດສະຫາຍ* 6

*ທິດທີ ໕ ຄົນຮັບໃຊ້ ແລະ ຄົນງານ* 7

*ທິດທີ ໖ ພຣະສົງ* 8

*ຂ. ເກື້ອກູນກັນປະສານສັງຄົມ* 8

**ໝວດສອງ** *ນຳຊີວິດໃຫ້ເຖິງຈຸດໝາຍ* 10

**ກ. ຈຸດໝາຍ ໓ ຂັ້ນ** 10

*ຂັ້ນທີ ໑ ຈຸດໝາຍຂັ້ນຕາເຫັນ* 10

*ຂັ້ນທີ ໒ ຈຸດໝາຍເກີນຂັ້ນຕາເຫັນ* 10

*ຂັ້ນທີ ໓ ຈຸດໝາຍສູງສຸດ* 10

**ຂ. ຈຸດໝາຍ ໓ ດ້ານ** 11

*ດ້ານທີ ໑ ຈຸດໝາຍເພື່ອຕົນ* 11

*ດ້ານທີ ໒ ຈຸດໝາຍເພື່ອຄົນອື່ນ* 11

*ດ້ານທີ ໓ ຈຸດໝາຍຮ່ວມກັນ* 11

**ພາກ ໔ ທຳມະນູນຊີວິດ** 14

**ໝວດໜຶ່ງ** *ຄົນກັບສັງຄົມ* 14

໑. ຄົນມີສິນທຳ (ສະມາຊິກໃນໝູ່ອາຣະຍະຊົນ) 14

*ກ. ມີສຸຈະລິດທັງ ໓* 14

*ຂ. ປະພຶດຕາມອາຣະຍະທຳ* 14

*ຄ. ຢ່າງຕ່ຳມີສິນ ໕* 16

໒. ຄົນມີຄຸນແກ່ສ່ວນລວມ (ສະມາຊິກທີ່ດີຂອງສັງຄົມ) 17

*ກ. ມີພົມວິຫານ* 17

*ຂ. ບຳເພັນການສົງເຄາະ* 18

໓. ຄົນຜູ້ເປັນສ່ວນຮ່ວມທີ່ດີຂອງໝູ່ຊົນ(ສະມາຊິກທີ່ດີຂອງຊຸມຊົນ) 20

*ກ. ເພິ່ງຕົນເອງໄດ້* 20

*ຂ. ຢູ່ຮ່ວມໝູ່ດ້ວຍດີ* 21

໔. ຄົນມີສ່ວນຮ່ວມໃນການປົກຄອງທີ່ດີ(ສະມາຊິກທີ່ດີຂອງພັກ-ລັດ) 23

*ກ. ຮູ້ຫຼັກອະທິປະໄຕ* 23

*ຂ. ມີສ່ວນໃນການປົກຄອງ* 24

**ໝວດສອງ** *ຄົນກັບຊີວິດ* 26

໕. ຄົນປະສົບຄວາມສຳເລັດ (ຊີວິດທີ່ກ້າວໜ້າ ແລະ ສຳເລັດ) 26

*ກ. ຫຼັກຄວາມຈະເລີນ* 26

*ຂ. ຫຼັກຄວາມສຳເລັດ* 27

*ຄ. ຫຼັກຜະເດັດໂພທິຍານ* 28

໖. ຄົນຮູ້ຈັກທຳມາຫາລ້ຽງຊີບ (ຊີວິດທີ່ເປັນຫຼັກຖານ) 29

*ກ. ຂັ້ນຫາ ແລະ ຮັກສາຊັບສົມບັດ* 29

*ຂ. ຂັ້ນແຈງຈັດສັນຊັບ* 30

*ຄ. ຂັ້ນຈັບຈ່າຍກິນໃຊ້* 30

໗. ຄົນຄອງເຮືອນທີ່ເລີດລ້ຳ (ຊີວິດປະຊາຊົນທີ່ສົມບູນ) 32

*ກ. ມີຄວາມສຸກສີ່ປະການ* 32

*ຂ. ເປັນປະຊາຊົນແບບສະບັບ* 32

*ຄ. ກຳກັບຊີວິດດ້ວຍທຳ ໔* 34

*ງ. ຮັບຜິດຊອບຊີວິດທີ່ກ່ຽວຂ້ອງ* 34
*ຈ. ຄອງຕົນເປັນພົນລະເມືອງທີ່ດີ* 35
໗. ຄົນບໍ່ຫຼົງໂລກ (ຊີວິດບໍ່ຜິດພາດ) 37
*ກ. ຮູ້ທັນໂລກະທຳ* 37
*ຂ. ບໍ່ເບິ່ງຂ້າມເທວະທູດ* 38
*ຄ. ຄຳນຶງສູດແຫ່ງຊີວິດ* 39
ຨ. **ໝວດສາມ** ຄົນຮ່ວມຊີວິດ (ຄູ່ຄອງທີ່ດີ) 41
*ກ. ຄູ່ສ້າງຄູ່ສົມ* 41
*ຂ. ຄູ່ຊື່ນຊົມຄູ່ລະກຳ* 42
*ຄ. ຄູ່ສີລະທຳຄູ່ຄວາມດີ* 43
*ງ. ຄູ່ຖືກໜ້າທີ່ຕໍ່ກັນ* 43
*ຈ. ພໍ່ເຮືອນເຫັນໃຈພັນລະຍາ* 44
໑໐. ຄົນຮັບຜິດຊອບຕະກຸນ (ຫົວໜ້າຄອບຄົວທີ່ດີ) 45
*ກ. ຮັກສາຕະກຸນໃຫ້ຄົງຢູ່* 45
*ຂ. ບູຊາຄົນທີ່ເໝືອນໄຟ* 45
*ຄ. ໃສ່ໃຈລູກຫຼານ* 45
*ງ. ເຮັດໜ້າທີ່ຜູ້ມາກ່ອນ* 46
*ຈ. ເປັນປະຊາຊົນທີ່ມີຄຸນນະພາບ* 46
໑໑. ຄົນສືບຕະກຸນ (ທາຍາດທີ່ດີ) 48
*ກ. ເປີດປະຕູສູ່ຄວາມຈະເລີນກ້າວໜ້າ* 48
*ຂ. ປິດຊ່ອງທາງທີ່ເຂົ້າມາຂອງທາງເສື່ອມ* 49
*ຄ. ເຊື່ອມສາຍສຳພັນກັບບຸບພະກາຣີ* 50
*ງ. ມີຫຼັກປະກັນຊີວິດທີ່ພັດທະນາ* 50
໑໔. ຄົນທີ່ຈະຄົບຫາ (ມິດແທ້-ມິດທຽມ) 52
*ກ. ມິດທຽມ* 52
*ຂ. ມິດແທ້* 53
*ຄ. ມິດຕໍ່ມິດ* 54
໑໓. ຄົນງານ-ນາຍງານ (ລູກຈ້າງ-ເຈົ້ານາຍ) 55
*ກ. ເຈົ້ານາຍ ເພິ່ງບຳລຸງຄົນຮັບໃຊ້ ແລະ ຄົນງານ* 55
*ຂ. ຄົນຮັບໃຊ້ ແລະ ຄົນງານ* 55
**ໝວດສີ່** *ຄົນກັບພຣະສາສະໜາ* 56
໑໔. ຄົນໃກ້ສາສະໜາ (ອຸບາສົກ ອຸບາສິກາ) 56
*ກ. ເກື້ອກູນພຣະສົງ* 56

*ຂ. ການເຮັດບຸນ* 56
*ຄ. ຄຸ້ມພຣະສາສະໜາ* 57
*ງ. ເປັນອຸບາສົກອຸບາສິກາຊັ້ນນຳ* 58
*ຈ. ໝັ່ນສຳຫຼວດຄວາມກ້າວໜ້າ* 58
໑໕. ຄົນສືບສາສະໜາ (ພຣະສົງ) 59
*ກ. ການອະນຸເຄາະປະຊາຊົນ* 59
*ຂ. ໝັ່ນພິຈາລະນາຕົນເອງ* 59

# ພາກ໑

## ວິໄນຊາວພຸດ



## ວິໄນຊາວພຸດ

*ພຣະສົງມີວິໄນຂອງພຣະພິກຂຸທີ່ຈະຕ້ອງປະພຶດໃຫ້ເປັນຜູ້ມີສິນ ຊາວພຸດທົ່ວໄປກໍ່ມີວິໄນຂອງຄະລືຫັດ ທີ່ຈະຕ້ອງປະຕິບັດໃຫ້ເປັນມາດຖານ.*

# ໝວດໜຶ່ງ
# ວາງຖານຊີວິດໃຫ້ໝັ້ນ

*ຊາວພຸດຈະຕ້ອງດຳເນີນຊີວິດທີ່ດີງາມ ແລະ ຮ່ວມສ້າງສັນສັງຄົມໃຫ້ຈະເລີນໝັ້ນຄົງຕາມຫຼັກ ວິໄນຄະລືຫັດ (ຄິຫິວິໄນ) ດັ່ງນີ້*

ກົດ ໑: ເວັ້ນຊົ່ວ ໑໔ ປະການ

***ກ. ເວັ້ນກຳກິເລດ*** (ບາບກຳທີ່ເຮັດໃຫ້ຊີວິດມົວໝອງ) ໔ ຄື

໑) ບໍ່ທຳຮ້າຍຮ່າງກາຍທຳລາຍຊີວິດ (ເວັ້ນປານາຕິບາດ)
໒) ບໍ່ລັກຊັບລະເມີດກຳມະສິດ (ເວັ້ນອາທິນນາທານ)
໓) ບໍ່ປະພຶດຜິດທາງເພດ (ເວັ້ນກາເມສຸມິດສາຈານ)
໔) ບໍ່ເວົ້າຕົວະຫຼອກລວງ (ເວັ້ນມຸສາວາດ)

***ຂ. ເວັ້ນອະຄະຕິ*** (ຄວາມລຳອຽງ/ປະພຶດຄາດທຳ) ໔ ຄື

໑) ບໍ່ລຳອຽງເພາະຮັກ ( ເວັ້ນສັນທາຄະຕິ)
໒) ບໍ່ລຳອຽງເພາະຊັງ (ເວັ້ນໂທສາຄະຕິ)
໓) ບໍ່ລຳອຽງເພາະໂງ່ (ເວັ້ນພະຍາຄະຕິ)
໔) ບໍ່ລຳອຽງເພາະຫຼົງ (ເວັ້ນໂມຫາຄະຕິ)

***ຄ. ເວັ້ນອະບາຍຍະມຸກ*** (ປາກທາງເສື່ອມຊັບອັບຊີວິດ) ໖ ຄື

໑) ບໍ່ເສບຕິດສຸລາຢາເມົາ
໒) ບໍ່ເອົາແຕ່ທ່ຽວບໍ່ຮູ້ເວລາ
໓) ບໍ່ຈ້ອງຫາແຕ່ລາຍການບັນເທີງ
໔) ບໍ່ເພີດເພີນໄປກັບການພະນັນ

໕) ບໍ່ພົວພັນມົວສຸມມິດຊົ່ວ

໖) ບໍ່ມົວຈົມຢູ່ໃນຄວາມກຽດຄ້ານ

**ກົດ ໒: ກຽມທຶນຊີວິດ ໒ ດ້ານ**

**ກ. ເລືອກສັນຄົນທີ່ຈະເສວະນາ** ຄົບຄົນທີ່ຈະນຳພາເຮົາໄປໃນທາງແຫ່ງຄວາມຈະເລີນ ແລະ ສ້າງສັນ ໂດຍຫຼີກເວັ້ນມິດທຽມ ຄົບຫາມິດແທ້ຄື

**ກ) ຮູ້ທັນມິດທຽມ** ຫຼື **ສັດຕູຜູ້ມາໃນຮ່າງມິດ** (ມິດປະຕິຮູບ) ໔ ປະເພດ

໑. **ຄົນປອກລອກ** ມີແຕ່ຂົນເອົາຂອງເພື່ອນໄປ ມີລັກສະນະ ໔

໑) ຄິດເອົາແຕ່ໄດ້ຝ່າຍດຽວ

໒) ຍອມເສຍໜ້ອຍ ໂດຍຫວັງຈະໄດ້ຫຼາຍ

໓) ຕົວມີໄພ ຈຶ່ງມາຊ່ວຍວຽກຂອງເພື່ອນ

໔) ຄົບເພື່ອນ ເພາະເຫັນແກ່ຜົນປະໂຫຍດ

໒. **ຄົນດີແຕ່ເວົ້າ** ມີລັກສະນະ ໔

໑) ດີແຕ່ຍົກຂອງໝົດແລ້ວມາເວົ້າ

໒) ດີແຕ່ອ້າງຂອງຍັງບໍ່ມີມາເວົ້າ

໓) ສົງເຄາະຊ່ວຍເຫຼືອດ້ວຍສິ່ງທີ່ຫາປະໂຫຍດບໍ່ໄດ້

໔) ເມື່ອເພື່ອນມີວຽກງານ ອ້າງແຕ່ເຫດຂັດຂ້ອງ

໓. **ຄົນຫົວປະຈົບ** ມີລັກສະນະ ໔

໑) ຈະເຮັດຊົ່ວກໍເອີອໍ

໒) ຈະເຮັດດີກໍເອີອໍ

໓) ຕໍ່ໜ້າສັນເສີນຍ້ອງຍໍ

໔) ລັບຫຼັງນິນທາ

໔. **ຄົນຊວນຈິບຫາຍ** ມີລັກສະນະ ໔

໑) ຄອຍເປັນເພື່ອນດື່ມນ້ຳເມົາ

໒) ຄອຍເປັນເພື່ອນທ່ຽວກາງຄືນ

໓) ຄອຍເປັນເພື່ອນທ່ຽວເບິ່ງການຫຼິ້ນ

໔) ຄອຍເປັນເພື່ອນໄປຫຼິ້ນການພະນັນ

**ຂ). ຮູ້ເຖິງມິດແທ້ ຫຼື ມິດດ້ວຍໃຈຈິງ** (ສະຫະທະມິດ) ໔ ປະເພດ

໑. **ມິດອຸປະກາຣະ** ມີລັກສະນະ ໔

໑) ເພື່ອນປະໝາດ ຊ່ວຍຮັກສາເພື່ອນ

໒) ເພື່ອນປະໝາດ ຊ່ວຍຮັກສາຊັບຂອງເພື່ອນ

໓) ເມື່ອມີໄພ ເປັນທີ່ເພິ່ງພາອາໄສໄດ້

໔) ມີກິດຈຳເປັນ ຊ່ວຍອອກຊັບໃຫ້ກວ່າທີ່ອອກປາກ

໒. **ມິດຮ່ວມສຸກຮ່ວມທຸກ** ມີລັກສະນະ ໔

໑) ບອກຄວາມລັບແກ່ເພື່ອນ

໒) ຮັກສາຄວາມລັບຂອງເພື່ອນ

໓) ມີໄພອັນຕະລາຍບໍ່ປະຖິ້ມ

໔) ເຖິງຊີວິດກໍສະຫຼະໃຫ້ໄດ້

໓. **ມິດແນະນຳປະໂຫຍດ** ມີລັກສະນະ ໔

໑) ຈະເຮັດຊົ່ວ ຄອຍຫັກຫ້າມໄວ້

໒) ແນະນຳສະໜັບສະໜູນໃຫ້ຕັ້ງຢູ່ໃນຄວາມດີ

໓) ໃຫ້ໄດ້ຟັງໄດ້ຮູ້ໃນສິ່ງທີ່ບໍ່ເຄີຍໄດ້ຮູ້ໄດ້ຟັງ

໔) ບອກທາງສຸກທາງສະຫວັນໃຫ້

໔. **ມິດໃນໃຈຮັກ** ມີລັກສະນະ ໔

໑) ເພື່ອນມີທຸກ ຄອຍບໍ່ສະບາຍໃຈໄປນຳ (ທຸກ ທຸກນຳ)

໒) ເພື່ອນມີສຸກ ຄອຍຊົມຊື່ນຍິນດີນຳ (ສຸກ ສຸກນຳ)

໓) ເຂົາຕິຕຽນເພື່ອນ ຊ່ວຍຍັບຍັ້ງແກ້ໃຫ້

໔) ເຂົາຍ້ອງຍໍເພື່ອນ ຊ່ວຍເວົ້າສະໜັບສະໜູນ

**ຂ.** ***ຈັດສັນຊັບທີ່ຫາມາໄດ້*** *ດ້ວຍສຳມາຊີບ ດັ່ງນີ້*

ຂັ້ນທີ ໑ ດຸໝັ່ນຂະຫຍັນພຽນການງານເກັບອອມຊັບດັ່ງເຜິ້ງເກັບລວມນ້ຳຫວານຈາກເກສອນດອກໄມ້

ຂັ້ນທີ ໒ ເມື່ອຊັບເກັບກໍ່ຂຶ້ນດັ່ງຈອມປວກ ເພິ່ງວາງແຜນໃຊ້ຈ່າຍໃຫ້ຊັດເຈນຄື

- ໑ ສ່ວນ ລ້ຽງຕົວ, ລ້ຽງຄອບຄົວ ເບິ່ງແຍງຄົນກ່ຽວຂ້ອງ ແລະ ເຮັດຄວາມດີ
- ໔ ສ່ວນ ໃຊ້ເຮັດໜ້າທີ່ການງານປະກອບກິດຈະການອາຊີບ
- ໑ ສ່ວນ ເກັບໄວ້ເປັນຫຼັກປະກັນຊີວິດ ແລະ ກິດຈະການເວລາຈຳເປັນ

**ກົດ ໓: ຮັກສາຄວາມສຳພັນ ໖ ທິດ**

***ກ. ສ້າງທຸກທິດໃຫ້ຊື່ນຊົມຍິນດີ*** ປະຕິບັດຕໍ່ໜ້າທີ່ຕໍ່ບຸກຄົນທີ່ສຳພັນກັບຕົນໃຫ້ຖືກຕ້ອງຕາມຖານະທັງ ໖ ຄື

**ທິດທີ ໑** *ໃນຖານະທີ່ເປັນບຸດທິດາ ເພິ່ງເຄົາລົບ**ບິດາມານດາ** ຜູ້ປຽບ ເໝືອນ ທິດເບື້ອງໜ້າດັ່ງນີ້*

໑. ເພິ່ນລ້ຽງເຮົາມາ ລ້ຽງເພິ່ນຕອບ

໒. ຊ່ວຍເຮັດທຸລະການງານຂອງເພິ່ນ

໓. ດຳລົງວົງຕະກຸນ

໔. ປະພຶດຕົນໃຫ້ເໝາະສົມກັບຄວາມເປັນທາຍາດ

໕. ເມື່ອທ່ານລ່ວງລັບໄປແລ້ວເຮັດບຸນອຸທິດໃຫ້

*ບິດາມານດາອະນຸເຄາະ**ບຸດ** ຕາມຫຼັກປະຕິບັດດັ່ງນີ້*

໑. ຫ້າມປາມປ້ອງກັນຈາກຄວາມຊົ່ວ

໒. ເບິ່ງແຍງເຝິກຝົນອົບຮົມໃຫ້ຕັ້ງຢູ່ໃນຄວາມດີ

໓. ໃຫ້ສຶກສາສິລະປະວິທະຍາ

໔. ເປັນທຸລະເມື່ອເຖິງຄາວຈະມີຄູ່ຄອງທີ່ສົມຄວນ

໕. ມອບຊັບສົມບັດໃຫ້ເມື່ອຮອດໂອກາດ

**ທິດທີ ໒** *ໃນຖານະທີ່ເປັນສິດ ເພິ່ງສະແດງຄວາມເຄົາລົບນັບຖື**ຄູອາຈານ** ຜູ້ປຽບເໝືອນ ທິດເບື້ອງຂວາດັ່ງນີ້*

໑. ຍືນຂຶ້ນຕ້ອນຮັບ ສະແດງຄວາມເຄົາລົບ

໒. ເຂົ້າໄປຫາເພື່ອບຳລຸງ, ຮັບໃຊ້, ປຶກສາ, ຊັກຖາມ, ຮັບຄຳແນະນຳເປັນຕົ້ນ

໓. ຟັງດ້ວຍດີ, ຟັງເປັນ, ຮູ້ຈັກຟັງໃຫ້ເກີດປັນຍາ

໔. ເອົາໃຈໃສ່ ຊ່ວຍບໍລິການ

໕. ຮຽນສິລະປະວິທະຍາ ໂດຍຄວາມເຄົາລົບ ເອົາໃຈໃສ່ເປັນກິດສຳຄັນ

*ອາຈານອະນຸເຄາະ**ສິດ** ຕາມຫຼັກປະຕິບັດດັ່ງນີ້*

໑. ແນະນຳເຝິກອົບຮົມໃຫ້ເປັນຄົນດີ

໒. ສອນໃຫ້ເຂົ້າໃຈຈະແຈ້ງ

໓. ສອນສິລະປະວິທະຍາໃຫ້ໝົດ ບໍ່ຊຸກເຊື່ອງ

໔. ສິ່ງເສີມຍົກຍ້ອງຄວາມດີງາມຄວາມສາມາດໃຫ້ປາກົດ

໕. ສ້າງເຄື່ອງຄຸ້ມໄພໃນທຸກທິດ ຄືສອນເຝິກສິດໃຫ້ໃຊ້ວິຊາລ້ຽງຊີບໄດ້ຈິງ ແລະ ຮູ້ຈັກດຳລົງຕົນ ທີ່ຈະເປັນປະກັນໃຫ້ດຳເນີນຊີວິດດີງາມ ໂດຍຄວາມຜາສຸກຈະເລີນ

**ທິດທີ ໓** *ໃນຖານະທີ່ເປັນສາມີ ເພິ່ງໃຫ້ກຽດບຳລຸງ**ພັນລະຍາ** ຜູ້ປຽບເໝືອນທິດເບື້ອງຫຼັງດັ່ງນີ້*

໑. ຍົກຍ້ອງໃຫ້ກຽດສົມຖານະທີ່ເປັນພັນລະຍາ

໒. ບໍ່ດູໝິ່ນ

໓. ບໍ່ນອກໃຈ

໔. ມອບຄວາມເປັນໃຫຍ່ໃນງານເຮືອນ

໕. ຫາເຄື່ອງແຕ່ງຕົວມາໃຫ້ເປັນຂອງຂວັນຕາມໂອກາດ

*ພັນລະຍາອະນຸເຄາະ**ສາມີ** ຕາມຫຼັກປະຕິບັດດັ່ງນີ້*

໑. ຈັດງານເຮືອນໃຫ້ຮຽບຮ້ອຍ

໒. ສົງເຄາະຍາດທັງສອງຝ່າຍດ້ວຍດີ

໓. ບໍ່ນອກໃຈ

໔. ຮັກສາຊັບທີ່ຫາມາໄດ້

໕. ດຸໝັ່ນ, ຊ່າງເຮັດ, ຊ່າງທຳ, ເອົາການງານທຸກຢ່າງ

ທິດທີ ໔ *ໃນຖານະທີ່ເປັນມິດສະຫາຍ ເພິ່ງປະຕິບັດຕໍ່**ມິດສະຫາຍ** ຜູ້ປຽບເໝືອນ ທິດເບື້ອງຊ້າຍດັ່ງນີ້*

໑. ເພື່ອແຜ່ແບ່ງປັນ

໒. ເວົ້າຈາມີນ້ຳໃຈ

໓. ຊ່ວຍເຫຼືອເກື້ອກູນກັນ

໔. ສະເໝີຕົ້ນສະເໝີປາຍ ຮ່ວມສຸກຮ່ວມທຸກນຳ

໕. ຊື່ສັດຈິງໃຈ

***ມິດສະຫາຍ*** *ອະນຸເຄາະຕອບ ຕາມຫຼັກປະຕິບັດດັ່ງນີ້*

໑. ເມື່ອເພື່ອນປະໝາດ ຊ່ວຍຮັກສາປ້ອງກັນ

໔. ເມື່ອເພື່ອນປະໝາດ ຊ່ວຍຮັກສາຊັບສົມບັດຂອງເພື່ອນ

໓. ເມື່ອຍາມມີໄພ ເປັນທີ່ເພິ່ງໄດ້

໔. ບໍ່ປະຖິ້ມໃນຍາມທຸກຍາກ

໕. ນັບຖືຕະຫຼອດຈົນເຖິງຕະກຸນຂອງເພື່ອນ

**ທິດທີ ໕** *. ໃນຖານະທີ່ເປັນນາຍຈ້າງ ເພິ່ງບຳລຸງ* ***ຄົນຮັບໃຊ້*** *ແລະ* ***ຄົນງານ*** *ປຽບເໝືອນ ທິດເບື້ອງລຸ່ມດັ່ງນີ້*

໑. ແບ່ງວຽກງານໃຫ້ຕາມຄວາມເໝາະສົມກັບກຳລັງ, ເພດ, ໄວ, ຄວາມສາມາດ

໔. ໃຫ້ຄ່າຈ້າງລາງວັນສົມຄວນແກ່ງານ ແລະ ຄວາມເປັນຢູ່

໓. ຈັດສະຫວັດດີການ ຊ່ວຍເຫຼືອຮັກສາພະຍາບານໃນຍາມເກັບໄຂ້ ເປັນຕົ້ນ

໔. ມີອັນພິເສດໄດ້ມາ ກໍແບ່ງປັນໃຫ້

໕. ໃຫ້ມີມື້ພັກເຊົາ ແລະ ພັກຜ່ອນຢ່ອນໃຈຕາມໂອກາດອັນສົມຄວນ

***ຄົນຮັບໃຊ້*** *ແລະ* ***ຄົນງານ*** *ສະແດງນ້ຳໃຈຕໍ່ນາຍຈ້າງດັ່ງນີ້*

໑. ເລີ່ມເຮັດວຽກກ່ອນ

໔. ເລີກງານຕາມຫຼັງ

໓. ເອົາແຕ່ສິ່ງຂອງທີ່ເຈົ້ານາຍໃຫ້

໔. ເຮັດວຽກໃຫ້ຮຽບຮ້ອຍ ແລະດີຍິ່ງຂຶ້ນ

໕. ນຳຄວາມດີຂອງເຈົ້ານາຍ ແລະ ກິດຈະການໄປເຜີຍແຜ່

**ທິດທີ ໖** *ໃນຖານະທີ່ເປັນພຸດທະສາສະນິກະຊົນ ເພິ່ງສະແດງຄວາມເຄົາລົບນັບຖືຕໍ່* ***ພຣະສົງ*** *ຜູ້ປຽບເໝືອນ ທິດເບື້ອງເທິງດັ່ງນີ້*

໑. ຈະເຮັດສິ່ງໃດ ກໍເຮັດດ້ວຍເມດຕາ

໒. ຈະເວົ້າສິ່ງໃດ ກໍເວົ້າດ້ວຍເມດຕາ

໓. ຈະຄິດສິ່ງໃດ ກໍຄິດດ້ວຍເມດຕາ

໔. ຕ້ອນຮັບດ້ວຍຄວາມເຕັມໃຈ

໕. ອຸປະຖຳດ້ວຍປັດໄຈ

*ພຣະສົງອະນຸເຄາະ **ຄະລືຫັດ** ຕາມຫຼັກປະຕິບັດດັ່ງນີ້*

໑. ຫ້າມປາມໃຫ້ເວັ້ນຈາກຄວາມຊົ່ວ

໒. ແນະນຳສັ່ງສອນໃຫ້ຕັ້ງຢູ່ໃນຄວາມດີ

໓. ອະນຸເຄາະດ້ວຍຄວາມປາຖະໜາດີ

໔. ໃຫ້ໄດ້ຟັງໄດ້ຮູ້ສິ່ງທີ່ຍັງບໍ່ເຄີຍຮູ້ບໍ່ເຄີຍຟັງ

໕. ຊີ້ແຈງອະທິບາຍເຮັດສິ່ງທີ່ເຄີຍຟັງແລ້ວໃຫ້ເຂົ້າໃຈຢ່າງຈະແຈ້ງ

໖. ບອກທາງສະຫວັນ ສອນວິທີດຳເນີນຊີວິດໃຫ້ມີຄວາມສຸກຄວາມຈະເລີນ

***ຂ. ເກື້ອກູນກັນປະສານສັງຄົມ*** ຊ່ວຍເຫຼືອເກື້ອກູນກັນ ຮ່ວມສ້າງສັນສັງຄົມໃຫ້ສະຫງົບສຸກໝັ້ນຄົງສາມັກຄີ ມີເອກະພາບ ດ້ວຍ **ສັງຄະຫະວັດຖຸ ໔** ຄື

໑) ທານ ເຜື່ອແຜ່ແບ່ງປັນ (ຊ່ວຍດ້ວຍເງິນຄຳສິ່ງຂອງ)

໒) ປິຍະວາຈາ ເວົ້າຈາຢ່າງມີຄວາມຮັກຕໍ່ກັນ (ຊ່ວຍດ້ວຍຖ້ອຍຄຳ)

໓) ອັດຖະຈະຣິຍາ ເຮັດປະໂຫຍດໃຫ້ແກ່ເຂົາ (ຊ່ວຍດ້ວຍກຳລັງແຮງງານ)

໔) ສະມານັດຕະຕາ ເອົາຕົວເຂົ້າສະໝານ (ຊ່ວຍຮ່ວມສ້າງສັນ ແລະ ແກ້ບັນຫາ, ສະເໝີກັນດ້ວຍທຳ ແລະ ຮ່ວມສຸກຮ່ວມທຸກກັນ)



# ໝວດສອງ
# ນຳຊີວິດໃຫ້ເຖິງຈຸດໝາຍ

**ກ.ຈຸດໝາຍ ໓ ຂັ້ນ** ດຳເນີນຊີວິດໃຫ້ເຖິງຈຸດໝາຍ (ອັດຖະ) ໓ ຂັ້ນ ຄື
ຂັ້ນທີ ໑ *ທິດຖະທຳມິກັດຖະ* **ຈຸດໝາຍຂັ້ນຕາເຫັນ** ຫຼື **ປະໂຫຍດປັດຈຸບັນ**

ກ) *ມີສຸຂະພາບດີ ຮ່າງກາຍແຂງແຮງ ບໍ່ມີພະຍາດ ງາມສະຫງ່າ ອາຍຸຍືນ*

ຂ) *ມີເງິນມີງານ ມີອາຊີບສຸຈະລິດ ເພິ່ງຕົນໄດ້ທາງເສດຖະກິດ*

ຄ) *ມີຖານະດີ ເປັນທີ່ຍອມຮັບໃນສັງຄົມ*

ງ) *ມີຄອບຄົວຜາສຸກ ເຮັດໃຫ້ວົງຕະກຸນເປັນທີ່ນັບຖື*

ທັງ ໔ ນີ້ ເພິ່ງໃຫ້ເກີດມີໂດຍທຳ ແລະໃຊ້ໃຫ້ເປັນປະໂຫຍດທັງແກ່ຕົນ ແລະ ຜູ້ອື່ນ

ຂັ້ນທີ ໔ ສຳປຣາຍິກັດຖະ **ຈຸດໝາຍເກີນຂັ້ນຕາເຫັນ** ຫຼື **ປະໂຫຍດເບື້ອງໜ້າ**

ກ) ມີຄວາມອົບອຸ່ນສຸກໃຈ ບໍ່ອ້າງວ້າງເລື່ອນລອຍ ມີຫຼັກຍຶດໜ່ຽວຈິດໃຈໃຫ້ເຂັ້ມແຂງດ້ວຍ*ສັດທາ*

ຂ) ມີຄວາມພູມໃຈ ໃນຊີວິດສະອາດ ທີ່ໄດ້ປະພຶດແຕ່ການອັນດີງາມດ້ວຍຄວາມ*ສຸຈະລິດ*

ຄ) ມີຄວາມອີ່ມໃຈ ໃນຊີວິດມີຄຸນຄ່າ ທີ່ໄດ້ເຮັດປະໂຫຍດຕະຫຼອດມາດ້ວຍນ້ຳໃຈ*ເສຍສະຫຼະ*

ງ) ມີຄວາມເກັ່ງກ້າໝັ້ນໃຈທີ່ຈະແກ້ໄຂບັນຫານຳຊີວິດ ແລະ ພາລະກິດໄປໄດ້ດ້ວຍ*ປັນຍາ*

ຈ) ມີຄວາມໂລ່ງຈິດໝັ້ນໃຈມີຫຼັກປະກັນພົບໃໝ່ດ້ວຍໄດ້ເຮັດໄວ້ແຕ່*ກຳທີ່ດີ*

ຂັ້ນທີ ໓ *ປະຣະມັດຖະ* **ຈຸດໝາຍສູງສຸດ** ຫຼື **ປະໂຫຍດຢ່າງຍິ່ງ**

ກ) ເຖິງຖືກໂລກະທຳກະທົບ ເຖິງຈະພົບຄວາມຜັນຜວນປ່ວນແປ ກໍບໍ່ຫວັ່ນໄຫວ ມີຈິດໃຈໝັ້ນຄົງ

໒) ບໍ່ຖືກຄວາມຍຶດຕິດຖືໝັ້ນບີບຄັ້ນຈິດໃຫ້ຜິດຫວັງໂສກເສົ້າ, ມີຈິດໂລ່ງໂປ່ງເບົາເປັນອິດສະຫຼະ

໓) ສົດຊື່ນເບີກບານໃຈ ບໍ່ຂຸ່ນມົວເສົ້າໝອງ, ຜ່ອງໃສ, ບໍ່ທຸກ, ມີຄວາມສຸກທີ່ແທ້

໔) ຮູ້ເທົ່າທັນ ແລະ ເຮັດວຽກງານຕາມເຫດປັດໄຈ ຊີວິດປອດໂປ່ງ ສົດໃສເປັນຢູ່ດ້ວຍປັນຍາ

*ຖ້າບັນລຸຈຸດໝາຍຊີວິດເຖິງຂັ້ນທີ ໔ ຂຶ້ນໄປເອີ້ນວ່າເປັນ* ***"ບັນດິດ"***

**໒. ຈຸດໝາຍ ໓ ດ້ານ** ຈຸດໝາຍ ໓ ຂັ້ນນີ້ ເພິ່ງປະຕິບັດໃຫ້ສຳເລັດຄົບ ໓ ດ້ານຄື

**ດ້ານທີ ໑** *ອັດຕັດຖະ* **ຈຸດໝາຍເພື່ອຕົນ** ຫຼື **ປະໂຫຍດຕົນ**ຄື ປະໂຫຍດ ໓ ຂັ້ນຂ້າງເທິງ ເຊິ່ງເພິ່ງເຮັດໃຫ້ເກີດແກ່ຕົນເອງ ຫຼື ພັດທະນາຊີວິດຂອງຕົນຂຶ້ນໄປໃຫ້ໄດ້ໃຫ້ເຖິງ

**ດ້ານທີ ໒** *ປະຣັດຖະ* **ຈຸດໝາຍເພື່ອຄົນອື່ນ** ຫຼື **ປະໂຫຍດຜູ້ອື່ນ**ຄື ປະໂຫຍດ ໓ ຂັ້ນຂ້າງເທິງເພິ່ງຊ່ວຍເຫຼືອຜູ້ອື່ນໃຫ້ໄດ້ໃຫ້ເຖິງ ດ້ວຍການຊັກນຳສະໜັບສະໜູນໃຫ້ເຂົາພັດທະນາຊີວິດຂອງຕົນໄປຕາມລຳດັບ

**ດ້ານທີ ໓** *ອຸພະຍັດຖະ* **ຈຸດໝາຍຮ່ວມກັນ** ຫຼື **ປະໂຫຍດທັງສອງຝ່າຍ**ຄື ປະໂຫຍດສຸກ ແລະ ຄວາມດີງາມຮ່ວມກັນຂອງຊຸມຊົນ ຫຼື ສັງຄົມ ລວມທັງສະພາບແວດລ້ອມ ແລະ ປັດໄຈຕ່າງໆເຊິ່ງເພິ່ງຊ່ວຍກັນສ້າງສັນ, ບຳລຸງຮັກສາ ເພື່ອເກື້ອໜູນໃຫ້ທັງຕົນ ແລະ ຜູ້ອື່ນກ້າວໄປສູ່ຈຸດໝາຍ ໓ ຂັ້ນຂ້າງເທິງ

# ຊາວພຸດຊັ້ນນຳ

ຊາວພຸດທີ່ເອີ້ນວ່າ ອຸບາສົກ ແລະ ອຸບາສິກາ ນັບວ່າເປັນຊາວພຸດຊັ້ນນຳຈະຕ້ອງມີຄວາມເຂັ້ມແຂງທີ່ຈະຕັ້ງໝັ້ນຢູ່ໃນຫຼັກ ໃຫ້ເປັນຕົວຢ່າງແກ່ຊາວພຸດທົ່ວໄປ ນອກຈາກຮັກສາ ວິໄນຊາວພຸດແລ້ວ ຕ້ອງມີ ອຸບາສົກະທຳ ໕ ດັ່ງນີ້

໑. ມີສັດທາ ເຊື່ອປະກອບດ້ວຍປັນຍາ, ບໍ່ງົມງວາຍ, ໝັ້ນຄົງໃນພຣະຣັດຕະໄຕຣ, ບໍ່ຫວັ່ນໄຫວ, ບໍ່ແກວ່ງໄກວ ຖືທຳເປັນໃຫຍ່ ແລະ ສູງສຸດ

໒. ມີສິນ ນອກຈາກຕັ້ງຢູ່ໃນສິນ ໕ ແລະ ສຳມາຊີບແລ້ວ ຄວນຖືສິນອຸໂປສົດຕາມການ ເພື່ອພັດທະນາໃຫ້ຊີວິດ ແລະ ຄວມສຸກເພິ່ງພາວັດຖຸໜ້ອຍລົງ ຫຼຸດຜ່ອນການບຽດບຽນ ແລະ ເກື້ອກູນແກ່ຜູ້ອື່ນຫຼາຍຂຶ້ນ

໓. ບໍ່ຖືມຸງຄຸນຕື່ນຂ່າວ, ເຊື່ອກຳ ມຸ່ງຫວັງຜົນຈາກການກະທຳດ້ານເຫື່ອແຮງ, ຄວາມພຽນພະຍາຍາມຕາມເຫດຜົນບໍ່ຕື່ນຂ່າວເລົ່າລືໂຊກລາງເລື່ອງຂັງມຸງຄຸນ ບໍ່ຫວັງຜົນຈາກການຂໍອຳນາດດົນບັນດານ

໔. ບໍ່ສະແຫວງພາຫິຣະທັກຂິໄນ ບໍ່ໄຂວ່ຄວ້າເຂດບຸນຊຸນຂັງຜູ້ວິເສດສັກສິດນອກຫຼັກພຣະພຸດທະສາສະໜາ

໕. ຂົນຂວາຍໃນການທະນຸບຳລຸງພຣະພຸດທະສາສະໜາ ໃສ່ໃຈເລີ່ມຕົ້ນ ແລະ ສະໜັບສະໜູນກິດຈະກຳການກຸສົນ ຕາມຫຼັກຄຳສອນຂອງອົງສຳມາສຳພຸດທະເຈົ້າ

# ພາກ ໔

## ທຳມະນູນຊີວິດ

# ໝວດໜຶ່ງ
# ຄົນກັບສັງຄົມ

## ໑. ຄົນມີສິນທຳ
## (ສະມາຊິກໃນໝູ່ອາຣະຍະຊົນ)

ຄົນມີສິນທຳ ຫຼື ມີມະນຸດສະທຳ ທີ່ເອີ້ນໄດ້ວ່າເປັນອາຣະຍະຊົນມີທຳ ຄື ຄຸນສົມບັດດັ່ງນີ້

***ກ. ມີສຸຈະລິດທັງສາມ*** ຄື ມີຄວາມປະພຶດດີປະພຶດຊອບ ໓ ປະການ

໑. *ກາຍສຸຈະລິດ* ຄວາມສຸຈະລິດທາງກາຍ, ເຮັດສິ່ງທີ່ດີງາມຖືກຕ້ອງ ປະພຶດຊອບດ້ວຍກາຍ

໒. *ວະຈີສຸຈະລິດ* ຄວາມສຸຈະລິດທາງວາຈາ, ເວົ້າສິ່ງທີ່ດີງາມຖືກຕ້ອງ ປະພຶດຊອບດ້ວຍວາຈາ

໓. *ມະໂນສຸຈະລິດ* ຄວາມສຸຈະລິດທາງໃຈ, ຄິດສິ່ງທີ່ດີງາມຖືກຕ້ອງ ປະພຶດຊອບດ້ວຍໃຈ

*(ທີ.ປາ. ໑໑/໔໔໗/໔໔໗)*

***ຂ. ປະພຶດຕາມອາຣະຍະທຳ*** ໂດຍປະຕິບັດຕາມທາງແຫ່ງກຸສົນລະທຳ ໑໐ ດັ່ງນີ້

• **ທາງກາຍ ໓**

໑. ລະເວັ້ນການຂ້າ, ສັງຫານ, ບັງຄັບບຽດບຽນ: ມີເມດຕາກະລຸນາຊ່ວຍເຫຼືອເກື້ອກູນສົງເຄາະກັນ

໒. ລະເວັ້ນການຍາດຊິງລັກຂະໂມຍ ແລະ ເອົາລັດເອົາປຽບ: ເຄົາລົບສິດທິໃນຊັບສິນຂອງກັນ ແລະ ກັນ

໓. ລະເວັ້ນການປະພຶດຜິດລ່ວງລະເມີດໃນຂອງຮັກຂອງຫວງຂອງຜູ້ອື່ນ: ບໍ່ຂົ່ມເຫງຈິດໃຈ ຫຼືທຳລາຍລົບລູ່ກຽດ ແລະ ວົງຕະກຸນຂອງກັນ

- **ທາງວາຈາ ໔**

໔. ລະເວັ້ນການເວົ້າຕົວະ, ຫຼອກລວງ: ກ່າວແຕ່ຄຳສັດຊື່, ບໍ່ຕັ້ງໃຈເວົ້າໃຫ້ຜິດຈາກຄວາມຈິງເພາະເຫັນແກ່ຜົນປະໂຫຍດໃດໆ

໕. ລະເວັ້ນການເວົ້າສໍ່ສຽດ, ຍຸຍົງ ສ້າງຄວາມແຕກແຍກ: ເວົ້າແຕ່ຄຳສະໝານ ແລະ ສົ່ງເສີມສາມັກຄີ

໖. ລະເວັ້ນການເວົ້າຄຳຫຍາບຄາຍ, ສົກກະປົກເສຍຫາຍ: ເວົ້າແຕ່ຄຳສຸພາບອ່ອນຫວານຊວນຟັງ

໗. ລະເວັ້ນການເວົ້າໂລເລບໍ່ມີແກ່ນສານ: ເວົ້າແຕ່ຄວາມຈິງມີເຫດຜົນ, ມີສາລະນະປະໂຫຍດຖືກກາລະເທສະ

- **ທາງໃຈ ໓**

໘. ບໍ່ໂລບມາກ, ບໍ່ເພ່ງເລັງຄິດຫາທາງແຕ່ຈະໄດ້: ຄິດໃຫ້, ຄິດເສຍສະຫຼະ ສ້າງຈິດໃຈໃຫ້ເພື່ອແຜ່ກວ້າງຂວາງ

໙. ບໍ່ຄິດຮ້າຍບຽດບຽນ ຫຼື ແລເບິ່ງແຕ່ໃນແງ່ທີ່ຈະທຳລາຍ: ຕັ້ງຄວາມປາຖະໜາດີ, ແຜ່ໄມຕຣີ, ມຸ່ງໃຫ້ເກີດປະໂຫຍດສຸກແກ່ກັນ

໑໐. ມີຄວາມເຫັນຖືກຕ້ອງ ເປັນສຳມາທິດຖິ ເຂົ້າໃຈໃນຫຼັກທຳວ່າທຳດີມີຜົນດີ ທຳຊົ່ວມີຜົນຊົ່ວ: ຮູ້ເທົ່າທັນຄວາມຈິງທີ່ເປັນທຳມະດາຂອງໂລກ ແລະ ຊີວິດ ເບິ່ງເຫັນຄວາມເປັນໄປຕາມເຫດປັດໃຈ

*ທຳ ໑໐ ຂໍ້ນີ້ ເອີ້ນວ່າ **ກຸສະລະກຳມະບົດ** (ທາງເຮັດດີ) ໑ ທຳຈະຣິຍາ ໑ ອາຣະຍະທຳ ໑ ເປັນລາຍລະອຽດຂະຫຍາຍຄວາມສຸຈະລິດ ໓ ຄື ຂໍ້ ໑-໓ ເປັນກາຍສຸຈະລິດ ຂໍ້ ໔-໗ ເປັນວາຈາສຸຈະລິດ ຂໍ້ ໘-໑໐ ເປັນມະໂນສຸຈະລິດ*

*(ມ.ມູ.໑໔/໔໘໕)*

*ຄ. **ຢ່າງຕ່ຳມີສິນ ໕** ຫຼັກຄວາມປະພຶດ ໑໐ ຂໍ້ຕົ້ນນັ້ນ ເປັນທຳມະຈະຣິຍາ ແລະ ອາຣະຍະທຳທີ່ຄົບຖ້ວນສົມບູນ ເຮັດໃຫ້ຈະເລີນຂຶ້ນພ້ອມທັງທາງກາຍ ທາງວາຈາ ແລະ ທາງໃຈ*

*ແຕ່ຜູ້ໃດຍັງບໍ່ໝັ້ນຄົງໃນອາຣະຍະທຳ ຜູ້ນັ້ນເພິ່ງຄວບຄຸມຕົນໃຫ້ໄດ້ໃນທາງກາຍ ແລະ ວາຈາກ່ອນເປັນຢ່າງນ້ອຍ ດ້ວຍປະພຶດຕາມຫຼັກ ສິນ ໕ ທີ່ເປັນສ່ວນເບື້ອງຕົ້ນຂອງທຳມະຈະຣິຍາ ໑໐ ປະການນັ້ນ ກໍຍັງຈະໄດ້ຊື່ວ່າເປັນຄົນດີມີສິນທຳຄື*

***໑. ເວັ້ນຈາກປານາຕິບາດ*** ລະເວັ້ນການຂ້າ ການສັງຫານ ບໍ່ທຳລາຍຊີວິດ ແລະ ຮ່າງກາຍຂອງຜູ້ອື່ນ

***໒. ເວັ້ນຈາກອະທິນນາທານ*** ລະເວັ້ນການລັກຂະໂມຍບັງບຽດຍາດຊີງ ບໍ່ທຳລາຍຕໍ່ຊັບສິນຂອງຜູ້ອື່ນ

***໓. ເວັ້ນຈາກກາເມສຸມິດສາຈານ*** ລະເວັ້ນການປະພຶດຜິດໃນກາມ ບໍ່ປະພຶດຜິດໃນທາງເພດ ບໍ່ທຳລາຍຕໍ່ຂອງຮັກຂອງຫວງຕໍ່ຜູ້ອື່ນ ອັນເປັນການທຳລາຍກຽດຕິພູມ ແລະ ຈິດໃຈ ຕະຫຼອດເຖິງເຮັດວົງຕະກຸນຂອງເຂົາໃຫ້ສັບສົນ

***໔. ເວັ້ນຈາກມຸສາວາທະ*** ເວັ້ນຈາກການເວົ້າຕົວະຫຼອກລວງ ບໍ່ທຳລາຍເຂົາ ຫຼື ປະໂຫຍດສຸກຂອງເຂົາດ້ວຍວາຈາ

***໕. ເວັ້ນຈາກສຸຣາເມໄຣ*** ບໍ່ເສບເຄື່ອງດອງຂອງມຶນເມົາສິ່ງເສບຕິດອັນເປັນເຫດໃຫ້ເກີດຄວາມປະໝາດມົວເມົາ ກໍ່ຄວາມເສຍຫາຍຜິດພາດເພາະຂາດສະຕິເຊັ່ນ ເຮັດໃຫ້ເກີດອຸບັດຕິເຫດ ຢ່າງນ້ອຍກໍເປັນຜູ້ຄຸກຄາມຕໍ່ຄວາມໝັ້ນຄົງປອດໄພຂອງຜູ້ຮ່ວມສັງຄົມ

*(ອົງ.ປັນຈະກະ. ໒໒/໑໗໒/໒໒໗)*

## ໔. ຄົນມີຄຸນແກ່ສ່ວນລວມ
(ສະມາຊິກທີ່ດີຂອງສັງຄົມ)

ສະມາຊິກຜູ້ຊ່ວຍສ້າງສັນສັງຄົມມີທຳຄື ຄວາມປະພຶດດັ່ງນີ້

***ກ. ມີພົມວິຫານ*** ຄື ທຳປະຈຳໃຈຂອງຜູ້ປະເສີດ ຫຼື ຜູ້ມີຈິດໃຈອັນຍິ່ງໃຫຍ່ກວ້າງຂວາງດັ່ງພົມ ໔ ຢ່າງດັ່ງນີ້

**໑. ເມດຕາ ຄວາມຮັກ** ຄື: ຄວາມປາຖະໜາດີ, ມີໄມຕຣີ ຕ້ອງຊ່ວຍເຫຼືອໃຫ້ທຸກຄົນໄດ້ຮັບປະໂຫຍດ ແລະ ຄວາມສຸກ

໔. ກະລຸນາ ຄວາມສົງສານຄື: ຢາກຊ່ວຍເຫຼືອໃຫ້ຜູ້ອື່ນພົ້ນຈາກຄວາມທຸກຕັ້ງໃຈທີ່ຈະບຳບັດຄວາມທຸກຍາກເດືອດຮ້ອນຂອງຄົນ ແລະ ສັດທັງຫຼາຍ

**໓. ມຸທິຕາ ຄວາມເບີກບານຍິນດີ** ເມື່ອເຫັນຜູ້ອື່ນມີຄວາມສຸກກໍມີໃຈຊຸ່ມຊື່ນເບີກບານ ເມື່ອເຫັນເຂົາເຈົ້າເຮັດຄວາມດີງາມປະສົບຄວາມສຳເລັດກ້າວໜ້າຍິ່ງໆຂຶ້ນໄປ ກໍໃຫ້ມີຄວາມເບີກບານຍິນດີໃຈນຳ ພ້ອມທີ່ຈະຊ່ວຍເຫຼືອສົ່ງເສີມສະໜັບສະໜູນ

**໔. ອຸເບກຂາ ຄວາມມີໃຈເປັນກາງ** ຄື ວາງໃຈໃຫ້ສະໝ່ຳສະເໝີໝັ້ນຄົງຊື່ກົງຄືກັບຕາຊັ່ງ ບໍ່ເອນອຽງ ບໍ່ຝັກໄຝ່ ໂດຍເບິ່ງຕາມຄວາມເປັນຈິງວ່າບຸກຄົນຈະໄດ້ຮັບຜົນດີ ຫຼື ຊົ່ວ ຕາມສົມຄວນແຕ່ເຫດທີ່ຕົນປະກອບ ແລະ ພ້ອມທີ່ຈະວິນິດໄສວາງຕົນ ແລະ ປະຕິບັດໄປຕາມຫຼັກການເຫດຜົນ ແລະ ຄວາມທ່ຽງທຳ.

*(ທີ.ມ ໑໐/໑໙໔/໔໔໕)*

---

*ກໍລະນີທີ່ສຳຄັນອີກຢ່າງໜຶ່ງທີ່ໃຊ້ອຸເບກຂາ ຄື ເມື່ອເຫັນຄົນທີ່ຕົນເບິ່ງແຍງເປັນຢ່າງດີ ຕ່າງຂົນຂວາຍໃນກິດໜ້າທີ່ຂອງຕົນ ກໍຮູ້ຈັກວາງເສີຍແນມເບິ່ງໂດຍສະຫງົບ ບໍ່ຈູ້ຈີ້ຈຸກຈິກ, ບໍ່ກ້າວກ່າຍແຊກແຊງ ທ່ານອຸປະມາຂໍ້ໜຶ່ງວ່າ ອຸເບກຂານັ້ນເໝືອນດັ່ງສາຣະຖີ ເມື່ອມ້າແລ່ນທາງເປັນລະບຽບສະໜິດດີ ກໍນັ່ງຄຸມສະຫງົບນິ່ງແນມເບິ່ງເສີຍຢູ່

ໂດຍໄນນີ້ ອຸເບກຂາມີຄວາມໝາຍຢ່າງເຕັມວ່າ ໃຫ້ຮູ້ວາງທ່າທີເສີຍເບິ່ງ ເມື່ອເຫັນເຂົາຮັບຜິດຊອບຕົນເອງໄດ້ ຫຼື ໃນເມື່ອເຂົາຄວນຕ້ອງໄດ້ຮັບຜົນສົມຄວນແກ່ຄວາມຮັບຜິດຊອບຂອງຕົນ ໂດຍພ້ອມທີ່ຈະປະຕິບັດໄປຕາມທຳ

*ເບິ່ງວິສຸດທິ. ໓/໔໑: ວິສຸດທິ. ດີກາ ໔/໑໓ຜ: ໓/໑໑໔*

ເມື່ອມີຄຸນນະທຳເປັນພື້ນຖານຈິດໃຈເຊັ່ນນີ້ ແລ້ວເພິ່ງສະແດງອອກພາຍນອກຕາມຫຼັກຄວາມປະພຶດຕໍ່ໄປນີ້

***ຂ. ບຳເພັນການສົງເຄາະ ຄື*** ປະຕິບັດຕາມຫຼັກການສົງເຄາະ ຫຼື ທຳເຄື່ອງຍຶດໝ່ຽວໃຈຄົນ ແລະ ປະສານໝູ່ຊົນໄວ້ໃນສາມັກຄີທີ່ເອີ້ນວ່າ **ສັງຄະຫະວັດຖຸ ໔** ດັ່ງຕໍ່ໄປນີ້

*໑. ທານ* ***ໃຫ້ປັນ*** ຄື ເອື້ອເຟື້ອເພື່ອແຜ່, ເສຍສະຫຼະ, ແບ່ງປັນ, ຊ່ວຍເຫຼືອສົງເຄາະ ດ້ວຍປັດໄຈ ໔ ທຶນ ຫຼື ຊັບສິນສິ່ງຂອງ ຕະຫຼອດຈົນໃຫ້ຄວາມຮູ້ຄວາມເຂົ້າໃຈ ແລະ ສິລະປະວິທະຍາ

*໒. ປິຍະວາຈາ* ***ເວົ້າແບບຮັກແພງກັນ*** ຄື ກ່າວຄຳສຸພາບ, ມ່ວນ, ໜ້າຟັງ ຊີ້ແຈງແນະນຳສິ່ງທີ່ເປັນປະໂຫຍດ, ມີເຫດຜົນເປັນຫຼັກຖານ ຊັກຈູງໃນທາງທີ່ດີງາມ ຫຼື ຄຳສະແດງຄວາມເຫັນອົກເຫັນໃຈ, ໃຫ້ກຳລັງໃຈ ຮູ້ຈັກເວົ້າໃຫ້ເກີດຄວາມເຂົ້າໃຈດີ ສະໝານສາມັກຄີ ເກີດໄມຕຣີ ເຮັດໃຫ້ຮັກແພງ ແລະ ຊ່ວຍເຫຼືອເກື້ອກູນກັນ

*໓. ອັດຖະຈະຣິຍາ* ***ເຮັດປະໂຫຍດໃຫ້ແກ່ເຂົາ*** ຄື ຊ່ວຍເຫຼືອດ້ວຍແຮງກາຍ ແລະ ຂວນຂວາຍຊ່ວຍເຫຼືອກິດຕ່າງໆ ບຳເພັນສາທາລະນະປະໂຫຍດ ລວມທັງຊ່ວຍເຫຼືອແກ້ໄຂບັນຫາ ແລະ ຊ່ວຍປັບປຸງສິ່ງເສີມໃນທາງຈະຣິຍະທຳ

*໔. ສະມານັດຕະຕາ* ***ເອົາຕົວເຂົ້າສະໝານ*** ຄື ເຮັດຕົວໃຫ້ເຂົ້າກັບເຂົາໄດ້ ວາງຕົນສະເໝີຕົ້ນສະເໝີປາຍ ໃຫ້ຄວາມສະເໝີພາບ ປະຕິບັດສະໝ່ຳສະເໝີກັນຕໍ່ຄົນທັງຫຼາຍ ບໍ່ເອົາປຽບ ແລະ ສະເໝີໃນສຸກທຸກ ຄື ຮ່ວມສຸກຮ່ວມທຸກ ຮ່ວມຮັບຮູ້ ຮ່ວມແກ້ໄຂບັນຫາ ເພື່ອໃຫ້ເກີດປະໂຫຍດສຸກຮ່ວມກັນ

ເວົ້າຫຍໍ້ໆວ່າ: ຊ່ວຍດ້ວຍທຶນດ້ວຍເຄື່ອງຂອງ ຫຼື ຄວາມຮູ້: ຊ່ວຍດ້ວຍຖ້ອຍຄຳ: ຊ່ວຍດ້ວຍກຳລັງແຮງງານ: ຊ່ວຍດ້ວຍການຮ່ວມແກ້ໄຂບັນຫາ

*(ທີ.ປາ. ໑໑/໑໔໐/໑ຜົກ)*



## ໓. ຄົນຜູ້ເປັນສ່ວນຮ່ວມທີ່ດີຂອງໝູ່ຊົນ
(ສະມາຊິກທີ່ດີຂອງຊຸມຊົນ)

ຄົນຜູ້ມີສ່ວນຮ່ວມທີ່ດີຂອງໝູ່ຊົນ ຈິງໃຈຊ່ວຍໃຫ້ໝູ່ຊົນຢູ່ຮ່ວມກັນດ້ວຍດີມີທຳ ຄື ຫຼັກການປະພຶດດັ່ງນີ້

***ກ. ເພິ່ງຕົນເອງໄດ້*** ຄື ເຮັດໃຫ້ຕົນເປັນທີ່ເພິ່ງຕົນໄດ້ ພ້ອມທີ່ຈະຮັບຜິດຊອບຕົນເອງບໍ່ເຮັດໃຫ້ຕົນເປັນບັນຫາ ຫຼື ເປັນພາລະຖ່ວງໝູ່ຄະນະ ຫຼື ພີ່ນ້ອງດ້ວຍການປະພຶດສຳລັບສ້າງທີ່ເພິ່ງແກ່ຕົນ (ເອີ້ນວ່າ **ນາຖະກະຣະນະທຳ**) ໑໐ ປະການ ຄື

*໑. ສີນ* ***ປະພຶດດີມີວິໄນ*** ຄື ດຳເນີນຊີວິດໂດຍສຸຈະລິດ ທັງທາງກາຍທາງວາຈາ ມີວິໄນ ແລະ ປະກອບສຳມາຊີບ

*໒. ພາຫຸສັດຈະ* ***ໄດ້ສຶກສາຮັບຟັງຫຼາຍ*** ຄື ສຶກສາຮ່ຳຮຽນສະດັບຟັງຫຼາຍ ອັນໃດເປັນສາຍວິຊາຕົນ ຫຼື ຕົນສຶກສາສິລະປະວິທະຍາໃດ ກໍສຶກສາໃຫ້ຊຳນານ ມີຄວາມເຂົ້າໃຈກວ້າງຂວາງເລິກເຊິ່ງ ຮູ້ຊັດເຈນ ແລະ ໃຊ້ໄດ້ແທ້

*໓. ກັນລະຍານະມິດຕາ* ***ຮູ້ຈັກຄົບຫາຄົນດີ*** ຄື ມີກັນລະຍານະມິດຮູ້ຈັກເລືອກສົນທະນາເຂົ້າທີ່ປຶກສາ ຫຼື ຜູ້ແນະນຳສັ່ງສອນທີ່ດີ ເລືອກສຳພັນທີ່ກ່ຽວຂ້ອງ ແລະ ຖືຕົວຢ່າງສິ່ງແວດລ້ອມທີ່ດີທາງສັງຄົມທີ່ດີ ເຊິ່ງຈະເຮັດໃຫ້ຊີວິດຈະເລີນງອກງາມ

*໔. ໂສວະຈັດສະວາ* ***ເປັນຄົນທີ່ເວົ້າກັນງ່າຍ*** ຄື ບໍ່ດື້ດ້ານແຂງກະດ້າງຮູ້ຈັກຮັບຟັງເຫດຜົນ ແລະ ຂໍ້ເທັດຈິງ ພ້ອມທີ່ຈະແກ້ໄຂປັບປຸງຕົນ

*໕. ກິງກະຣະນີເຍສຸ ທັກຂະຕາ* ***ຂົນຂວາຍກິດຂອງໝູ່ຄະນະ*** ຄື ເອົາໃຈໃສ່ຊ່ວຍເຫຼືອວຽກງານ ແລະ ກິດຈະການຂອງຊົນຮ່ວມໝູ່ຄະນະຍາດພີ່ນ້ອງ ໝູ່ເພື່ອນ ແລະ ຊຸມຊົນ ຮູ້ຈັກໃຊ້ປັນຍາພິຈາລະນາຫາວິທີການທີ່ເໝາະ, ເຮັດໄດ້, ຈັດໄດ້, ໃຫ້ສຳເລັດຮຽບຮ້ອຍດ້ວຍດີ

*໖. ທຳການະຕາ **ເປັນຜູ້ໄຝ່ທຳ*** ຄືຮັກທຳ ມັກສຶກສາ ຄົ້ນຄວ້າ ສອບຖາມຫາຄວາມຮູ້ຫາຄວາມຈິງ ຮູ້ຈັກເວົ້າ ຮູ້ຈັກຮັບຟັງ ສ້າງຄວາມຮູ້ສຶກສະໜິດສະໜົມສະບາຍໃຈ ຊວນໃຫ້ຜູ້ອື່ນຢາກເຂົ້າມາປຶກສາ ແລະ ສົນທະນາ

*໗. ວິຣິຍາຣຳພະ* **ມີຄວາມຂະໜຍັນພຽນ** ຄື ດຸໝັ່ນຂະຫຍັນພຽນ ພາຍາຍາມຫຼີກລະຄວາມຊົ່ວ ປະກອບຄວາມດີ ບາກບັ່ນ ກ້າວໜ້າບໍ່ທໍ້ຖອຍ ບໍ່ລະເລີຍປະຖິ້ມທຸລະໜ້າທີ່

*໘. ສັນຕຸດຖີ **ມີຄວາມສັນໂດດຮູ້ພໍດີ*** ຄື ຍິນດີເພິ່ງພໍໃຈໃຫ້ລາບຜົນຜົນງານ ແລະ ຜົນສຳເລັດຕ່າງໆ ທີ່ຕົນສ້າງ ຫຼື ສະແຫວງມາໄດ້ດ້ວຍເຫື່ອແຮງຄວາມພຽນພາຍາຍາມຂອງຕົນທາງຊອບທຳ ແລະ ບໍ່ມົວເມົາເຫັນແກ່ຄວາມສຸກທາງວັດຖຸ

*໙. ສະຕິ **ມີສະຕິໝັ້ນຄົງ*** ຄື ຮູ້ຈັກກຳນົດຈົດຈຳ ລະລຶກການທີ່ເຮັດຄຳທີ່ເວົ້າກິດທີ່ເຮັດແລ້ວ ແລະ ທີ່ຈະຕ້ອງເຮັດຕໍ່ໄປໄດ້ ຈະເຮັດຫຍັງກໍຮອບຄອບ ຮູ້ຈັກຍັບຍັ້ງຊັ່ງໃຈ ບໍ່ຮີບຮ້ອນເກີນໄປ ບໍ່ເລີ່ນເລີ້ ບໍ່ລ່ອງລອຍ  ບໍ່ປະໝາດ ບໍ່ຍອມລ່ວງລ້ຳໃນທາງທີ່ຜິດພາດ ບໍ່ປ່ອຍປະລະເລີຍໂອກາດສຳລັບຄວາມດີ

*໑໐. ປັນຍາ **ມີປັນຍາເຫຼືອອາລົມ*** ຄື ມີປັນຍາທີ່ຢັ່ງຮູ້ເຫດຜົນ ຮູ້ດີຮູ້ຊົ່ວ ຄຸນໂທດ ປະໂຫຍດ ບໍ່ເປັນປະໂຫຍດ ເບິ່ງສິ່ງທັງຫຼາຍຕາມຄວາມເປັນຈິງ ຮູ້ພິຈາລະນາວິນິດໄສດ້ວຍໃຈເປັນອິດສະຫຼະ ເຮັດວຽກງານຕ່າງໆ ດ້ວຍຄວາມຄິດ ແລະ ວິຈະລະນະຍານ

*(ທີ.ປາ. ໑໑/ນິສກ/໔໗໑)*

***໒. ຢູ່ຮ່ວມໝູ່ດ້ວຍດີ** ໃນດ້ານຄວາມສຳພັນກັບຜູ້ອື່ນທີ່ເປັນຜູ້ຮ່ວມງານຮ່ວມກິດຈະການ ຫຼື ຮ່ວມຊຸມຊົນ ຕະຫຼອດເຖິງພີ່ນ້ອງໃນຄອບຄົວ ເພິ່ງປະຕິບັດຕາມຫຼັກຢູ່ຮ່ວມກັນ ທີ່ເອີ້ນວ່າ:* **ສາຣະນີຍະທຳ** *(ທຳເປັນເຫດໃຫ້ລະນຶກເຖິງກັນ) ໖ ປະການຄື*

*໑. ເມດຕາກາຍະກຳ* **ເຮັດຕໍ່ກັນດ້ວຍເມດຕາ** ຄື ສະແດງໄມຕຣີ ແລະ ຄວາມຫວັງດີຕໍ່ເພື່ອນຮ່ວມງານ ຮ່ວມກິດຈະການ ຮ່ວມຊຸມຊົນ ດ້ວຍ

ການຊ່ວຍເຫຼືອວຽກງານຕ່າງໆໂດຍເຕັມໃຈ ສະແດງກິຣິຍາອາການສຸພາບ ເຄົາລົບນັບຖືທັງຕໍ່ໜ້າ ແລະ ລັບຫຼັງ

*໒. ເມດຕາວະຈີກຳ* **ເວົ້າຕໍ່ກັນດ້ວຍເມດຕາ** ຄື ຊ່ວຍບອກແຈ້ງສິ່ງທີ່ເປັນປະໂຫຍດ ສັ່ງສອນ ຫຼື ແນະນຳຕັກເຕືອນດ້ວຍຄວາມຫວັງດີ ກ່າວວາຈາສຸພາບສະແດງຄວາມເຄົາລົບນັບຖືທັງຕໍ່ໜ້າ ແລະ ລັບຫຼັງ

*໓. ເມດຕາມະໂນກຳ* **ຄິດຕໍ່ກັນດ້ວຍເມດຕາ** ຄື ຕັ້ງຈິດປາຖະໜາດີ ຄິດເຮັດສິ່ງທີ່ເປັນປະໂຫຍດແກ່ກັນ ເບິ່ງກັນໃນແງ່ດີ ມີໜ້າຕາຍິ້ມແຍ້ມແຈ່ມໃສຕໍ່ກັນ

*໔. ສາທາຣະນະໂພຄີ* **ໄດ້ມາແບ່ງກັນກິນໃຊ້** ຄື ແບ່ງປັນລາບຜົນທີ່ໄດ້ມາໂດຍຊອບທຳ ເຖິງເປັນຂອງເລັກນ້ອຍກໍແຈກຈ່າຍໃຫ້ມີສ່ວນຮ່ວມໃຊ້ສອຍບໍລິໂພກທົ່ວກັນ

*໕. ສີລະສາມັນຍະຕາ* **ປະພຶດໃຫ້ດີເໝືອນເຂົາ** ຄື ມີຄວາມປະພຶດສຸຈະລິດດີງາມ ຮັກສາລະບຽບວິໄນຂອງສ່ວນລວມບໍ່ເຮັດໃຫ້ຕົນເປັນທີ່ໜ້າກຽດຊັງ ຫຼື ເສື່ອມເສຍຕໍ່ໝູ່ຄະນະ

*໖. ທິດຖິສາມັນຍະຕາ* **ປັບຄວາມເຫັນໃຫ້ເຂົ້າກັນໄດ້** ຄື ເຄົາລົບຮັບຟັງຄວາມຄິດເຫັນກັນ ມີຄວາມເຫັນຊອບຮ່ວມກັນ ຕົກລົງກັນໄດ້ໃນຫຼັກການສຳຄັນ ຍຶດຖືອຸດົມຄະຕິ ຫຼັກແຫ່ງຄວາມດີງາມ ຫຼື ຈຸດໝາຍສູງສຸດອັນດຽວກັນ *(ທີ.ປາ. ໑໑/໓໑໗/໔໕໗)*

## ໔. ຄົນມີສ່ວນຮ່ວມໃນການປົກຄອງທີ່ດີ
## ( ສະມາຊິກທີ່ດີຂອງພັກ-ລັດ )

ສະມາຊິກຂອງພັກຜູ້ມີສ່ວນຮ່ວມໃຫ້ເກີດການປົກຄອງທີ່ດີ ໂດຍສະເພາະໃນສັງຄົມປະຊາທິປະໄຕ ເພິ່ງຮູ້ຫຼັກ ແລະ ປະຕິບັດດັ່ງນີ້

***ກ. ຮູ້ຫຼັກອະທິປະໄຕ*** ຄື ຮູ້ຫຼັກຄວາມເປັນໃຫຍ່ທີ່ *ເອີ້ນວ່າ* **ອະທິປະໄຕ ໓** *ປະການດັ່ງນີ້*

*໑. ອັດຕາທິປະໄຕ* **ຖືຕົນເປັນໃຫຍ່** ຄື ຖືເອົາຕົນເອງ ຖານະ ສັກສີ ກຽດຕິພູມ ຂອງຕົນເປັນໃຫຍ່ ກະທຳການດ້ວຍປາຣົບຕົນ ແລະ ສິ່ງທີ່ເນື່ອງດ້ວຍຕົນເປັນປະມານໃນຝ່າຍກຸສົນໄດ້ແກ່ ເວັ້ນຊົ່ວ ທຳດີ ດ້ວຍຄວາມເຄົາລົບ

*໔. ໂລກາທິປະໄຕ* **ຖືໂລກເປັນໃຫຍ່** ຄື ຖືຄວາມນິຍົມຂອງຊາວໂລກເປັນໃຫຍ່ ຫວັ່ນໄຫວໄປຕາມສຽງນິນທາ ແລະ ສັນເສີນ ກະທຳດ້ວຍຄວາມປາຣົບດ້ວຍຈະເອົາໃຈໝູ່ຊົນ ຫາຄວາມນິຍົມ ຫຼື ຫວັ່ນກົວສຽງກ່າວຫາເປັນປະມານ ໃນຝ່າຍກຸສົນໄດ້ແກ່ການເວັ້ນຊົ່ວ ເຮັດດີ ດ້ວຍເຄົາລົບສຽງໝູ່ຊົນ

*໓. ທຳມາທິປະໄຕ* **ຖືທຳເປັນໃຫຍ່** ຄື ຖືຫຼັກການ ຄວາມຈິງ ຄວາມຖືກຕ້ອງ ຄວາມດີງາມເຫດຜົນເປັນໃຫຍ່ ກະທຳດ້ວຍປາຣົບສິ່ງທີ່ໄດ້ສຶກສາກວດສອບຕາມຂໍ້ເທັດຈິງ ແລະ ຄວາມຄິດເຫັນທີ່ຮັບຟັງຢ່າງກວ້າງຂວາງແຈ້ງຊັດ ແລະ ພິຈາລະນາຢ່າງດີທີ່ສຸດ ເຕັມຂີດແຫ່ງສະຕິປັນຍາຈະເບິ່ງເຫັນດ້ວຍຄວາມບໍລິສຸດໃຈວ່າ ເປັນໄປດ້ວຍຊອບທຳ ແລະ ເພື່ອຄວາມດີງາມເປັນປະມານຢ່າງສາມັນໄດ້ແກ່ ທຳການດ້ວຍຄວາມເຄົາລົບຫຼັກການ ກົດລະບຽບ ກະຕິກາ

*ເມື່ອຮູ້ຢ່າງນີ້ແລ້ວ ຖ້າຕ້ອງການຮັບຜິດຊອບຕໍ່ລັດປະຊາທິປະໄຕ ຍຶດຖືຫຼັກຂໍ້ ໓ ຄື ທຳມາທິປະໄຕ*

*(ທີ.ປາ. ໑໑/໔໔໗/໔໙໑)*

***໒. ມີສ່ວນໃນການປົກຄອງ*** *ໂດຍປະຕິບັດຕາມຫຼັກການຮ່ວມຮັບຜິດຊອບທີ່ຈະຊ່ວຍປ້ອງກັນຄວາມເສື່ອມ ນຳໄປສູ່ຄວາມຈະເລີນຮຸ່ງເຮືອງໂດຍສ່ວນດຽວ ທີ່ເອີ້ນວ່າ* **ອະປະຣິຫານິຍະທຳ ໗** *ປະການ ຄື*

໑. ໝັ່ນປະຊຸມກັນເນື່ອງນິດ ພົບປະປຶກສາຫາລືກິດຈະການງານ (ທີ່ເພິ່ງຮັບຜິດຊອບຕາມລຳດັບຂອງຕົນ) ໂດຍສະໝ່ຳສະເໝີ

໒. ພ້ອມພຽງກັນປະຊຸມ ພ້ອມພຽງກັນເລີກປະຊຸມ ພ້ອມພຽງກັນເຮັດກິດທັງຫຼາຍທີ່ເພິ່ງເຮັດຮ່ວມກັນ

໓. ບໍ່ຖືອຳເພີໃຈໄຄ່ຕໍ່ຄວາມສະດວກ ບັນຍັດວາງຂໍ້ກຳນົດກົດເກນຕ່າງໆ ອັນບໍ່ໄດ້ຕົກລົງວາງໄວ້ ແລະ ບໍ່ຍຽບຍ່ຳລົບລ້າງສິ່ງທີ່ຕົກລົງວາງບັນຍັດກັນໄວ້ແລ້ວ ຖືປະຕິບັດໝັ້ນຢູ່ໃນບົດບັນຍັດໃຫຍ່ທີ່ວາງໄວ້ເປັນທຳມະນູນ

໔. ທ່ານຜູ້ໃດເປັນຜູ້ໃຫຍ່ມີປະສົບການດົນນານ ໃຫ້ກຽດເຄົາລົບນັບຖື ທ່ານເຫຼົ່ານັ້ນເບິ່ງເຫັນຄວາມສຳຄັນແຫ່ງຖ້ອຍຄຳຂອງທ່ານວ່າເປັນສິ່ງອັນເພິ່ງຮັບຟັງ

໕. ໃຫ້ກຽດ ແລະ ຄຸ້ມຄອງແມ່ຍິງບໍ່ໃຫ້ມີການກົດຂີ່ຂົ່ມເຫງ

໖. ເຄົາລົບບູຊາສັກກະລະເຈດີ ປູສະນິຍະສະຖານ ອະນຸສາວະລີປະຈຳຊາດ ອັນເປັນເຄື່ອງເຕືອນຄວາມຊົງຈຳ ປຸກໃຫ້ເຮັດດີ ແລະ ເປັນທີ່ລວມໃຈຂອງໝູ່ຊົນ ບໍ່ລະເລີຍພິທີບູຊາອັນເພິ່ງເຮັດຕໍ່ອະນຸສອນສະຖານເຫຼົ່ານັ້ນຕາມປະເພນີ

໗. ຈັດການໃຫ້ຄວາມອາລັກຂາ ບຳລຸງ ຄຸ້ມຄອງ ອັນຊອບທຳແກ່ບັນພະຊິດຜູ້ຊົງສິນຊົງທຳບໍລິສຸດ ເຊິ່ງເປັນຫຼັກໃຈ ແລະ ເປັນຕົວຢ່າງທາງສິລະທຳຂອງປະຊາຊົນ ເຕັມໃຈຕ້ອນຮັບ ແລະ ຫວັງໃຫ້ທ່ານຢູ່ໂດຍຜາສຸກ

*(ທີ.ມ. ໑໐/໖໗/໗໖)*

*ນອກຈາກນີ້ ເພິ່ງປະຕິບັດເປັນຜູ້ຄອງເຮືອນ ແລະ ຫົວໜ້າຄອບຄົວທີ່ດີຕາມຫຼັກປະຕິບັດ ວ່າດ້ວຍຄົນຄອງເຮືອນທີ່ເລີດລ້ຳ (ໜ້າທີ 35) ດ້ວຍສະເພາະຂໍ້ ຈ. ຄອງຕົນເປັນພົນລະເມືອງທີ່ດີ*



## ໝວດສອງ
## ຄົນກັບຊີວິດ

### ៥. ຄົນປະສົບຄວາມສຳເລັດ
(ຊີວິດທີ່ກ້າວໜ້າ ແລະ ສຳເລັດ)

ຜູ້ທີ່ຕ້ອງການດຳເນີນຊີວິດໃຫ້ຈະເລີນກ້າວໜ້າປະສົບຜົນສຳເລັດ ບໍ່ວ່າຈະໃນດ້ານການສຶກສາ ຫຼື ອາຊີບການງານກໍຕາມ ເພິ່ງປະຕິບັດຕາມຫຼັກຕໍ່ໄປນີ້

***ກ. ຫຼັກຄວາມຈະເລີນ*** *ປະຕິບັດຕາມຫຼັກທຳ ທີ່ຈະນຳຊີວິດໄປສູ່ຄວາມຈະເລີນຮຸ່ງເຮືອງທີ່ເອີ້ນວ່າ:* **ຈັກ** *(ທຳປະດຸດດັ່ງລໍ້ທັງ ៤ ນຳລັດໄປສູ່ຈຸດໝາຍ) ເຊິ່ງມີ ៤ ຂໍ້ຄື:*

*໑. ປະຕິຣູປະເທສະວາສະ* **ເລືອກຢູ່ຖິ່ນທີ່ເໝາະ** ຄືເລືອກຫາຖິ່ນທີ່ຢູ່ ຫຼື ບ່ອນຮໍ່າຮຽນດຳເນີນຊີວິດທີ່ດີ ເຊິ່ງບຸກຄົນ ແລະ ສິ່ງແວດລ້ອມທີ່ອຳນວຍແກ່ການສຶກສາ ພັດທະນາຊີວິດ ການສະແຫວງຫາຄວາມຮູ້ ການສ້າງສັນຄວາມດີງາມ ແລະ ຄວາມຈະເລີນກ້າວໜ້າ

*໒. ສັບປຸຣິສູປັດສະຍະ* **ຊອກຫາເສວະນາຄົນດີ** ຄື ຮູ້ຈັກເສວະນາຄົບຫາ ຫຼື ຮ່ວມໝູ່ກັບບຸກຄົນຜູ້ຮູ້ ຜູ້ຊົງຄຸນ ແລະ ຜູ້ຈະເກື້ອກູນແກ່ການສະແຫວງທຳຫາຄວາມຮູ້ຄວາມກ້າວໜ້າງອກງາມ ແລະ ຄວາມຈະເລີນໂດຍທຳ

*໓. ອັດຕະສຳມາປະນິທິ* **ຕັ້ງຕົນໄວ້ຖືກວິທີ** ຄືດຳລົງຕົນໝັ້ນຢູ່ໃນທຳ ແລະ ທາງດຳເນີນຊີວິດທີ່ຖືກຕ້ອງ ຕັ້ງເປົ້າໝາຍຊີວິດ ແລະ ການງານໃຫ້ດີງາມແນ່ຊັດ ແລະ ນຳຕົນໄປຖືກທາງສູ່ຈຸດໝາຍຄັກແນ່ໝັ້ນຄົງ ບໍ່ອອກແວກຫວັ່ນໄຫວ

*໔. ປຸບເພກະຕະປຸນຍະຕາ* **ມີທຶນດີໄດ້ກຽມໄວ້** ທຶນດີສ່ວນໜຶ່ງຄື ຄວາມມີສະຕິປັນຍາ ຄວາມຊຳນານ ແລະຮ່າງກາຍດີເປັນຕົ້ນ ທີ່ເປັນພື້ນມາແຕ່ເດີມ ແລະ ອີກສ່ວນໜຶ່ງຄື ການຮູ້ຈັກຫາຄວາມຮູ້ສ້າງເສີມຄຸນສົມບັດພັດທະນາຕົນເຝິກຝົນຄວາມຊຳນິຊຳນານຕ່າງໆ ກຽມໃຫ້ພ້ອມໄວ້ກ່ອນ ຫາກມີເຫດຕ້ອງໃຊ້ງານມື້ໃດກໍສາມາດຈັດທຳສ້າງຄວາມສຳເລັດ ແລະ ກ້າວສູ່ຄວາມຈະເລີນຍິ່ງຂຶ້ນໄປ

*(ອັງ.ຈະຕຸກກະ. ໒໑/໓໑/໔໑)*

***໒. ຫຼັກຄວາມສຳເລັດ*** *ປະຕິບັດຕາມຫຼັກທຳ ທີ່ຈະນຳໄປສູ່ຄວາມສຳເລັດແຫ່ງກິດຈະການນັ້ນໆ ທີ່ເອີ້ນວ່າ* **ອິດທິບາດ** *(ທຳໃຫ້ເຖິງຄວາມສຳເລັດ) ເຊິ່ງມີ* ***໔*** *ຂໍ້ຄື:*

*໑. ສັນທະ* **ມີຄວາມຮັກ** ຄື ພໍໃຈຈະເຮັດສິ່ງນັ້ນ ແລະ ເຮັດດ້ວຍໃຈຕ້ອງການເຮັດໃຫ້ສຳເລັດຢ່າງດີ ບໍ່ແມ່ນພຽງແຕ່ວ່າເຮັດໃຫ້ແລ້ວໆໄປ ຫຼື ພຽງເພາະຢາກໄດ້ລາງວັນ ຫຼື ຜົນກຳໄລ

*໒. ວິຣິຍະ* **ພາກພຽນກະທຳ** ຄື ດຸໝັ່ນປະກອບ ຂະຫຍັນກະທຳສິ່ງນັ້ນດ້ວຍຄວາມພະຍາຍາມ ເຂັ້ມແຂງ, ອົດທົນ, ເອົາທຸລະວຽກງານ, ບໍ່ປະຖິ້ມທໍ້ຖອຍ ກ້າວໄປຂ້າງໜ້າຈົນກວ່າຈະສຳເລັດ

*໓. ຈິດຕະ* **ເອົາຈິດຝັກໄຝ່** ຄື ຕັ້ງຈິດຮັບຮູ້ໃນສິ່ງທີ່ເຮັດ ແລະ ເຮັດສິ່ງນັ້ນດ້ວຍຄວາມຄິດ ບໍ່ປ່ອຍໃຫ້ໃຈເລື່ອນລອຍ ໃຊ້ຄວາມຄິດໃນເລື່ອງນັ້ນສະໝ່ຳສະເໝີ ເຮັດກິດ ຫຼື ງານນັ້ນຢ່າງອຸທິດຕົນອຸທິດໃຈ

*໔. ວິມັງສາ* **ໃຊ້ປັນຍາສອບສວນ** ຄື ໝັ່ນໃຊ້ປັນຍາພິຈາລະນາທົບທວນກວດກາຫາເຫດຜົນ ແລະ ກວດສອບຂໍ້ຍິ່ງຢ່ອນເກີນເລີຍບົກພ່ອງຂັດຂ້ອງເປັນຕົ້ນ ໃນສິ່ງທີ່ເຮັດນັ້ນໂດຍຮູ້ຈັກທົດລອງ ວາງແຜນ ວັດຜົນຄິດຄົ້ນວິທີແກ້ໄຂປັບປຸງເປັນຕົ້ນ ເພື່ອຂໍຈັດການ ແລະ ດຳເນີນງານນັ້ນໃຫ້ໄດ້ຜົນດີມີການພັດທະນາຍິ່ງຂຶ້ນໄປ

*ຜູ້ເຮັດວຽກງານທົ່ວໄປອາດຈະຈື່ສັ້ນໆວ່າ ຮັກງານ ສູ້ງານ ໃສ່ໃຈງານ ແລະ ເຮັດວຽກງານດ້ວຍປັນຍາ*

*(ທີ.ປາ. ໑໑/໔໙໑/໔໙໙)*

***ຄ. ຫຼັກພະເດັດໂພທິຍານ*** *ດຳເນີນຕາມພຸດທະປະຕິປະທາ ດ້ວຍການປະຕິບັດຕາມທຳ ໔ ຢ່າງທີ່ເປັນເຫດໃຫ້ພຣະອົງບັນລຸໂພທິຍານເອີ້ນວ່າ* **ອຸປັນຍາຕະທຳ** *(ທຳທີ່ພຣະພຸດທະເຈົ້າຊົງປະຕິບັດເຫັນປະຈັກກັບພຣະອົງເອງ) ຄື*

*໑. ອະສັນຕຸດທິຕາ ກຸສະເລສຸ ທຳເມສຸ* **ບໍ່ສັນໂດດໃນກຸສົນລະທຳ** *ຄື ບໍ່ຮູ້ອີ່ມ ບໍ່ຮູ້ພໍໃນການສ້າງສັນຄວາມດີ ແລະ ສິ່ງທີ່ດີ*

*໔. ອັບປະຕິວານີຕາ ຈະ ປະທານະສະມິງ* **ບຳເພັນພຽນບໍ່ລະເລີຍ** *ຄື ພຽນພະຍາຍາມກ້າວໜ້າເລື້ອຍໄປ ບໍ່ຍອມຖອຍຫຼັງ ບໍ່ຍອມແພ້ ບໍ່ຍອມທໍ້ຖອຍຕໍ່ອຸປະສັກ ແລະ ຄວາມອິດເມື່ອຍຍາກລຳບາກ*

*(ທີ.ປາ.໑໑/໔໔໗/໔໔໙)*



## ຜ. ຄົນຮູ້ຈັກທຳມາຫາລ້ຽງຊີບ
(ຊີວິດທີ່ເປັນຫຼັກຖານ)

ຄົນທີ່ຈະເອີ້ນໄດ້ວ່າ ຮູ້ຈັກຫາ, ຮູ້ຈັກໃຊ້ຊັບ ຫຼື ຫາເງິນເປັນ ໃຊ້ເງິນເປັນ ເປັນຄົນທຳມາຫາກິນທີ່ດີ ຕັ້ງຕົວສ້າງຫຼັກຖານໄດ້ ແລະ ໃຊ້ຊັບສົມບັດໃຫ້ເປັນປະໂຫຍດ ເປັນຜູ້ປະຕິບັດໜ້າທີ່ທາງເສດຖະກິດຢ່າງຖືກຕ້ອງ ກໍເພາະປະຕິບັດຕາມຫຼັກທຳຕໍ່ໄປນີ້

***ກ. ຂັ້ນຫາ ແລະ ຮັກສາຊັບສົມບັດ*** *ປະຕິບັດຕາມຫຼັກທຳທີ່ເປັນໄປເພື່ອປະໂຫຍດປັດຈຸບັນ ຫຼື ຫຼັກທຳອັນອຳນວຍຜົນປະໂຫຍດສຸກຂັ້ນຕົ້ນ ທີ່ເອີ້ນວ່າ* ***ທິດຖະທຳມິກັດຖະສັງວັດຕະນິກະທຳ ໔*** *ປະການ*

*໑. ອຸດທານະສຳປະທາ* **ເຖິງພ້ອມດ້ວຍຄວາມດຸໝັ່ນ** ຄື ດຸໝັ່ນໃນການປະຕິບັດໜ້າທີ່ສຸຈະລິດ ເຝິກຝົນໃຫ້ມີຄວາມຊຳນິຊຳນານ ແລະ ຮູ້ແຈ້ງຮູ້ຈັກໃຊ້ປັນຍາສອດສ່ອງ ກວດກາຫາວິທີການທີ່ເໝາະສົມທີ່ດີຈັດການ ແລະ ດຳເນີນການໃຫ້ໄດ້ຜົນດີ

*໒. ອາລັກຂະສຳປະທາ* **ເຖິງພ້ອມດ້ວຍການຮັກສາ** ຄື ຮູ້ຈັກຄຸ້ມຄອງ, ເກັບຮັກສາຊັບ ແລະ ຜົນງານທີ່ຜົນໄດ້ເຮັດໄວ້ດ້ວຍຄວາມຂະຫຍັນໝັ່ນພຽນໂດຍຊອບທຳດ້ວຍກຳລັງຂອງຕົນ ບໍ່ໃຫ້ອັນຕະລາຍ ຫຼື ເສື່ອມເສຍ

*໓. ກັນລະຍານະມິດຕາ* **ຄົບຫາຄົນດີເປັນມິດ** ຄືຮູ້ ຈັກເສວະນາຄົບຫາຄົນ ບໍ່ຄົບບໍ່ເອົາຢ່າງຜູ້ທີ່ຊັກຈູງໄປໃນທາງທີ່ເສື່ອມເສຍ ເລືອກເສວະນາສຶກສາຕົວຢ່າງທ່ານຜູ້ຮູ້ຜູ້ຊົງຄຸນ ຜູ້ມີຄວາມສາມາດ ຜູ້ໜ້າເຄົາລົບນັບຖື ແລະ ມີຄຸນສົມບັດເກື້ອກູນແກ່ອາຊີບການງານ

*໔. ສຳມາຊີວິຕາ* **ລ້ຽງຊີວິດແຕ່ພໍດີ** ຄືຮູ້ຈັກກຳນົດລາຍໄດ້ ແລະ ລາຍຈ່າຍ ເປັນຢູ່ພໍດີສົມລາຍໄດ້ ບໍ່ໃຫ້ຝືດເຄືອງ ຫຼື ຟຸ່ມເຟືອຍ ໃຫ້ລາຍໄດ້ເໜືອລາຍຈ່າຍ ຕ້ອງມີຄວາມປະຢັດເກັບໄວ້

*(ອັງ.ອະຖະກະ.໒໓໑/໔໔/໒໙໙)*

***ຂ. ຂັ້ນແຈງຈັດສັນຊັບ*** *ເມື່ອຫາຊັບມາໄດ້ແລ້ວ ຮູ້ຈັກຈັດສັນຊັບນັ້ນ ໂດຍຖື ການແບ່ງຊັບເປັນ ໔ ສ່ວນ ທີ່ເອີ້ນວ່າ* ***ໂພຄະວິພາກ ໔*** *ຄື*

- ເອເກນະ ໂພເຄ ພຸນໄຊຍະ ໑ ສ່ວນ ໃຊ້ຈ່າຍລ້ຽງຕົນ ລ້ຽງຄົນທີ່ຄວນບຳລຸງລ້ຽງ ແລະ ສ້າງປະໂຫຍດ
- ທະວິຫີ ກຳມັງ ປະໂຍຊະເຍ ໒ ສ່ວນ ໃຊ້ເປັນທຶນປະກອບການງານ
- ຈະຕຸດຖະຍະຈະ ນິທາໄປຍະ ອີກ ໑ ສ່ວນ ເກັບໄວ້ໃຊ້ໃນຍາມຈຳເປັນ

*(ທີ.ປາ.໑໑/໑໙໗/໒໐໔)*

***ຄ. ຂັ້ນຈັບຈ່າຍກິນໃຊ້*** *ເພິ່ງເຂົ້າໃຈ ແລະ ຄຳນຶງໄວ້ສະເໝີໄວ້ວ່າ ການທີ່ພຽນພະຍາຍາມສະແຫວງຮັກສາ ແລະ ຄອບຄອງຊັບສົມບັດໄວ້ນັ້ນ ກໍເພື່ອຈະໃຊ້ໃຫ້ເປັນປະໂຫຍດທັງແກ່ຕົນ ແລະ ຜູ້ອື່ນ ຖ້າບໍ່ໃຊ້ຊັບໃຫ້ເກີດຄຸນປະໂຫຍດແລ້ວການຫາ ແລະ ການມີຊັບສົມສົມບັດກໍປາສະຈາກຄຸນຄ່າ ຫາຄວາມໝາຍໃດບໍ່ໄດ້ ດັ່ງນັ້ນເມື່ອມີຊັບ ຫຼື ຫາຊັບມາໄດ້ແລ້ວ ເພິ່ງປະຕິບັດຕໍ່ຊັບໜຶ່ງສ່ວນທຳອິດໃນຂໍ້ ຂ. ຕາມຫຼັກ ໂພຄາທິຍະ (ປະໂຫຍດທີ່ຄວນຖືເອົາຈາກໂພຄະ ຫຼື ເຫດຜົນທີ່ອະຣິຍະສາວົກຍຶດຖື ໃນການທີ່ຈະມີ ຫຼື ຄອບຄອງຊັບສົມບັດ) ໕ ປະການ ດັ່ງພຸດທະພົດວ່າ*

**ອະຣິຍະສາວົກສະແຫວງຫາໂພຄະຊັບມາດ້ວຍນ້ຳເຫື່ອນ້ຳແຮງຄວາມດຸໝັ່ນຂອງຕົນ ແລະ ທາງສຸຈະລິດຊອບທຳແລ້ວ**

໑. ລ້ຽງຕົວເອງ, ລ້ຽງພໍ່ແມ່, ລູກເມຍ ແລະ ຄົນໃນປົກຄອງທັງຫຼາຍໃຫ້ເປັນສຸກ

໒. ບຳລຸງມິດສະຫາຍ ແລະຜູ້ຮ່ວມວຽກງານໃຫ້ເປັນສຸກ

໓. ໃຊ້ປົກປ້ອງຮັກສາສຸຂະພາບ ເຮັດຕົນໃຫ້ໝັ້ນຄົງປອດໄພຈາກໂລກໄພໄຂ້ເຈັບ

໔. ເຮັດພລີ ຄື ສະຫຼະເພື່ອບຳລຸງ ແລະ ບູຊາ ໕ ຢ່າງ

*(໑) ຍາຕິພລີ* ສົງເຄາະຍາດພີ່ນ້ອງ

*(໒) ອະຕິຖິພລີ* ຕ້ອນຮັບແຂກ

*(໓) ປຸບພະເປຕະພລີ* ເຮັດບຸນ ຫຼື ສັກກະລະຜູ້ລ່ວງລັບ

*(໔) ຣາຊະພລີ* ບຳລຸງລັດຖະການດ້ວຍການເສຍພາສີອາກອນ ເປັນຕົ້ນ

*(໕) ເທວະຈາພລີ* ຖວາຍເທວະດາ ຄື ເຮັດບຸນອຸທິດສິ່ງທີ່ຄວນບູຊາຕາມຄວາມເຊື່ອຖື

໕. ອຸປະຖຳບຳລຸງພຣະສົງ ແລະ ນັກບວດຜູ້ປະພຶດດີ, ປະຕິບັດຊອບ

, ຜູ້ບໍ່ປະໝາດມົວເມົາ

ເມື່ອໄດ້ໂພຄະຊັບເຮັດປະໂຫຍດໄດ້ແບບນີ້ແລ້ວ ເຖິງຊັບສິນຈະໝົດໄປກໍສະບາຍໃຈໄດ້ວ່າ ໄດ້ໃຊ້ຊັບນັ້ນເປັນປະໂຫຍດຖືກຕ້ອງຕາມເຫດຜົນແລ້ວ ເຖິງຊັບສິນເພີ່ມຂຶ້ນກໍສະບາຍໃຈຄືກັນ ເປັນອັນບໍ່ຕ້ອງເດືອດຮ້ອນໃຈໃນທັງສອງກໍລະນີ

*(ອັງ.ປັນຈະກະ. ໒໒/໔໑/໔໗)*

*ການໃຊ້ຈ່າຍໃນ ໕ ຂໍ້ນີ້ ເພິ່ນມຸ່ງໝາຍແຈກຈ່າຍລາຍການທີ່ເພິ່ງຈ່າຍ ໃຫ້ຮູ້ວ່າຄວນໃຊ້ຊັບແບບໃດ ບໍ່ໄດ້ໝາຍຄວາມວ່າໃຫ້ແບ່ງສ່ວນເທົ່າກັນໄປທຸກຂໍ້ ນອກຈາກນັ້ນ ເພິ່ນຍັງມຸ່ງກ່າວສະເພາະລາຍການທີ່ເພິ່ງຈ່າຍເປັນປະຈຳສຳລັບຄົນທົ່ວໄປ ແຕ່ຖ້າຜູ້ໃດສາມາດ ກໍຄວນບຳເພັນປະໂຫຍດໃຫ້ຫຼາຍຂຶ້ນໄປອີກ ຕາມຫຼັກ* **ສັງຄະຫະວັດຖຸ** *(ໜ້າທີ 8) ເປັນຕົ້ນ*

## ກ. ຄົນຄອງເຮືອນທີ່ເລີດລ້ຳ
(ຊີວິດປະຊາຊົນທີ່ສົມບູນ)

ຄົນທີ່ຈະເອີ້ນໄດ້ວ່າປະສົບຄວາມສຳເລັດໃນການຄອງເຮືອນ ເປັນຄະລຶຫັດຫຼືປະຊາຊົນ ໜ້າເຄົາລົບນັບຖືເປັນແບບຢ່າງ ຄວນຖືເປັນຕົວຢ່າງ ຈະຕ້ອງວັດດ້ວຍຫຼັກເກນດັ່ງນີ້

***ກ. ມີຄວາມສຸກສີ່ປະການ*** ຄື ຄວາມສຸກອັນຊອບທຳທີ່ຜູ້ຄອງເຮືອນຄວນມີ ຫຼື ຄວາມສຸກທີ່ປະຊາຊົນເຮັດໃຫ້ເກີດຂຶ້ນແກ່ຕົນຢູ່ສະເໝີ ເອີ້ນສັ້ນໆວ່າ **ສຸກຂອງຄະລຶຫັດ (ກາມະໂພຄີສຸກ) ໔** ຄື

*໑. ອັດຖິສຸກ* **ສຸກເກີດຈາກຄວາມມີຊັບ** ຄື ຄວາມພູມໃຈ ເອີບອີ່ມ ແລະອຸ່ນໃຈວ່າ ຕົນມີຊັບສິນ ທີ່ໄດ້ມາດ້ວຍເຫື່ອແຮງ ຄວາມດຸໝັ່ນຂະຫຍັນພຽນຂອງຕົນ ແລະ ໂດຍທາງຊອບທຳ

*໔. ໂພຄະສຸກ* **ສຸກເກີດຈາກການໃຊ້ຈ່າຍຊັບ** ຄື ຄວາມພູມໃຈ, ເອີບອີ່ມໃຈວ່າ ເຮົາໄດ້ໃຊ້ຊັບທີ່ໄດ້ມາໂດຍຊອບນັ້ນ ລ້ຽງຕົນ, ລ້ຽງຄອບຄົວ, ລ້ຽງຜູ້ທີ່ຄວນລ້ຽງ ແລະບຳເພັນຄຸນປະໂຫຍດ

*໓. ອະນະນະສຸກ* **ສຸກເກີດຈາກການບໍ່ເປັນໜີ້** ຄື ຄວາມພູມໃຈ, ເອີບອີ່ມໃຈວ່າ ຕົນບໍ່ມີໜີ້ສິນຕິດຄ້າງໃຜ

*໔. ອະນະວັດຊະສຸກ* **ສຸກເກີດຈາກການປະພຶດບໍ່ມີໂທດ** ຄື ຄວາມພູມໃຈ, ເອີບອີ່ມໃຈວ່າ ຕົນມີຄວາມປະພຶດສຸຈະລິດ, ບໍ່ບົກພ່ອງເສຍຫາຍ, ໃຜຕິຕຽນບໍ່ໄດ້ ທັງທາງກາຍ ວາຈາ ແລະທາງໃຈ

ບັນດາສຸກ ໔ ຢ່າງນີ້ ອະນະວັດຊະສຸກມີຄ່າຫຼາຍທີ່ສຸດ

*(ອັງ.ຈະຕຸກກະ. ໒໑/໖໔/໙໑)*

***ຂ. ເປັນປະຊາຊົນແບບສະບັບ*** ຄົນຄອງເຮືອນ ແຍກໄດ້ເປັນຫຼາຍປະເພດຈັດເປັນຂັ້ນໆ ໄດ້ຕັ້ງແຕ່ຮ້າຍໄປເຖິງດີ ແລະ ທີ່ດີກໍມີຫຼາຍລະດັບ ຄະລຶຫັດທີ່ດີໜ້າເຄົາລົບນັບຖືແທ້ຈິງ ຄືປະເພດທີ ໑໐ ໃນປະຊາຊົນ ໑໐ ປະເພດຕໍ່ໄປນີ້

**ກຸ່ມທີ ໑ ຫາຊັບໂດຍທາງບໍ່ຊອບທຳ**

໑. ໄດ້ຊັບມາແລ້ວ ບໍ່ລ້ຽງຕົນໃຫ້ເປັນສຸກ ທັງບໍ່ເຜື່ອແຜ່ແບ່ງປັນ ແລະ ບໍ່ໃຊ້ຊັບນັ້ນເຮັດຄວາມດີ (ເສຍທັງ ໓ ສ່ວນ)

໒. ໄດ້ຊັບມາແລ້ວ ລ້ຽງຕົນໃຫ້ເປັນສຸກ ແຕ່ທັງບໍ່ເຜື່ອແຜ່ແບ່ງປັນ ແລະ ບໍ່ໃຊ້ຊັບນັ້ນເຮັດຄວາມດີ (ເສຍ ໒ ສ່ວນ ດີ ໑ ສ່ວນ)

໓. ໄດ້ຊັບມາແລ້ວ ລ້ຽງຕົນໃຫ້ເປັນສຸກ ທັງເຜື່ອແຜ່ແບ່ງປັນ ແລະ ໃຊ້ຊັບນັ້ນເຮັດຄວາມດີນຳອີກ (ເສຍ ໑ ສ່ວນ ດີ ໒ ສ່ວນ)

**ກຸ່ມທີ ໒ ຫາຊອບທຳແດ່ ບໍ່ຊອບທຳແດ່**

໔. ໄດ້ຊັບມາແລ້ວ ເຮັດຢ່າງຂໍ້ ໑ (ເສຍ ໓ ດີ ໑)

໕. ໄດ້ຊັບມາແລ້ວ ເຮັດຢ່າງຂໍ້ ໒ (ເສຍ ໒ ໄດ້ ໒)

໖. ໄດ້ຊັບມາແລ້ວ ເຮັດຢ່າງຂໍ້ ໓ (ເສຍ ໑ ໄດ້ ໓)

**ກຸ່ມທີ ໓ ຫາໂດຍຊອບທຳ**

໗. ໄດ້ຊັບມາແລ້ວ ເຮັດຢ່າງຂໍ້ ໑ (ເສຍ ໒ ດີ ໑)

໘. ໄດ້ຊັບມາແລ້ວ ເຮັດຢ່າງຂໍ້ ໑ (ເສຍ ໑ ດີ ໒)

໙. ໄດ້ຊັບມາແລ້ວ ເຮັດຢ່າງຂໍ້ ໓ ແຕ່ຍັງຕິດຍັງມົວເມົາ ກິນໃຊ້ສົມບັດ ໂດຍບໍ່ຮູ້ເທົ່າທັນເຫັນໂທດ ບໍ່ມີປັນຍາທີ່ຈະເຮັດໃຫ້ຕົນເປັນອິດສະຫຼະເປັນນາຍເໜືອຊັບສົມບັດ (ເສຍ ໑ ດີ ໓ )

**ພວກພິເສດ ຜູ້ທີ່ສະແຫວງຫາຊອບທຳ ແລະ ໃຊ້ຢ່າງມີສະຕິສຳປະຊັນຍະ ມີຈິດໃຈເປັນອິດສະຫຼະມີລັກສະນະດັ່ງນີ້**

໑໐. ສະແຫວງຫາຊັບໂດຍທາງຊອບທຳ: ໄດ້ມາແລ້ວລ້ຽງຕົນໃຫ້ເປັນສຸກ; ເຜື່ອແຜ່ແບ່ງປັນ ແລະໃຊ້ຊັບນັ້ນເຮັດຄວາມດີ; ບໍ່ລືມຫຼົງ ບໍ່ມົວເມົາ ກິນໃຊ້ຊັບສົມບັດຢ່າງຮູ້ເທົ່າທັນ ເຫັນຄຸນໂທດທາງດີທາງເສຍຂອງມັນ ມີປັນຍາເຮັດໃຫ້ຕົນເປັນອິດສະຫຼະຫຼຸດພົ້ນ ເປັນນາຍເໜືອຊັບສົມບັດ *ປະເພດທີ ໑໐ ນີ້ ພຣະພຸດທະເຈົ້າສັນເສີນວ່າເປັນເລີດ ປະເສີດສູງສຸດ ຄວນເບິ່ງທັງ ໒ ສະຖານ ຄືເປັນຄະລືຫັດແບບໜ້າເຄົາລົບນັບຖື.*

*(ອັງ.ທະສະກະ. ໒໔/໙໑/໑໘໘)*

***ຄ. ກຳກັບຊີວິດດ້ວຍທຳ ໔*** *ຄືປະຕິບັດຕາມຫຼັກທຳສຳລັບການຄອງຊີວິດຂອງຄະລືຫັດທີ່ເອີ້ນວ່າ* **ຄະຣາວາດສະທຳ ໔** *ປະການດັ່ງນີ້*

໑. *ສັດຈະ* **ຄວາມຈິງ** ຄືດຳລົງໝັ້ນໃນສັດຈະ ຊື່ກົງ, ຊື່ສັດ, ຈິງໃຈ, ເວົ້າແທ້ເຮັດຈິງ ຈະເຮັດສິ່ງໃດກໍໃຫ້ເປັນທີ່ເຊື່ອຖືໄວ້ວາງໃຈໄດ້

໒. *ທະມະ* **ເຝິກຕົນ** ຄືບັງຄັບຄວບຄຸມຕົນເອງໄດ້ ຮູ້ຈັກປັບຕົວ ແລະແກ້ໄຂປັບປຸງຕົນໃຫ້ກ້າວໜ້າດີງາມຍິ່ງຂຶ້ນສະເໝີ

໓. *ຂັນຕິ* **ອົດທົນ** ຄືມຸ່ງໜ້າເຮັດໜ້າທີ່ການງານດ້ວຍຄວາມພາກພຽນ ເຂັ້ມແຂງອົດທົນບໍ່ຫວັ່ນໄຫວ ໝັ້ນໃນຈຸດໝາຍບໍ່ທໍ້ຖອຍ

໔. *ຈາຄະ* **ເສຍສະຫຼະ** ຄື ນ້ຳໃຈ ເອື້ອເຟື້ອ ມັກຊ່ວຍເຫຼືອເກື້ອກູນ ບຳເພັນປະໂຫຍດ ສະຫຼະໂລບ ລະທິຖິມານະໄດ້ ບໍ່ໃຈແຄບເຫັນແກ່ຕົວ ຫຼື ເອົາແຕ່ໃຈຕົນ

*(ຊຸ.ສຸ. ໒໕/໓໑໑/໓໖໑)*

***ງ. ຮັບຜິດຊອບຊີວິດທີ່ກ່ຽວຂ້ອງ*** *ຄືມີຄວາມສຳພັນອັນດີງາມອົບອຸ່ນເປັນສຸກພາຍໃນຄອບຄົວ ຕະຫຼອດເຖິງຍາດມິດ ຜູ້ຮ່ວມງານ ແລະ ຄົນທີ່ເພິ່ງພາອາໄສຢູ່ໃນປົກຄອງທັງໝົດ ໂດຍເຮັດໜ້າທີ່ບໍ່ແມ່ນພຽງນຳປະໂຫຍດທາງວັດຖຸໃຫ້ເຂົາຢ່າງດຽວ ແຕ່ນຳປະໂຫຍດສຸກທາງຈິດໃຈມາໃຫ້ນຳ ໂດຍປະພຶດເປັນຕົວຢ່າງຊວນຊັກຈູງໃຫ້ຄົນໃນຄອບຄົວ ແລະ ຜູ້ກ່ຽວຂ້ອງໃກ້ຊິດທັງຫຼາຍຈະເລີນງອກງາມຂຶ້ນດ້ວຍຄຸນນະທຳທີ່ເອີ້ນວ່າ* ***ອາຣະຍະວັດ*** *ທັງ* ***໕*** *ດັ່ງຕໍ່ໄປນີ້*

**໑. ງອກງາມດ້ວຍສັດທາ** ຄືໃຫ້ມີຄວາມເຊື່ອຄວາມໝັ້ນໃຈໃນພຣະຣັດຕະນະໄຕຣ ແລະ ໃນການທີ່ເຮັດຄວາມດີມີຫຼັກຍຶດໜ່ຽວຈິດໃຈ

**໒. ງອກງາມດ້ວຍສິນ** ຄືໃຫ້ມີຄວາມປະພຶດດີງາມ ສຸຈະລິດ ຮູ້ຈັກລ້ຽງຊີວິດມີວິໄນ ແລະ ມີກິຣິຍາມາລະຍາດອັນງາມ

**໓. ງອກງາມດ້ວຍສຸດຕະ** ຄືໃຫ້ມີຄວາມຮູ້ຈາກການຮ່ຳຮຽນສະດັບຟັງ ໂດຍໄດ້ຟັງ ຫຼື ຂົນຂວາຍໃຫ້ສຶກສາຫາຄວາມຮູ້ທີ່ຈະຟື້ນຟູຊີວິດຈິດໃຈ

**໔. ງອກງາມດ້ວຍຈາຄະ** ຄືໃຫ້ມີຄວາມເອື້ອເຟື້ອເພື່ອແຜ່ ມີນ້ຳໃຈຕໍ່ກັນ ແລະ ພໍໃຈເຮັດປະໂຫຍດແກ່ເພື່ອນມະນຸດ

**໕. ງອກງາມດ້ວຍປັນຍາ** ຄື ມີຄວາມຮູ້ຄິດ, ເຂົ້າໃຈເຫດຜົນ, ຮູ້ດີຮູ້ຊົ່ວ, ຮູ້ຄຸນໂທດ ມີປະໂຫຍດ ບໍ່ມີປະໂຫຍດ ເບິ່ງສິ່ງທີ່ທັງຫຼາຍຕາມເປັນຈິງ ມີວິຈາລະນະຍານ ຮູ້ຈັກໃຊ້ປັນຍາພິຈາລະນາເຫດປັດໄຈ ແກ້ໄຂບັນຫາ ແລະ ຈັດເຮັດດຳເນີນການຕ່າງໆໃຫ້ໄດ້ຜົນດີ

*(ອັງ.ປັນຈະກະ. ໒໒/໔໐/໕໗)*

***ຈ. ຄອງຕົນເປັນພົນລະເມືອງທີ່ດີ*** *ນຳຊີວິດ ແລະ ຄອບຄົວຂອງຕົນໄປສູ່ຄວາມຈະເລີນສະຫງົບສຸກ ແລະ ເປັນພົນລະເມືອງທີ່ສ້າງສັນສັງຄົມ ໂດຍປະພຶດດັ່ງນີ້*

໑. *ນະ ສາທາຣະນະທາຣັດສະ* ບໍ່ຄົບຊູ້ສູ່ຫາມົວເມົາໃນທາງເພດ

໒. *ນະ ພຸນເຊ ສາທຸເມກໂກ* ບໍ່ໃຈແຄບເສບສິ່ງເລີດລົດຜູ້ດຽວ

໓. *ນະ ເສເວ ໂລກາຍະຕິກັງ* ບໍ່ເສຍເວລາເວົ້າຖ້ອຍຄຳທີ່ເລື່ອນລອຍບໍ່ມີສາລະ

໔. *ສີລະວາ* ປະພຶດດີ ມີວິໄນ ຕັ້ງຢູ່ໃນສິນ ໕

໕. *ວັດຕະສຳປັນໂນ* ປະຕິບັດກິດໜ້າທີ່ສະໝ່ຳສະເໝີໂດຍສົມບູນ

໖. *ອັບປະມັດໂຕ* ບໍ່ປະໝາດກະຕືລືລົ້ນທຸກເວລາ

໗. *ວິຈັກຂະໂນ* ມີວິຈາຣະນະຍານ ເຮັດວຽກໂດຍໃຊ້ປັນຍາ

໘. *ນິວາຕະວຸດຕິ ອັດຖັດໂທ* ສຸພາບ ບໍ່ດື້ກະດ້າງ ຍິນດີຮັບຟັງຜູ້ອື່ນ

໙. *ສຸຣະໂຕ* ສະຫງ່ຽມງາມ ຮັກຄວາມປານິດສະອາດຮຽບຮ້ອຍ

໑໐.*ສະຂິໂລ ມຸທຸ* ເວົ້າຈາໜ້າຟັງ ທັງໃຈກາຍກໍອ່ອນໂຍນ ບໍ່ຫຍາບຄາຍ

໑໑.*ສັງຄະເຫຕາ ຈະ ມິດຕານັງ* ມີນ້ຳໃຈເອື້ອເຟື້ອສົງເຄາະຕໍ່ມິດສະຫາຍ

໑໒.*ສັງວິພາຄີ* ເພື່ອແຜ່ແບ່ງປັນ ຊ່ວຍເຫຼືອຄົນທົ່ວໄປ

໑໓.*ວິທານະວາ* ຮູ້ຈັກຈັດການວຽກໃຫ້ຮຽບຮ້ອຍ ແລະ ໄດ້ຜົນດີ

໑໔.*ຕັບໄປຍະ* ບຳລຸງພຣະສົງຊົງຄວາມຮູ້ ຜູ້ຊົງສິນທາງທຳ

໑໕.*ທຳມະກາໂມ* ໄຝ່ທຳ ຮັກສຸຈະລິດ

໑໖.*ສຸຕາທະໂຣ* ອ່ານຫຼາຍ ຟັງຫຼາຍ ຮູ້ວິຊາຂອງຕົນຊຳນານ

໑໗.*ປະຣິປຸດສະໂກ* ມັກຖາມຄົ້ນຄວ້າ ໄຝ່ຫາຄວາມຮູ້ຍິ່ງຂຶ້ນໄປ

*(ຂຸ.ຊາ. ໔໘/໑໑/໓໓໔)*



**໒. ຄົນບໍ່ຫຼົງໂລກ**

(ຊີວິດບໍ່ຜິດພາດ)

ບຸກຄົນທີ່ບໍ່ປະໝາດມົວເມົາຈົນຕົກເປັນທາດຂອງໂລກ ແລະ ຊີວິດ ຢ່າງທີ່ເອີ້ນໄດ້ວ່າ ຫຼົງໂລກ ເມົາຊີວິດ ກໍເພາະມີສະຕິຮູ້ຈັກເບິ່ງຮູ້ຈັກພິຈາລະນາ ຮູ້ຈັກວາງຕົວວາງໃຈຕໍ່ຄວາມຈິງຕ່າງໆອັນມີປະຈຳຢູ່ກັບໂລກ ແລະ ຊີວິດເປັນຄະຕິທຳມະດາດັ່ງນີ້

***ກ. ຮູ້ທັນໂລກະທຳ*** ຄືຮູ້ຈັກພິຈາລະນາ ຮູ້ເທົ່າທັນ ຕັ້ງສະຕິໃຫ້ຖືກຕ້ອງຕາມສະພາວະອັນໝູນວຽນປ່ຽນແປງຢູ່ສະເໝີ ໃນຊີວິດທີ່ຢູ່ໃນໂລກ ເຊິ່ງເອີ້ນວ່າ **ໂລກະທຳ** (ທຳຂອງໂລກ ຫຼື ຄວາມເປັນໄປຕາມຄະຕິທຳມະດາ ເຊິ່ງໝູນມາຫາຊາວໂລກ ແລະ ຊາວໂລກກໍໝູນວຽນຕາມມັນໄປ) **໘** ປະການຄື

<u>ຊື່ນຊົມ</u> <u>ຂົມຂື່ນ</u>

**໑. ໄດ້ລາບ** **໒. ເສື່ອມລາບ**
**໓. ໄດ້ຍົດ** **໔. ເສື່ອມຍົດ**
**໕. ສັນເສີນ** **໖. ນິນທາ**
**໗. ສຸກ** **໘. ທຸກ**

ໂລກະທຳ ໘ ນີ້ ຈັດເປັນ ໒ ຝ່າຍຄື ທີ່ຊື່ນຊົມ, ໜ້າປາຖະໜາ, ໜ້າຊອບໃຈ ຄົນທົ່ວໄປຢາກໄດ້ເອີ້ນວ່າ ອະນິດຖາຣົມ ພວກໜຶ່ງ ແຕ່ຈະມັກໃຈຢາກໄດ້ ຫຼື ບໍ່ກໍຕາມ ໂລກະທຳເຫຼົ່ານີ້ເປັນສິ່ງທີ່ເກີດຂຶ້ນໄດ້ແກ່ທຸກຄົນທັງແກ່ປຸຖຸຊົນຜູ້ບໍ່ມີການສຶກສາ ແລະ ແກ່ອະຣິຍະສາວົກຜູ້ມີການສຶກສາ ຈະແຕກຕ່າງກັນກໍແຕ່ການວາງໃຈ ແລະ ການປະຕິບັດຕໍ່ສິ່ງເຫຼົ່ານັ້ນກ່າວຄື

**໑. ປຸຖຸຊົນຜູ້ບໍ່ມີການສຶກສາ ບໍ່ຮູ້ຈັກເຝິກອົບຮົມ** ຍ່ອມບໍ່ເຂົ້າໃຈບໍ່ຮູ້ເທົ່າທັນຕາມຄວາມເປັນຈິງ ຫຼົງລືມຕົນ ຍິນດີຍິນຮ້າຍ ຍາມໄດ້ກໍຫຼົງໄຫຼມົວເມົາ ຫຼື ລ່າເລີງ ຍາມເສຍກໍຫງອຍເຫງົາໝົດກຳລັງ ຫຼື ຄຸ້ມຄັ່ງໄປ ປ່ອຍໃຫ້ໂລກະທຳເຂົ້າຄອບງຳທຳລາຍຈິດ ເລື້ອຍໄປບໍ່ພົ້ນຈາກທຸກໂສກ

**໒. ສ່ວນຜູ້ມີການສຶກສາເປັນອະຣິຍະສາວົກ** ຮູ້ຈັກພິຈາລະນາຮູ້ເທົ່າທັນຕາມຄວາມເປັນຈິງ ສິ່ງເຫຼົ່ານີ້ບໍ່ວ່າຢ່າງໃດກໍຕາມ ທີ່ເກີດຂຶ້ນແກ່ຕົນລ້ວນບໍ່ທ່ຽງ ບໍ່ຄົງທົນ ບໍ່ສົມບູນ ມີຄວາມຜັນປ່ຽນໄດ້ເປັນທຳມະດາ ຈຶ່ງບໍ່ຫຼົງໄຫຼມົວເມົາໄປຕາມອິດຖາຣົມບໍ່ຂຸ່ນໝົ່ນໝອງໄປໃນເພາະອິດຖາຣົມມີສະຕິດຳລົງຢູ່ໄດ້ ວາງຕົວວາງໃຈພໍດີ ບໍ່ເລີງໃນສຸກ ບໍ່ຖືກທຸກທັບຖົມ

ຍິ່ງກວ່ານັ້ນ ອະຣິຍະສາວົກອາດໃຊ້ໂລກະທຳເຫຼົ່ານັ້ນໃຫ້ເປັນປະໂຫຍດເຊັ່ນ ອະນິດຖາຣົມເປັນບົດຮຽນ, ບົດທົດສອບ ຫຼື ເປັນແບບເຝິກຝົນໃນການພັດທະນາຕົນ ແລະ ໃຊ້ອະນິດຖາຣົມເປັນໂອກາດ ຫຼື ເປັນອຸປະກອນໃນການສ້າງສັນຄວາມດີງາມ ແລະ ບຳເພັນຄຸນປະໂຫຍດໃຫ້ຍິ່ງຂຶ້ນໄປ

*(ອັງ. ອະຕະທະກະ. ໒໓/໑໖/໑໕໑)*

***໒. ບໍ່ເບິ່ງຂ້າມເທວະທູດ*** *ຄືຮູ້ຈັກເບິ່ງຮູ້ຈັກພິຈາລະນາສະພາວະທີ່ປາກົດຢູ່ສະເໝີໃນໝູ່ມະນຸດ ອັນເປັນສັນຍານເຕືອນໃຈໃຫ້ລະນຶກເຖິງຄະຕິທຳມະດາ*

*ຂອງຊີວິດ ທີ່ບໍ່ຄວນຫຼົງມົວເມົາ ເຊິ່ງເອີ້ນວ່າ* **ເທວະທູດ** *(ສື່ແຈ້ງຂ່າວຂອງຍົມມະເທບ ຫຼື ຕົວແທນຂອງພະຍາຍົມ)* ***໕*** *ຢ່າງຄື*

**໑. ເດັກອ່ອນ** ວ່າຄົນເຮົາທຸກຄົນເກີດມາກໍແບບນີ້ເທົ່ານີ້

**໒. ຄົນແກ່** ວ່າທຸກຄົນຫາກມີຊີວິດໄດ້ດົນນານ ກໍຕ້ອງປະສົບສະພາວະແບບນີ້

**໓. ຄົນເຈັບ** ວ່າພາວະແບບນີ້ ເຮົາທຸກຄົນອາດປະສົບໄດ້ນຳກັນທັງນັ້ນ

**໔. ຄົນຕ້ອງໂທດ** ວ່າກຳຊົ່ວນັ້ນບໍ່ຕ້ອງເວົ້າເຖິງຕາຍໄປ ເຖິງໃນປັດຈຸບັນນີ້ກໍມີຜົນເດືອດຮ້ອນເປັນທຸກ

**໕. ຄົນຕາຍ** ວ່າພາວະແບບນີ້ ເຮົາທຸກຄົນຕ້ອງໄດ້ພົບ ບໍ່ມີໃຜພົ້ນ ແລະ ກຳນົດບໍ່ໄດ້ວ່າບ່ອນໃດເມື່ອໃດເບິ່ງສະພາບແບບນີ້ເມື່ອໃດເຊັ່ນ ເມື່ອຜ່ານເຂົ້າໄປໃນສຸສານທັນດະສະຖານ ແລະ ໂຮງໝໍເປັນຕົ້ນ ບໍ່ໃຫ້ມີໃຈຫົດຫູ່ຢ້ານກົວ ແຕ່ໃຫ້ມີສະຕິຮູ້ຈັກໃຊ້ສະຕິປັນຍາພິຈາລະນາ ຈະໄດ້ເກີດຄວາມສັງເວດຮີບຂົນຂວາຍປະກອບແຕ່ກັນລະຍານະກຳ ຄື ການກະທຳທີ່ດີງາມດຳເນີນຊີວິດດ້ວຍຄວາມມົວເມົາບໍ່ປະໝາດ

*(ມະ. ອຸ. ໑໔/໕໐໗/໓໓໕)*

***ຄ. ຄຳນຶງສູດແຫ່ງຊີວິດ*** *ເຖິງບໍ່ແມ່ນເວລາທີ່ເບິ່ງເຫັນເທວະທູດກໍຄວນພິຈາລະນາຢູ່ສະເໝີຕາມຫຼັກທີ່ເອີ້ນວ່າ* ***ອະພິນນະພະປັດຈະເວກ*** *(ສິ່ງທີ່ທຸກຄົນບໍ່ວ່າເພດຍິງເພດຊາຍ ບໍ່ວ່າຄົນບ້ານຄົນວັດຄວນເຝິກພິຈາລະນາເນື່ອງໆ) ເຊິ່ງມີຢູ່ ໕ ປະການຄື*

໑. *ຊະຣາທຳມາຕາ* **ຄວນພິຈາລະນາເນື່ອງໆວ່າ ເຮົາມີຄວາມແກ່ເປັນທຳມະດາ ບໍ່ລ່ວງພົ້ນຄວາມແກ່ໄປໄດ້**

໒. *ພະຍາທິທຳມາຕາ* **ຄວນພິຈາລະນາເນື່ອງໆວ່າ ເຮົາມີຄວາມເຈັບປ່ວຍເປັນທຳມະດາ ບໍ່ລ່ວງພົ້ນຄວາມເຈັບປ່ວຍໄປໄດ້**

໓. *ມໍຣະນະທຳມາຕາ* **ຄວນພິຈາລະນາເນື່ອງໆວ່າ ເຮົາມີຄວາມຕາຍເປັນທຳມະດາ ບໍ່ລ່ວງພົ້ນຄວາມຕາຍໄປໄດ້**

*໔. ປິຍະວິນາພາວະຕາ* **ຄວນພິຈາລະນາເນື່ອງໆວ່າ ເຮົາຈະຕ້ອງປະສົບຄວາມພັດພາກ ທັງຈາກຄົນ ແລະ ເຄື່ອງຂອງທີ່ຮັກທີ່ມັກໃຈໄປທັງໝົດທັງສິ້ນ**

*໕. ກຳມັດສະກະຕາ* **ຄວນພິຈາລະນາເນື່ອງໆວ່າ ເຮົາມີກຳເປັນຂອງຕົນ ເຮົາເຮັດກຳໃດດີກໍຕາມ ຊົ່ວກໍຕາມ ກໍຕ້ອງເປັນທາຍາດຂອງກຳນັ້ນ**

ເມື່ອພິຈາລະນາຢູ່ເນື່ອງໆແບບນີ້ ກໍຈະຊ່ວຍປ້ອງກັນຄວາມມົວເມົາໃນຄວາມເປັນໜຸ່ມສາວ, ໃນຊັບສົມບັດ ແລະ ໃນຊີວິດເປັນຕົ້ນ ບັນເທົາຫຼຸ້ງຄວາມຖືໝັ້ນຍຶດຕິດ ແລະ ປ້ອງກັນຄວາມທຸຈະລິດ ເຮັດໃຫ້ບໍ່ປະໝາດ ຮີບຂົນຂວາຍເຮັດແຕ່ສິ່ງທີ່ດີງາມເປັນປະໂຫຍດ

*(ອັງ.ປັນຈະກະ. ໒໒. ໕໗/໕໑)*



# ໝວດສາມ
# ຄົນກັບຄົນ

## ຌ. ຄົນຮ່ວມຊີວິດ
(ຄູ່ຄອງທີ່ດີ)

ຄູ່ຄອງທີ່ດີ ທີ່ຈະເປັນຄູ່ຮ່ວມຊີວິດກັນໄດ້ ນອກຈາກການມະຄຸນແລ້ວ ຄວນມີຄຸນສົມບັດ ແລະ ປະພຶດປະຕິບັດຕາມປະຕິບັດດັ່ງນີ້

**ກ. ຄູ່ສ້າງຄູ່ສົມ** *ມີຫຼັກທຳຂອງຄູ່ຊີວິດ ທີ່ຈະເຮັດໃຫ້ຄູ່ສົມລົດມີຊີວິດສອດຄ່ອງກົມກືນກັນ ເປັນພື້ນຖານອັນໝັ້ນຄົງທີ່ຈະເຮັດໃຫ້ຢູ່ຄອງຄູ່ກັນໄດ້ຍືນຍາວເອີ້ນວ່າ* **ສະມະຊີວີທຳ ໔** *ປະການຄື*

໑. *ສະມະສັດທາ* **ມີສັດທາສົມກັນ** ເຄົາລົບນັບຖືລັດທິສາສະໜາ ສິ່ງເຄົາລົບບູຊາແນວຄວາມຄິດຄວາມເຊື່ອຖື ຫຼື ຫຼັກການຕ່າງໆ ຕະຫຼອດຈົນແນວຄວາມສົນໃຈຢ່າງດຽວກັນ ໜັກແໜ້ນສະເໝີກັນ ຫຼື ປັບເຂົ້າຫາກັນລົງກັນໄດ້

໔. *ສະມະສີລາ* **ມີສິນສົມກັນ** ມີຄວາມປະພຶດ, ສິລະທຳ ຈະຣິຍາມາລະຍາດ ພື້ນຖານການອົບຮົມ ພໍເໝາະໄປກັນໄດ້

໓. *ສະມະຈາຄະ* **ຈາຄະສົມກັນ** ມີຄວາມເອື້ອເຟື້ອເພື່ອແຜ່ ຄວາມໂອບອ້ອມອາລີ, ຄວາມມີໃຈກວ້າງ, ຄວາມເສຍສະຫຼະ, ຄວາມພ້ອມທີ່ຈະຊ່ວຍເຫຼືອຜູ້ອື່ນ ພໍກົມກືນກັນ ບໍ່ຂັດແຍ່ງກັນ

໔. *ສະມະປັນຍາ* ມີປັນຍາສົມກັນ ຮູ້ເຫດ ຮູ້ຜົນ, ເຂົ້າໃຈກັນຢ່າງໜ້ອຍເວົ້າກັນຮູ້ເລື່ອງ

*(ອັງ. ຈະຕຸກກະ. ໒໑/໕໕/໗໐)*

**ຂ. ຄູ່ຊື່ນຊົມຄູ່ລະກຳ** *ຫຼື ຄູ່ບຸນຄູ່ກຳຄື ຄູ່ຄອງທີ່ມີຄຸນນະທຳ ລັກສະນະນິໄສຄວາມປະພຶດປະຕິບັດ ການສະແດງອອກຕໍ່ກັນທີ່ເຮັດໃຫ້ເກື້ອກູນກັນກໍມີ*

*ຕ້ອງຍອມທົນກັນ ຫຼື ຢູ່ກັບຢ່າງຂົມຂື່ນກໍມີ ໃນກໍລະນີນີ້ທ່ານສະແດງພັນລະຍາປະເພດຕ່າງໆໄວ້* **໗** *ປະເພດຄື*

*໑. ວະທະກາພະຣິຍາ* **ພັນລະຍາປຽບເໝືອນເພັດຊະຄາດ** *ຄື ເມຍທີ່ບໍ່ຢູ່ກິນດ້ວຍຄວາມພໍໃຈ, ດູໝິ່ນ ແລະ ຄິດທຳລາຍຜົວ*

*໒. ໂຈຣີພະຣິຍາ* **ພັນລະຍາປຽບເໝືອນໂຈນ** *ຄື ເມຍຊະນິດທີ່ລ້າງຜານຊັບສິນບັດ*

*໓. ໄອຍາພະຣິຍາ* **ພັນລະຍາປຽບເໝືອນນາຍ** *ຄື ເມຍທີ່ກຽດຄ້ານ, ບໍ່ໃສ່ໃຈການງານ, ປາກຮ້າຍ, ຫຍາບຄາຍ, ມັກຂົ່ມຜົວ*

*໔. ມາຕາພະຣິຍາ* **ພັນລະຍາປຽບເໝືອນມານດາ** *ຄື ເມຍທີ່ຫວັງດີສະເໝີ ຄອຍຫ່ວງໃຍເອົາໃຈໃສ່ ຜົວຫາຊັບມາໄດ້ກໍເອົາໃຈໃສ່ຄອຍປະຢັດຮັກສາ*

*໕. ພະຄິນີພະຣິຍາ* **ພັນລະຍາປຽບເໝືອນນ້ອງສາວ** *ຄືເມຍຜູ້ເຄົາລົບຮັກຜົວ ດັ່ງນ້ອງຮັກອ້າຍ, ມີໃຈອ່ອນໂຍນ, ຮູ້ຈັກເກງໃຈ ມັກຄ້ອຍຕາມຜົວ*

*໖. ສະຂີພະຣິຍາ* **ພັນລະຍາປຽບເໝືອນສະຫາຍ** *ຄືເມຍທີ່ເປັນເໝືອນໝູ່ເພື່ອນ ມີຈິດໃຈພັກດີ ມີກິຣິຍາມາລະຍາດງາມເປັນຄູ່ຄິດຄູ່ໃຈ*

*໗. ທາສີພະຣິຍາ* **ພັນລະຍາປຽບເໝືອນທາດ** *ຄືເມຍທີ່ຍອມຢູ່ໃຕ້ອຳນາດຜົວ ຖືກຜົວດຸດ່າທຸບຕີກໍອົດທົນ ບໍ່ສະແດງຄວາມໂກດຕອບ*

*(ອັງ. ສັດຕະກະ. ໔໓/໖໐/໗໔)*

*ທ່ານສອນໃຫ້ເມຍສຳຫຼວດຕົນວ່າ ທີ່ເປັນຢູ່ຕົນເປັນເມຍປະເພດໃດ ຖ້າຈະໃຫ້ດີຄວນເປັນເມຍປະເພດໃດ ສຳລັບຜູ້ຊາຍອາດໃຊ້ເປັນຫຼັກສຳຫຼວດອຸປະນິດໄສຂອງຕົນວ່າຄວນແກ່ເມຍປະເພດໃດເປັນຄູ່ຄອງ ແລະ ສຳຫຼວດຜູ້ຍິງທີ່ຈະເປັນຄູ່ຄອງເໝາະກັບອຸປະນິດໄສຕົນບໍ່ເຖິງຜົວກໍຍ່ອມມີຫຼາຍປະເພດ ເພິ່ງທຽບເອົາຈາກເມຍປະເພດຕ່າງໆເຫຼົ່ານັ້ນ*

***ຄ. ຄູ່ສີລະທຳຄູ່ຄວາມດີ*** *ເອົາຫຼັກສຳລັບ ການຄອງເຮືອນ ຄື* **ຄະຣາວາດສະທຳ**

**໔** *ປະການມາໃຊ້ຕໍ່ກັນເຮືອນນຳດັ່ງນີ້*

໑. *ສັດຈະ* **ຄວາມຈິງ** ຄືຊື່ສັດຕໍ່ກັນ ທັງຈິງໃຈ, ຈິງວາຈາ ແລະ ຈິງໃນການກະທຳ

໒. *ທະມະ* **ເຝິກຕົນ** ຄືຮູ້ຈັກຄວບຄຸມຈິດໃຈ ເຝິກຫັດດັດນິໄສ ແກ້ໄຂຂໍ້ບົກພ່ອງຂໍ້ຂັດແຍ່ງປັບຕົວປັບໃຈເຂົ້າຫາກັນ ແລະ ປັບປຸງຕົນໃຫ້ດີງາມຍິ່ງຂຶ້ນໄປ

໓. *ຂັນຕິ* **ອົດທົນ** ຄືມີຈິດໃຈເຂັ້ມແຂງໜັກແໜ້ນ ບໍ່ວູ່ວາມ ທົນຕໍ່ຄວາມລ່ວງລ້ຳກ້ຳເກີນກັນ ແລະ ຮ່ວມກັນອົດທົນເມື່ອຍາກລຳບາກກາກກຳຜ່ານຜ່າອຸປະສັກໄປນຳກັນ

໔. *ຈາຄະ* **ເສຍສະຫຼະ** ຄືມີນ້ຳໃຈ ສາມາດເສຍສະຫຼະຄວາມສຸກສຳລານຄວາມພໍໃຈສ່ວນຕົນເພື່ອຄູ່ຄອງໄດ້ເຊັ່ນ ອົດຫຼັບອົດນອນພະຍາບານກັນໃນຍາມເຈັບປ່ວຍເປັນຕົ້ນ ຕະຫຼອດຈົນມີຈິດໃຈເອື້ອເຟື້ອເພື່ອແຜ່ຕໍ່ຍາດພີ່ນ້ອງຂອງຄູ່ຄອງ ບໍ່ໃຈແຄບ

*(ສັງ.ສະ. ໑໕/໗໔໕/໓໑໗)*

***ງ. ຄູ່ຖືກໜ້າທີ່ຕໍ່ກັນ ສົງເຄາະ*** *ອະນຸເຄາະກັນຕາມຫຼັກປະຕິບັດໃນທິດ ໖ ຂໍ້ທີ່ວ່າດ້ວຍ* ***ທິດເບື້ອງຫຼັງ*** *ຄື*

**ສາມີ ປະຕິບັດຕໍ່ພັນລະຍາ** *ໂດຍ*

໑. ຍົກຍ້ອງໃຫ້ກຽດສົມຖານະທີ່ເປັນພັນລະຍາ

໒. ບໍ່ດູໝິ່ນ

໓. ບໍ່ນອກໃຈ

໔. ມອບຄວາມເປັນໃຫຍ່ໃນວຽກເຮືອນ

໕. ຫາເຄື່ອງແຕ່ງຕົວມາໃຫ້ເປັນຂອງຂວັນຕາມໂອກາດ

**ພັນລະຍາ ອະນຸເຄາະສາມີ** ໂດຍ

໑. ຈັດວຽກເຮືອນໃຫ້ຮຽບຮ້ອຍ

໒. ສົງເຄາະຍາດພີ່ນ້ອງທັງສອງຝ່າຍດ້ວຍດີ

໓. ບໍ່ນອກໃຈ

໔. ຮັກສາຊັບສິນບັດທີ່ຫາມາໄດ້

໕. ດຸໝັ່ນ ຊ່າງເຮັດຊ່າງທຳເອົາວຽກງານທຸກຢ່າງ

*(ທີ.ປາ. ໑໑/໔໐໑)*

***ຈ. ພໍ່ເຮືອນເຫັນໃຈພັນລະຍາ*** *ແມ່ຍິງມີຄວາມທຸກຈຳເພາະຕົວອີກສ່ວນໜຶ່ງ ຕ່າງຫາກຈາກຜູ້ຊາຍ ເຊິ່ງຜົວເພິ່ງເຂົ້າໃຈ ແລະ ເພິ່ງປະຕິບັດດ້ວຍຄວາມເອົາໃຈໃສ່ ເຫັນອົກເຫັນໃຈຄື*

໑. ຜູ້ຍິງຕ້ອງຈາກພີ່ນ້ອງມາຢູ່ກັບຕະກຸນຂອງຜົວທັງທີ່ຍັງເປັນສາວນ້ອຍ ຜົວຄວນໃຫ້ຄວາມອົບອຸ່ນໃຈ

໒. ຜູ້ຍິງມີລະດູ ເຊິ່ງບາງຄາວກໍ່ບັນຫາໃຫ້ເກີດຄວາມແປປວນທັງໃຈກາຍ ຝ່າຍຊາຍຄວນເຂົ້າໃຈ

໓. ຜູ້ຍິງມີຄັນ ເຊິ່ງຍາມນັ້ນຕ້ອງການຄວາມເອົາໃຈໃສ່ບຳລຸງກາຍໃຈເປັນພິເສດ

໔. ຜູ້ຍິງເກີດລູກ ເຊິ່ງເປັນຄາວເຈັບປວດແສນສາຫັດ ແລະ ສ່ຽງຊີວິດຫຼາຍ ຜົວຄວນໃສ່ໃຈເໝືອນທຸກຂອງຕົນ

໕. ຜູ້ຍິງຕ້ອງຕອບສະໜອງເອົາໃຈໃສ່ຝ່າຍຊາຍ ຝ່າຍຊາຍບໍ່ຄວນເອົາແຕ່ໃຈຕົວ ເພິ່ງຊາບເຊິ່ງໃນຄວາມເອື້ອເຟື້ອ ແລະ ມີນ້ຳໃຈຕອບແທນ

*(ບັຍ ສັງ.ສະລະ. ໑໗/໔໖໔/໔໘໗)*

## ໑໐. ຄົນຮັບຜິດຊອບຕະກຸນ
(ຫົວໜ້າຄອບຄົວທີ່ດີ)

ຄົນທີ່ເປັນຫົວໜ້າຄອບຄົວ ນອກຈາກປະຕິບັດຕາມຫຼັກທຳອື່ນໆທີ່ກ່າວມາເບື້ອງຕົ້ນເຊັ່ນ ເປັນຄົນທີ່ຮູ້ທຳມາຫາກິນລ້ຽງຊີບເປັນຕົ້ນແລ້ວ ເພິ່ງປະຕິບັດຕາມຫຼັກທຳກ່ຽວກັບຄວາມຮັບຜິດຊອບຕໍ່ວົງຕະກຸນບາງຢ່າງຕໍ່ໄປນີ້

***ກ. ຮັກສາຕະກຸນໃຫ້ຄົງຢູ່*** *ໂດຍປະຕິບັດຕາມຫຼັກທຳສຳລັບດຳລົງຄວາມໝັ້ນຄົງຂອງຕະກຸນໃຫ້ຍືນຍາວ ຫຼື ເຫດທີ່ເຮັດໃຫ້ໝັ້ນຄົງຕັ້ງຢູ່ໄດ້ດົນນານ ເອີ້ນວ່າ:* ***ກຸລະຈີຣັດຖິຕິທຳ ໔*** *ຢ່າງຄື*

໑. *ນັດທະຄະເວສະນາ* ຂອງຫາຍຂອງໝົດຮູ້ຈັກຫາມາໄວ້

໔. *ຊິນນະປະຕິສັງຂະຣະນາ* ຂອງເກົ່າເປ່ເພ້ ຮູ້ຈັກບູລະນະສ້ອມແປງ

໓. *ປະຣິມິຕະປານະໂພຊະນາ* ຮູ້ຈັກປະມານໃນການກິນການໃຊ້

໔. *ອາທິປັດຈະສີລະວັນຕະສະປະນາ* ຕັ້ງຍິງ ຫຼື ຊາຍມີສິນທຳເປັນພໍ່ເຮືອນແມ່ເຮືອນ

*(ອັງ. ຈຸຕັກກະ. ໒໑/໔໕໙/໓໓໗)*

***ຂ. ບູຊາຄົນທີ່ເໝືອນໄຟ*** *ບຸກຄົນຕໍ່ໄປນີ້ປຽບເໝືອນໄຟ ຖ້າປະຕິບັດຖືກຕ້ອງຍ່ອມເກີດຄຸນຫຼາຍ ແຕ່ຖ້າປະຕິບັດຜິດອາດເກີດໂທດຮ້າຍແຮງ ເປັນເໝືອນໄຟເຜົາຜານຕົວ ຈຶ່ງຄວນປະຕິບັດປານຄົນຈຳພວກນັບຖືການບູຊາໄຟໃນສະໄໝບູຮານ ບຳເລີໄຟທີ່ຕົນບູຊາໄຟດ້ວຍຄວາມເອົາໃຈໃສ່ລະມັດລະວັງເຮັດໃຫ້ຖືກຕ້ອງ ເພາະມີຄວາມເຄົາລົບຢຳເກງ ເອີ້ນວ່າ* **ອັກຄີປາຣິຈະຣິຍາ** *(ໄຟທີ່ຄວນບຳລຸງ ຫຼື ບຸກຄົນທີ່ຄວນບູຊາດ້ວຍການເອົາໃຈໃສ່ບຳລຸງລ້ຽງ ແລະ ເຮັດໃຫ້ເຄົາລົບນັບຖືຕາມຄວນແກ່ຖານະ ປານໄຟບູຊາຂອງຜູ້ບູຊາໄຟ) ມີ* ***໓*** *ຄື*

໑. *ອາຫຸໄນຍັກຄີ* **ໄຟທີ່ຄວນແກ່ຂອງຄຳນັບ** ໄດ້ແກ່ບິດາມານດາ

໒. *ຄະຫະປະຕັກຄີ* **ໄຟທີ່ປະຈຳຕົວເຈົ້າເຮືອນ** ໄດ້ແກ່ລູກເມຍ ແລະ ຄົນໃນປົກຄອງ

໓. *ທັກຂິໄນຍັກຄີ* **ໄຟທັກຂິໄນຍະ** ໄດ້ແກ່ບັນພະຊິດ ຫຼື ພຣະພິກຂຸສົງຜູ້ຊົງສີນ ເຊິ່ງເຮັດໜ້າທີ່ສັ່ງສອນຜະດຸງທຳ ທີ່ປະພຶດດີປະພຶດຊອບ ບໍ່ປະໝາດມົວເມົາ

*(ທີ. ປາ. ໑໑/໒໒໘/໒໒໙)*

***ຄ. ໃສ່ໃຈລູກຫຼານ*** *ໃນຖານະທີ່ເປັນພໍ່ແມ່ ເພິ່ງຮູ້ຈັກ* ***ລູກ ໓ ປະເພດ*** *ແລະໃຫ້ການສຶກສາອົບຮົມໃຫ້ເປັນລູກທີ່ດີທີ່ສຸດຄື*

໑. *ອະພິຊາຕະບຸດ* **ລູກທີ່ຍິ່ງກວ່າພໍ່ແມ່** ດີເລີດກວ່າພໍ່ແມ່

໒. *ອະນຸຊາຕະບຸດ* **ລູກທີ່ຕາມເໝືອນພໍ່ແມ່** ສະເໝີດ້ວຍພໍ່ແມ່

໓. *ອະວະຊາຕະບຸດ* **ລູກທີ່ຕ່ຳລົງກວ່າພໍ່ແມ່** ເສື່ອມຊາມທຳລາຍວົງຕະກຸນ

*(ຂຸ.ອິຕິ. ໒໕/໒໕໒/໒໗໙)*

***ງ. ເຮັດໜ້າທີ່ຜູ້ມາກ່ອນ*** *ຄືອະນຸເຄາະລູກຫຼານຕາມຫຼັກປະຕິບັດໃນຖານະທີ່ພໍ່ແມ່ເປັນເໝືອນ ທິດເບື້ອງໜ້າ ດັ່ງນີ້*

໑. ຫ້າມປາມປ້ອງກັນຈາກຄວາມຊົ່ວ

໒. ເບິ່ງແຍງອົບຮົມໃຫ້ຕັ້ງຢູ່ໃນຄວາມດີ

໓. ໃຫ້ສຶກສາສິລະປະວິທະຍາ

໔. ເປັນທຸລະໃນເລື່ອງຈະມີຄູ່ຄອງທີ່ສົມຄວນ

໕. ມອບສົມບັດໃຫ້ເມື່ອມີໂອກາດ

*(ທີ.ປາ. ໑໑/໑໙໘/໒໐໒)*

***ຈ. ເປັນປະຊາຊົນທີ່ມີຄຸນນະພາບ*** *ຄອບຄົວເປັນຫົວໜ່ວຍສັງຄົມພື້ນຖານ ທີ່ຈະເປັນສ່ວນປະກອບຊ່ວຍໃຫ້ປະເທດຊາດຈະເລີນຮຸ່ງເຮືອງໝັ້ນຄົງ ດັ່ງນັ້ນ, ຫົວໜ້າຄອບຄົວທີ່ດີ ເພິ່ງເປັນປະຊາຊົນທີ່ດີຂອງພັກ-ລັດນຳ ໂດຍຄອງຕົນເປັນພົນລະເມືອງທີ່ດີໃນຂໍ້ ຈ.* *(ໜ້າທີ 35)*



## ໑໑. ຄົນສືບຕະກຸນ
(ທາຍາດທີ່ດີ)

ຜູ້ເປັນທາຍາດ ນອກຈາກຈະຮັບຊັບສົມບັດ ແລະ ວົງຕະກຸນມາຮັກສາສືບຕໍ່ແລ້ວ ຈະຕ້ອງຮັບເອົາໜ້າທີ່ ແລະ ຄຸນນະທຳຕ່າງໆ ທີ່ກ່ຽວກັບການຮັກສາວົງຕະກຸນມາປະຕິບັດສືບຕໍ່ໄປນຳ

ເບື້ອງຕົ້ນໃນຖານະທາຍາດທີ່ດີ ເພິ່ງປະຕິບັດຕາມຫຼັກທຳຕໍ່ໄປນີ້

***ກ. ເປີດປະຕູສູ່ຄວາມຈະເລີນກ້າວໜ້າ*** *ປະພຶດຕາມຫຼັກທຳທີ່ເປັນດັ່ງປະຕູໄຊອັນເປີດອອກໄປສູ່ຄວາມຈະເລີນກ້າວໜ້າຂອງຊີວິດທີ່ເອີ້ນວ່າ* ***ວັດທະນະມຸກ ໖ ປະການ*** *ຕໍ່ໄປນີ້*

໑. *ອາໂຣຄະຍາ* **ຮັກສາສຸຂະພາບດີ** ມີລາບອັນປະເສີດຄື ຄວາມບໍ່ມີໂຣກທັງຈິດ ແລະ ກາຍ

໔. *ສີນ* **ມີລະບຽບວິໄນ** ປະພຶດດີມີມາລະຍາດງາມ ບໍ່ກໍ່ຄວາມເດືອດຮ້ອນແກ່ສັງຄົມ

໓. *ພຸດທານຸມັດ* **ໄດ້ຄົນດີເປັນແບບຢ່າງ** ສຶກສາເໝືອນນິຍົມແບບຢ່າງຂອງມະຫາບຸຣຸດພຸດທະຊົນ

໔. *ສຸຕະ* **ຕັ້ງໃຈຮຽນໃຫ້ຮູ້ຈິງ** ຮ່ຳຮຽນຄົ້ນຄວ້າໃຫ້ຊຳນານ ໄຝ່ສະດັບເຫດການໃຫ້ຮູ້ເທົ່າທັນ

໕. *ທຳມານຸມັດ* **ເຮັດແຕ່ສິ່ງທີ່ຖືກຕ້ອງດີງາມ** ດຳລົງໝັ້ນໃນສຸຈະລິດທັງຊີວິດ ແລະ ວຽກງານດຳເນີນຕາມທຳ

໖. *ອະລີນະຕາ* **ມີຄວາມດຸໝັ່ນຂະຫຍັນພຽນ** ມີກຳລັງໃຈແຂງກ້າ ບໍ່ທໍ້ຖອຍເສີຍຊາພຽນກ້າວໜ້າເລື້ອຍໄປ

*(ຊຸ.ຊາ. ໔໗/໗໔/໔໗)*

***ຂ. ປິດຊ່ອງທາງທີ່ເຂົ້າມາຂອງທາງເສື່ອມ*** *ຫຼີກເວັ້ນຄວາມປະພຶດທີ່ເປັນຊ່ອງທາງຂອງຄວາມເສື່ອມຄວາມພິນາດ ເຊິ່ງເປັນເຫດໃຫ້ເງິນຄຳເສຍຫາຍຊີວິດຕົກຕ່ຳ ເອີ້ນວ່າ* ***ອະບາຍຍະມຸກ ໖*** *ຄື*

**໑. ດື່ມສຸຣາຢາເສບຕິດຂອງເມົາ** ເຊິ່ງມີໂທດ ໖

໑. ຊັບໝົດໄປໆເຫັນຊັດເຈນ

໒. ກໍ່ການວິວາດຜິດຖຽງ

໓. ທຳລາຍສຸຂະພາບ

໔. ເສື່ອມກຽດເສຍຊື່ສຽງ

໕. ເຮັດໃຫ້ໜ້າດ້ານບໍ່ຮູ້ຈັກອາຍ

໖. ຖອນກຳລັງປັນຍາ

**໒. ເອົາແຕ່ທ່ຽວກາງຄືນ ເຊິ່ງມີໂທດ ໖**

໑. ເປັນການບໍ່ຮັກສາຕົວ

໒. ເປັນການບໍ່ຮູ້ຮັກສາລູກເມຍ

໓. ເປັນການບໍ່ຮັກສາຊັບສົມບັດ

໔. ເປັນທີ່ລະແວງສົງໄສ

໕. ເປັນເປົ້າໃຫ້ເຂົາໃສ່ຄວາມ ຫຼື ຂ່າວລື

໖. ເປັນທາງມາຂອງເລື່ອງເດືອດຮ້ອນຢ່າງຫຼວງຫຼາຍ

**໓. ຈ້ອງຈະເບິ່ງການຫຼິ້ນ** ເຊິ່ງມີໂທດ ເຮັດໃຫ້ການງານເສື່ອມເສຍ ເພາະໃຈກັງວົນຄອຍຄິດຈ້ອງ ແລະ ເສຍເວລາເມື່ອໄປເບິ່ງສິ່ງນັ້ນໆເຊັ່ນ ຟ້ອນລຳບ່ອນໃດ ຂັບຮ້ອງ ດົນຕີ ບ່ອນໃດໄປບ່ອນນັ້ນ

**໔. ບໍ່ເວັ້ນການພະນັນມີໂທດ ໖**

໑. ເມື່ອຊະນະຍ່ອມກໍ່ເວນ

໒. ເມື່ອເສຍ ກໍເສຍຊັບທີ່ເສຍໄປ

໓. ຊັບໝົດໄປເຫັນຊັດເຈນ

໔. ເຂົ້າທີ່ປະຊຸມເຂົາບໍ່ເຊື່ອຖືຖ້ອຍຄຳ

໕. ເປັນທີ່ດູໝິ່ນຂອງໝູ່ເພື່ອນຝູງ

໖. ບໍ່ເປັນທີ່ເພິ່ງປະສົງຂອງຜູ້ຈະຫາຄູ່ຄອງໃຫ້ລູກຂອງເຂົາເພາະເຫັນວ່າການຈະລ້ຽງລູກເມຍບໍ່ໄຫວ

**໕. ມົວສຸມມິດຊົ່ວ** ເຊິ່ງມີໂທດເຮັດໃຫ້ກາຍເປັນຄົນຊົ່ວຢ່າງຄົນທີ່ຕົນຄົບທັງ ໖ ປະເພດຄື ໝູ່ເພື່ອນທີ່ຊັກນຳໃຫ້ກາຍເປັນນັກພະນັນ, ນັກເລງຜູ້ຍິງ, ນັກເລງເຫຼົ້າ, ນັກລວງຂອງປອມ, ນັກຫຼອກນັກຕົ້ມ ແລະ ນັກເລງຫົວໄມ້

**໖. ມົວແຕ່ກຽດຄ້ານ** ເຊິ່ງມີໂທດເຮັດໃຫ້ຍົກເຫດຕ່າງໆເປັນຂໍ້ອ້າງ ຜັດພ້ຽນບໍ່ເຮັດການງານ ຊັບໃໝ່ກໍບໍ່ເກີດ ຊັບທີ່ມີຢູ່ກໍໝົດສິ້ນໄປຄື ໃຫ້ອ້າງໄປທາງ ໖ ກໍລະນີວ່າ ໜາວຫຼາຍ ຮ້ອນຫຼາຍ ຄ່ຳໄປແລ້ວ ຍັງເຊົ້າໄປ ຫິວຫຼາຍ ອີ່ມຫຼາຍ ແລ້ວບໍ່ເຮັດການງານ.

***ຄ. ເຊື່ອມສາຍສຳພັນກັບບຸບພະກາຣີ*** *ຄືຖານະທີ່ເປັນບຸດທິດາ ເພິ່ງເຄົາລົບບິດາມານດາ ຜູ້ປຽບເໝືອນ* ***ທິດເບື້ອງໜ້າ*** *ດັ່ງນີ້*

໑. ທ່ານລ້ຽງເຮົາມາລ້ຽງທ່ານຕອບ
໒. ຊ່ວຍເຮັດທຸລະການງານຂອງທ່ານ
໓. ດຳລົງວົງຕະກຸນ
໔. ປະພຶດຕົນໃຫ້ເໝາະສົມກັບຄວາມເປັນທາຍາດ
໕. ເມື່ອທ່ານລ່ວງລັບໄປແລ້ວ ເຮັດບຸນອຸທິດໃຫ້ທ່ານ

*(ທີ.ປາ. ໑໑/໑໙໙/໒໐໔)*

***ງ. ມີຫຼັກປະກັນຊີວິດທີ່ພັດທະນາ*** *ພຣະພຸດທະເຈົ້າຕັດວ່າ ລູກໆຄືເດັກນ້ອຍທັງຫຼາຍເປັນຖານຮອງຮັບຂອງມະນຸດສະຍະຊາດ ລູກໃນຄອບຄົວຄືເດັກນ້ອຍໃນສັງຄົມ ຄວນໄດ້ຮັບການເຝິກອົບຮົມ ໃຫ້ເປັນຜູ້ມີຄຸນສົມບັດທີ່ເປັນຕົ້ນທຶນໃນຕົວ ເຊິ່ງຈະເຮັດໃຫ້ພ້ອມທີ່ຈະກ້າວໜ້າໄປໃນການສຶກສາພັດທະນາຊີວິດຂອງຕົນ ແລະ ເປັນສະມາຊິກທີ່ມີຄຸນຄ່າຂອງສັງຄົມ ໂດຍການປູກຝັງຄຸນສົມບັດທີ່ເອີ້ນວ່າ* **ແສງເງິນແສງຄຳຂອງຊີວິດທີ່ດີງາມ ຫຼື ຮຸ່ງອະລຸນຂອງການສຶກສາ ໗** *ປະການດັ່ງນີ້*

**໑. ສະແຫວງແຫຼ່ງປັນຍາ ແລະ ແບບຢ່າງທີ່ດີ**
**໒. ມີວິໄນເປັນຖານຂອງການພັດທະນາຊີວິດ**

ງ. ມີຈິດໃຈໄຝ່ຮູ້ໄຝ່ສ້າງສັນ
໔. ດຸໝັ່ນເຝິກຕົນຈົນເຕັມສຸດພາວະທີ່ຄວາມເປັນຄົນຈະໃຫ້ເຖິງໄດ້
໕. ຍຶດຖືຫຼັກເຫດປັດໄຈເບິ່ງອັນໃດໆຕາມເຫດຜົນ
ຜ. ຕັ້ງຕົນຢູ່ໃນຄວາມບໍ່ປະໝາດ
ກ. ສະຫຼາດແຍບຄາຍໃຫ້ໄດ້ປະໂຫຍດ ແລະ ຄວາມຈິງ



# ໑໘. ຄົນທີ່ຈະຄົບຫາ

(ມິດແທ້-ມິດທຽມ)

ການຄົບໝູ່ເພື່ອນເປັນສິ່ງສຳຄັນ ມີຜົນຕໍ່ການຈະເລີນກ້າວໜ້າ ແລະ ຄວາມເສື່ອມຂອງຊີວິດຢ່າງຫຼວງຫຼາຍ ຈຶ່ງຄວນຮັບຮູ້ຫຼັກທຳກ່ຽວກັບເລື່ອງມິດທີ່ເປັນຂໍ້ສຳຄັນໆໄວ້ ໃນນີ້ຈະສະແດງເລື່ອງທີ່ຄວນຄົບ ຄົນທີ່ບໍ່ຄວນຄົບ ແລະ ຫຼັກປະຕິບັດຕໍ່ກັນລະຫວ່າງມິດສະຫາຍ ດັ່ງຕໍ່ໄປນີ້

***ກ. ມິດທຽມ*** *ເພິ່ງຮູ້ຈັກໝູ່ທຽມ ຫຼື ສັດຕູຜູ້ມາໃນຮ່າງຂອງມິດ* **( ມິດປະຕິຮູບ ) ໔** *ປະເພດດັ່ງນີ້*

**໑. ຄົນປອກລອກ** ຂົນເອົາຂອງໝູ່ໄປຝ່າຍດຽວ *(ທໍຣະຊີບ)* ມີລັກສະນະ ໔

໑. ຄິດເອົາແຕ່ໄດ້ຝ່າຍດຽວ

໒. ຍອມເສຍໜ້ອຍ ໂດຍຫວັງຈະເອົາໃຫ້ຫຼາຍ

໓. ຕົວມີໄພ ຈຶ່ງມາຊ່ວຍວຽກຂອງເພື່ອນ

໔. ຄົບເພື່ອນ ເພາະເຫັນແກ່ປະໂຫຍດ

**໒. ຄົນດີແຕ່ເວົ້າ** *(ວະຈີບໍຣົມ)* ມີລັກສະນະ ໔

໑. ດີແຕ່ຍົກຂອງໝົດແລ້ວມາເວົ້າ

໒. ດີແຕ່ອ້າງຂອງຍັງບໍ່ມີມາເວົ້າ

໓. ສົງເຄາະດ້ວຍສິ່ງທີ່ຫາປະໂຫຍດບໍ່ໄດ້

໔. ເມື່ອໝູ່ມີວຽກງານອ້າງແຕ່ເຫດຂັດຂ້ອງ

**໓. ຄົນຫົວປະຈົບ** *(ອະນຸປິຍະພານີ)* ມີລັກສະນະ ໔

໑. ຈະເຮັດຊົ່ວກໍເອີອໍ

໒. ຈະເຮັດດີກໍເອີອໍ

໓. ຕໍ່ໜ້າສັນເສີນ

໔. ລັບຫຼັງນິນທາ

**໔. ຄົນຊວນຈິບຫາຍ** *(ອະປາຍະສະຫາຍ)* ມີລັກສະນະ ໔

໑. ຄອຍເປັນເພື່ອນດື່ມນ້ຳເມົາ
໔. ຄອຍເປັນເພື່ອນທ່ຽວກາງຄືນ
໓. ຄອຍເປັນເພື່ອນທ່ຽວເບິ່ງການລະຫຼິ້ນ
໔. ຄອຍເປັນເພື່ອນໄປຫຼິ້ນການພະນັນ

***ຂ. ມິດແທ້*** *ເພິ່ງຮູ້ຈັກມິດແທ້ ຫຼື ມິດດ້ວຍໃຈຈິງ* **(ສຸຫະທະມິດ)** *໔ ປະເພດ ດັ່ງນີ້*

**໑. ມິດເປັນອຸປະກາຣະ** *(ອຸປະກາຣະ)* ມີລັກສະນະ ໔
໑. ເພື່ອນປະໝາດ ຊ່ວຍຮັກສາເພື່ອນ
໔. ເພື່ອນປະໝາດ ຊ່ວຍຮັກສາຊັບສິນຂອງເພື່ອນ
໓. ເມື່ອມີໄພເປັນທີ່ເພິ່ງພາອາໄສໄດ້
໔. ມີວຽກຈຳເປັນ ຊ່ວຍອອກຊັບໃຫ້ເກີນກວ່າທີ່ອອກປາກ

**໔. ມິດຮ່ວມສຸກຮ່ວມທຸກ** *(ສະໝານສຸກທຸກ)* ມີລັກສະນະ ໔
໑. ບອກຄວາມລັບແກ່ເພື່ອນ
໔. ຮັກສາຄວາມລັບຂອງເພື່ອນ
໓. ມີໄພອັນຕະລາຍບໍ່ປະຖິ້ມ
໔. ແມ່ນແຕ່ຊີວິດກໍສະຫຼະໃຫ້ໄດ້

**໓. ມິດແນະນຳປະໂຫຍດ** *(ອັດຖະຂາຍີ)* ມີລັກສະນະ ໔
໑. ຈະເຮັດຊົ່ວເສຍຫາຍຄອຍຫ້າມໄວ້
໔. ແນະນຳສະໜັບສະໜູນໃຫ້ເຮັດຄວາມດີ
໓. ໃຫ້ໄດ້ຟັງໄດ້ຮູ້ໃນສິ່ງທີ່ບໍ່ເຄີຍໄດ້ຟັງ
໔. ບອກທາງສຸກທາງສະຫວັນໃຫ້

**໔. ມິດມີໃຈຮັກ** *(ອະນຸກຳປີ)* ມີລັກສະນະ ໔
໑. ເພື່ອນມີທຸກ ບໍ່ສະບາຍໃຈໄປນຳ (ທຸກ ທຸກນຳ)
໔. ເພື່ອນມີສຸກ ກໍຄອຍຊົມຊື່ນຍິນດີ (ສຸກ ສຸກນຳ)
໓. ເຂົາຕິຕຽນ ຄອຍຍັບຍັ້ງແກ້ໃຫ້
໔. ເຂົາສັນເສີນເພື່ອນຊ່ວຍເວົ້າສະໜັບສະໜູນ

*(ທີ.ປາ. ໑໑/໑໗໔/໔໗)*

***ຄ. ມິດຕໍ່ມິດ*** *ເພິ່ງສົງເຄາະອະນຸເຄາະກັນ ຕາມຫຼັກປະຕິບັດໃນຖານະທີ່ເປັນເໝືອນ* ***ທິດເບື້ອງຊ້າຍ*** *ດັ່ງນີ້*

**ເພິ່ງປະຕິບັດຕໍ່ມິດສະຫາຍ** ດັ່ງນີ້

໑. ເພື່ອແຜ່ແບ່ງປັນ

໒. ເວົ້າຈາມີນ້ຳໃຈ

໓. ຊ່ວຍເຫຼືອເກື້ອກູນກັນ

໔. ຊື່ສັດຈິງໃຈ

**ມິດສະຫາຍອະນຸເຄາະຕອບ** *ດັ່ງນີ້*

໑. ເມື່ອເພື່ອນປະໝາດ ຊ່ວຍຮັກສາປ້ອງກັນ

໒. ເມື່ອເພື່ອນປະໝາດ ຊ່ວຍຮັກສາຊັບສົມບັດຂອງເພື່ອນ

໓. ໃນຍາມມີໄພ ເປັນທີ່ເພິ່ງໄດ້

໔. ບໍ່ລະຖິ້ມໃນຍາມທຸກຍາກ

໕. ນັບຖືຕະຫຼອດເຖິງຍາດພີ່ນ້ອງຂອງເພື່ອນ

*(ທີ.ປາ. ໑໑/໒໐໒/໒໐໔)*

## ໑໓. ຄົນງານ-ນາຍງານ
(ລູກຈ້າງ-ເຈົ້ານາຍ)

*ຄົນທີ່ມາທຳກິດການງານຮ່ວມກັນ ໃນຖານະລູກຈ້າງຝ່າຍໜຶ່ງ ແລະ ເຈົ້ານາຍຝ່າຍໜຶ່ງ ຄວນປະຕິບັດຕໍ່ກັນໃຫ້ຖືກຕ້ອງຕາມໜ້າທີ່ ເພື່ອຄວາມສຳພັນອັນດີຕໍ່ກັນ ແລະ ເພື່ອໃຫ້ວຽກໄດ້ຜົນດີ ໂດຍເຮັດຕາມຫຼັກປະຕິບັດໃນທິດ ໖ ຂໍ້ທີ່ວ່າດ້ວຍ* **ທິດເບື້ອງລຸ່ມ** *ດັ່ງນີ້*

***ກ. ເຈົ້ານາຍ*** *ເພິ່ງບຳລຸງຄົນຮັບໃຊ້ ແລະ ຄົນງານ ດັ່ງນີ້*

໑. ຈັດວຽກງານໃຫ້ເຮັດ ຕາມຄວາມເໝາະສົມກັບກຳລັງ, ເພດ, ໄວ, ຄວາມສາມາດ

໒. ໃຫ້ຄ່າຈ້າງລາງວັນສົມຄວນແກ່ງານ ແລະ ຄວາມເປັນຢູ່

໓. ຈັດສະຫວັດດີການດີ ມີຊ່ວຍຮັກສາພະຍາບານໃນຍາມເຈັບໄຂ້ເປັນຕົ້ນ

໔. ມີອັນໃດໄດ້ພິເສດມາ ກໍແບ່ງປັນໃຫ້

໕. ໃຫ້ມີມື້ຢຸດເຊົາ ແລະ ພັກຜ່ອນຢ່ອນໃຈຕາມໂອກາດອັນສົມຄວນ

***ຂ. ຄົນຮັບໃຊ້ ແລະ ຄົນງານ*** *ນ້ຳໃຈຊ່ວຍເຫຼືອເຈົ້ານາຍ ດັ່ງນີ້*

໑. ເລີ່ມເຮັດວຽກງານກ່ອນ

໒. ເລີກວຽກງານຕາມຫຼັງ

໓. ເອົາແຕ່ຂອງທີ່ເຈົ້ານາຍໃຫ້

໔. ເຮັດການງານໃຫ້ຮຽບຮ້ອຍ ແລະ ດີຍິ່ງຂຶ້ນ

໕. ນຳຄວາມດີຂອງເຈົ້ານາຍ ແລະ ກິດຈະການໄປເຜີຍແຜ່

*(ທີ.ປາ. ໑໑/໒໐໓/໒໐໕)*

## ໝວດສີ່
## ຄົນກັບພຣະສາສະໜາ

### ໑໔. ຄົນໃກ້ສາສະໜາ
(ອຸບາສົກ ອຸບາສິກາ)

ພຸດທະສາສະນິກະຊົນ ມີຫຼັກປະຕິບັດທີ່ສະແດງຄວາມສຳພັນລະຫວ່າງຄົນກັບພຣະພຸດທະສາສະໜາດັ່ງນີ້

***ກ. ເກື້ອກູນພຣະສົງ*** *ໂດຍປະຕິບັດຕໍ່ສົງເໝືອນເປັນ* **ທິດເບື້ອງເທິງ** *ດັ່ງນີ້*

໑. ຈະເຮັດສິ່ງໃດ ກໍເຮັດດ້ວຍເມດຕາ
໒. ຈະເວົ້າສິ່ງໃດ ກໍເວົ້າດ້ວຍເມດຕາ
໓. ຈະຄິດສິ່ງໃດ ກໍຄິດດ້ວຍເມດຕາ
໔. ຕ້ອນຮັບດ້ວຍຄວາມເຕັມໃຈ
໕. ອຸປະຖຳດ້ວຍປັດໄຈ ໔

*(ທີ.ປາ. ໑໑/໒໐໗/໒໐໖)*

***ຂ. ການເຮັດບຸນ*** *ຄື ເຮັດດີດ້ວຍວິທີຕ່າງໆ ທີ່ເອີ້ນວ່າ* **ບຸນກິຣິຍາວັດຖຸ** *(ເລື່ອງທີ່ຈັດວ່າເປັນການເຮັດບຸນ) ມີ ຢ່າງຄື*

໑. *ທານະໄມ* ເຮັດບຸນດ້ວຍການໃຫ້ປັນຊັບສິ່ງຂອງ
໒. *ສີລະໄມ* ເຮັດບຸນດ້ວຍການຮັກສາສິນ ຫຼື ປະພຶດດີປະພຶດຊອບ
໓. *ພາວະນາໄມ* ເຮັດບຸນດ້ວຍການຈະເລີນພາວະນາ ຄື ອົບຮົມຈິດໃຈໃຫ້ຈະເລີນດ້ວຍສະມາທິ ແລະ ປັນຍາ ແລະ ຄວນເຈາະຈົງເຮັດບຸນບາງຢ່າງທີ່ເປັນສ່ວນລາຍລະອຽດເພີ່ມຂຶ້ນອີກ **໗** ຂໍ້ ລວມເປັນ ໑໐ ຢ່າງຄື
໔. *ອະປະຈາຍະນະໄມ* ເຮັດບຸນດ້ວຍການປະພຶດສຸພາບອ່ອນນ້ອມ
໕. *ໄວຍາວັດຈະໄມ* ເຮັດບຸນດ້ວຍການຊ່ວຍຂົນຂວາຍຮັບໃຊ້, ໃຫ້ບໍລິການ, ບຳເພັນປະໂຫຍດ

໖. *ປັດຕິທານະໄມ* ເຮັດບຸນດ້ວຍການໃຫ້ຜູ້ອື່ນມີສ່ວນຮ່ວມໃນການເຮັດຄວາມດີ

໗. *ປັດຕານຸໂມທະນາໄມ* ເຮັດບຸນດ້ວຍການພອຍຍິນດີໃນການເຮັດຄວາມດີຂອງຜູ້ອື່ນ

໘. *ທຳມັດສະວະນະໄມ* ເຮັດບຸນດ້ວຍການຟັງທຳ ສຶກສາຄວາມຮູ້ທີ່ປາສະຈາກໂທດ

໙. *ທຳມະເທສະນາໄມ* ເຮັດບຸນດ້ວຍການສັ່ງສອນທຳໃຫ້ຄວາມຮູ້ທີ່ເປັນປະໂຫຍດ

໑໐. *ທິດຖຸຊຸກຳ* ເຮັດບຸນດ້ວຍການເຮັດຄວາມເຫັນໃຫ້ຖືກຕ້ອງ ຮູ້ຈັກເບິ່ງສິ່ງ ທີ່ທັງຫຼາຍຕາມຄວາມເປັນຈິງໃຫ້ເປັນສຳມາທິດຖິ

*(ທີ.ປາ. ໑໑/໔໔໘/໓໓໐; ທີ.ອ. ໓/໔໔໖)*

***ຄ. ຄຸ້ນພຣະສາສະໜາ*** *ຖ້າປະຕິບັດໃຫ້ເຄັ່ງຄັດຍິ່ງຂຶ້ນ ເຖິງຂັ້ນເປັນອຸບາສົກອຸບາສິກາຄື ຜູ້ໃກ້ຊິດພຣະພຸດທະສາສະໜາຢ່າງແທ້ຈິງ ຄວນຕັ້ງຕົນຢູ່ໃນທຳທີ່ເປັນໄປເພື່ອຄວາມຈະເລີນຂອງອຸບາສົກ ເອີ້ນວ່າ* **ອຸບາສະກະທຳ ໗** *ປະການຄື*

໑. ບໍ່ຂາດການຢ້ຽມຢາມພົບປະຄູບາອາຈານ

໔. ບໍ່ລະເລີຍການຟັງທຳ

໓. ສຶກສາອະທິສິນ ຄືຝຶກຝົນອົບຮົມຕົນໃຫ້ກ້າວໜ້າໃນການປະຕິບັດຮັກສາສິນຂັ້ນສູງຂຶ້ນໄປ

໔. ພັ່ງພ້ອມດ້ວຍຄວາມເຫຼື້ອມໃສ ໃນພຣະສົງທັງຫຼາຍທັງເປັນເຖຣະ, ນະວະກະ ແລະ ປູນກາງ*

໕. ຟັງທຳໂດຍບໍ່ແມ່ນຈະຕັ້ງໃຈຄອຍຈັບຈ້ອງຈັບຜິດຫາຊ່ອງທາງທີ່ຈະຕິຕຽນ

໖. ບໍ່ສະແຫວງຫາທັກຂິໄນຍະພາຍນອກຫຼັກຄຳສອນນີ້ຄື ບໍ່ສະແຫວງຫາເຂດບຸນນອກຫຼັກພຣະພຸດທະສາສະໜາ

---

**ຕາມພຣະວິໄນ ພຣະບວດໃໝ່ ຈົນເຖິງຍັງບໍ່ຄົບ ໕ ພັນສາ ເອີ້ນວ່າ ນະວະກະ ພຣະບວດຄົບ ໕ ພັນສາ ແຕ່ຍັງບໍ່ຄົບ ໑໐ ພັນສາ ເອີ້ນວ່າມັດສິມມະ ພຣະບວດຄົບ ໑໐ ພັນສາແລ້ວຂຶ້ນໄປ ເອີ້ນວ່າ ເຖຣະ*

ກ. ກະທຳຄວາມສະໜັບສະໜູນໃນພຣະສາສະໜານີ້ເປັນທີ່ຕົ້ນ ຄື ເອົາໃຈໃສ່ທະນຸບຳລຸງ ແລະ ຊ່ວຍກິດຈະການພຣະພຸດທະສາສະໜາ

*(ອັງ.ສັດຕະກະ. ໒໓/໒໗/໒໖)*

***ງ. ເປັນອຸບາສົກອຸບາສິກາຊັ້ນນຳ*** *ອຸບາສົກ ອຸບາສິກາທີ່ດີ ມີຄຸນສົມບັດທີ່ເອີ້ນວ່າ* ***ອຸບາສະກະທຳ ໕*** *ປະການ ຄື*

໑. ມີສັດທາ ເຊື່ອມີເຫດຜົນໝັ້ນໃນຄຸນພຣະຣັດຕະນະໄຕຣ

໒. ມີສິນ ຢ່າງໜ້ອຍດຳລົງຕົນໄດ້ໃນສິນ ໕

໓. ບໍ່ຖືມຸງຄຸນຕື່ນຂ່າວ ເຊື່ອກຳ ບໍ່ເຊື່ອມຸງຄຸນ ມຸ່ງຫວັງຜົນຈາກການກະທຳບໍ່ແມ່ນໂຊກລາງ ຫຼື ສິ່ງທີ່ຕື່ນກັນໄປວ່າຂັງສັກສິດ

໔. ບໍ່ສະແຫວງຫາທັກຂິໄນຍະນອກຄຳສອນນີ້

໕. ເອົາໃຈໃສ່ທະນຸບຳລຸງ ແລະ ຊ່ວຍກິດຈະການພຣະພຸດທະສາສະໜາ

*(ອັງ.ປັນຈະກະ. ໒໒/໑໗໕/໒໓໐)*

***ຈ. ໝັ່ນສຳຫຼວດຄວາມກ້າວໜ້າ*** *ໃຫ້ຖືທຳ ທີ່ເອີ້ນວ່າ* **ອາຣະຍະວັດ ໕** *ປະການ ເປັນຫຼັກວັດຄວາມຈະເລີນໃນພຣະສາສະໜາ*

໑. *ສັດທາ* ເຊື່ອຖືກຫຼັກພຣະສາສະໜາ ບໍ່ງົມງວາຍ

໒. *ສິນ* ປະພຶດ ແລະ ລ້ຽງຊີບສຸຈະລິດເປັນແບບຢ່າງໄດ້

໓. *ສຸຕະ* ຮູ້, ເຂົ້າໃຈຫຼັກພຣະສາສະໜາພຽງພໍແກ່ການປະຕິບັດ ແລະ ແນະນຳຜູ້ອື່ນ

໔. *ຈາຄະ* ເພື່ອແຜ່ເສຍສະຫຼະ ພ້ອມທີ່ຈະຊ່ວຍເຫຼືອຜູ້ເຊິ່ງເພິ່ງຊ່ວຍ

໕. *ປັນຍາ* ຮູ້ເທົ່າທັນໂລກ ແລະ ຊີວິດ ທຳຈິດໃຈໃຫ້ເປັນອິດສະຫຼະໄດ້

*(ອັງ.ປັນຈະກະ. ໒໒/໖໓-໔/໙໑-໒)*

## ໑໕. ຄົນສືບສາສະໜາ
(ພຣະສົງ)

ພຣະສົງ ເຊິ່ງເປັນບັນພະຊິດໃນພຣະພຸດທະສາສະໜາ ມີໜ້າທີ່ສຶກສາ, ປະຕິບັດທຳ, ເຜີຍແຜ່ຄຳສອນ ສືບຕໍ່ພຣະພຸດທະສາສະໜາ ມີຄຸນນະທຳ ແລະ ຫຼັກປະພຶດທີ່ຕ້ອງປະຕິບັດຢ່າງຫຼວງຫຼາຍ ແຕ່ໃນທີ່ນີ້ຈະສະແດງໄວ້ສະເພາະໜ້າທີ່ທີ່ສຳພັນກັບຄະລືຫັດ ແລະ ຂໍ້ເຕືອນໃຈໃນທາງປະພຶດປະຕິບັດດັ່ງຕໍ່ໄປນີ້

***ກ. ການອະນຸເຄາະປະຊາຊົນ*** *ພຣະສົງອະນຸເຄາະຄະລືຫັດຕາມຫຼັກປະຕິບັດໃນຖານະທີ່ຕົນເໜືອນ* ***ທິດເບື້ອງເທິງ*** *ດັ່ງນີ້*

໑. ຫ້າມປາມສອນໃຫ້ເວັ້ນຈາກຄວາມຊົ່ວ

໒. ແນະນຳສັ່ງສອນໃຫ້ຕັ້ງຢູ່ໃນຄວາມດີ

໓. ອະນຸເຄາະດ້ວຍຄວາມປາຖະໜາດີ

໔. ໃຫ້ໄດ້ຟັງໄດ້ຮູ້ສິ່ງທີ່ຍັງບໍ່ເຄີຍໄດ້ຮູ້ບໍ່ເຄີຍໄດ້ຟັງ

໕. ຊີ້ແຈງອະທິບາຍເຮັດສິ່ງທີ່ເຄີຍໄດ້ຟັງແລ້ວໃຫ້ເຂົ້າໃຈແຈ່ມແຈ້ງ

໖. ບອກທາງສະຫວັນ ສອນວິທີດຳເນີນຊີວິດໃຫ້ປະສົບຄວາມສຸກຄວາມຈະເລີນ

*(ທີ.ປາ. ໑໑/໒໐໔/໒໐໖)*

***ຂ. ໝັ່ນພິຈາລະນາຕົນເອງ*** *ຄື ພິຈາລະນາຕົນເອງຢູ່ສະເໝີຕາມຫຼັກ* ***ປັບພະຊິຕະອະພິນນະຫະປັດຈະເວກຂະນະ*** *(ທຳທີ່ບັນພະຊິດຄວນພິຈາລະນາເນື່ອງໆ) ໑໐ ປະການດັ່ງນີ້*

໑. ເຮົາມີເພດຕ່າງຈາກຄະລືຫັດ ສະຫຼັດແລ້ວເຊິ່ງຖານະ ຄວນເປັນຜູ້ຢູ່ງ່າຍ ຈະຈູ້ຈີ້ເອົາແຕ່ໃຈຕົນບໍ່ໄດ້

໒. ຄວາມເປັນຢູ່ຂອງເຮົາເນື່ອງດ້ວຍຄົນອື່ນ ຕ້ອງອາໄສເຂົາລ້ຽງຊີບ ຄວນທຳຕົວໃຫ້ເຂົາລ້ຽງງ່າຍ ແລະ ບໍລິໂພກປັດໄຈ ໔ ໂດຍພິຈາລະນາ ບໍ່ບໍລິໂພກດ້ວຍຕັນຫາ

໓. ເຮົາມີອາກັບກິຣິຍາທີ່ເພິ່ງເຮັດຕ່າງຈາກຄະລືຫັດ ອາການກິຣິຍາໃດໆຂອງສະມະນະ ເຮົາຕ້ອງທຳອາການກິຣິຍານັ້ນໆ ແລະ ຍັງຈະຕ້ອງປັບປຸງຕົນເອງໃຫ້ດີຍິ່ງຂຶ້ນໄປກວ່ານີ້

໔. ຕົວເຮົາເອງຍັງຕິຕຽນຕົວເຮົາເອງໂດຍສິນບໍ່ໄດ້ຢູ່ ຫຼື ບໍ

໕. ເພື່ອນພົມມະຈັນທັງຫຼາຍ ຜູ້ເປັນວິນຍູຊົນ ພິຈາລະນາແລ້ວຍັງຕິຕຽນເຮົາໂດຍສິນບໍ່ໄດ້ຢູ່ ຫຼື ບໍ

໖. ເຮົາຈະຕ້ອງເຖິງຄວາມພັດພາກຈາກຂອງຮັກຂອງຊອບໄປທັງໝົດ

໗. ເຮົາມີກຳເປັນຂອງຕົນ ເຮົາເຮັດກຳໃດ ດີກໍຕາມ ຊົ່ວກໍຕາມ ຈະຕ້ອງເປັນທາຍາດຂອງກຳນັ້ນ

໘. ວັນຄືນລ່ວງໄປໆ ບັດນີ້ເຮົາເຮັດຫຍັງຢູ່

໙. ເຮົາຍິນດີໃນທີ່ສະຫງັດຢູ່ ຫຼື ບໍ

໑໐. ຄຸນວິເສດຍິ່ງກວ່າມະນຸດສາມັນທີ່ເຮົາບັນລຸແລ້ວ ມີຢູ່ ຫຼື ບໍ ທີ່ຈະໃຫ້ເປັນຜູ້ບໍ່ເຂີນອາຍ ເມື່ອຖືກເພື່ອນບັນພະຊິດຖາມໃນເວລາພາຍຫຼັງ.

*(ອັງ. ທະສະກະ. ໒໔/໔໘/໗໑)*

# ພຣະພົມຄຸນາພອນ (ປ.ອ. ປະຍຸດໂຕ)

## ປັດຈຸບັນດຳລົງຕຳແໜ່ງ ສົມເດັດພຣະພຸດທະໂຄສາຈານ

# ປະຫວັດ

# ພຣະພົມຄຸນາພອນ (ປ.ອ. ປະຍຸດໂຕ)

## ປັດຈຸບັນດຳລົງຕຳແໜ່ງ ສົມເດັດພຣະພຸດທະໂຄສານ



ພຣະພົມຄຸນາພອນ (ປ.ອ. ປະຍຸດໂຕ) ຊື່ເດີມແມ່ນ ປະຍຸດ ນາມສະກຸນ ອາຣະຍາງກູນ ເກີດເມື່ອວັນທີ ๑๒ ມັງກອນ ພ.ສ ๒๔๘๑ ທີ່ ອຳເພີສີພະຈັນ ຈັງຫວັດສຸພັນບຸຣີ ປະທດຣາຊະອານາຈັກໄທ

ບັນພະຊາເມື່ອວັນທີ ๑๐ ພຶດສະພາ ๒๔๙๒ ທີ່ວັດບ້ານກ່າງ ອຳເພີສີພະຈັນ ແລະ ເລີ່ມຮຽນພຣະປະຣິຍັດຕິທຳທີ່ວັດນັ້ນ

ຕໍ່ມາ ພ.ສ ๒๔๙๕ ໄປຢູ່ວັດປະສາດທອງ ອຳເພີເມືອງ ຈັງຫວັດສຸພັນບຸຣີ ຮຽນພຣະປະຣິຍັດຕິທຳຕໍ່ ແລະ ໄດ້ເຂົ້າເຝິກວິປັດສະນາກຳມະຖານ ເມື່ອຈົບການເຝິກທີ່ຈັດຂຶ້ນແລ້ວ ພຣະອາຈານຜູ້ນຳປະຕິບັດເຊີນໄປຢູ່ປະຈຳສຳນັກວິປັດສະນາ ແຕ່ໂຍມພໍ່ບໍ່ຍິນຍອມ

ຈາກນັ້ນ ພ.ສ ๒๔๙๗ ມາຢູ່ວັດພຣະພິເລນ ບາງກອກຮຽນພຣະປະຣິຍັດຕິທຳຈົນເສັງໄດ້ປະຮຽນທຳ ๙ ປະໂຍກໄດ້ ຂະນະຍັງເປັນສາມະເນນ ຈຶ່ງໄດ້ຮັບການອຸປະສົມບົດໃນບໍຣົມຣາຊານຸເຄາະເປັນນາກຫຼວງ ທີ່ອຸໂບສົດວັດສີຣັດຕະນະສາສະດາຣາມ ເມື່ອວັນທີ ๒๔ ກໍລະກົດ ພ.ສ ๒๕๐๔ ແລ້ວເສັງ

ໄດ້ປະຣິນຍາພຸດທະສາດບັນດິດ (ກຽດນິຍົມອັນດັບ ໑) ຈາກມະຫາຈຸລາລົງກອນຣາຊະວິທະຍາໄລ ເມື່ອປີ ພ.ສ ໒໕໐໕ ແລະ ເສັງວິຊາຊຸດຄູ ພ.ມ ເມື່ອປີ ພ.ສ ໒໕໐໖

**ໄດ້ຮັບປະລິນຍາກິດຕິມະສັກ**
**ຈາກສະຖາບັນການສຶກສາ ໑໕ ສະຖາບັນດັ່ງນີ້**

໑) ພຸດທະສາດດຸດສະດີບັນດິດກິດຕິມະສັກຈາກມະຫາຈຸລາລົງກອນຣາຊະວິທະຍາໄລ ປີ ພ.ສ ໒໕໒໕

໒) ສິລະປະສາດດຸດສະດີບັນດິດກິດຕິມະສັກ (ສາຂາປັດຊະຍາ) ຈາກມະຫາວິທະຍາໄລທຳມະສາດ ປີ ພ.ສ ໒໕໒໙

໓) ສຶກສາສາດດຸດສະດີບັນດິດກິດຕິມະສັກ (ສາຂາຫຼັກສູດ ແລະ ການສອນ) ຈາກມະຫາວິທະຍາໄລສິລະປະກອນ ປີ ພ.ສ ໒໕໒໙

໔) ສິລະປະສາດດຸດສະດີບັນດິດກິດຕິມະສັກ (ສຶກສາສາດ-ການສອນ) ຈາກມະຫາວິທະຍາໄລກະເສດສາດ ປີ ພ.ສ ໒໕໓໐

໕) ອັກສອນສາດດຸດສະດີບັນດິດກິດຕິມະສັກ ຈາກຈຸລາລົງກອນມະຫາວິທະຍາໄລ ປີ ພ.ສ ໒໕໓໑

໖) ສິລະປະສາດດຸດສະດີບັນດິດກິດຕິມະສັກ (ສາຂາພາສາສາດ) ຈາກມະຫາວິທະຍາໄລມະຫິດົນ ປີ ພ.ສ ໒໕໓໑

໗) ການສຶກສາດຸດສະດີບັນດິດກິດຕິມະສັກ (ສາຂາປັດຊະຍາການສຶກສາ) ຈາກມະຫາວິທະຍາໄລສີນະຄະຣິນວິໂຣດ ປີ ພ.ສ ໒໕໓໓

໘) ປັດຊະຍາດຸດສະດີບັນດິດກິດຕິມະສັກ ສາຂາສຶກສາສາດ ຈາກມະຫາວິທະຍາໄລລາມຄຳແຫງ ປີ ພ.ສ ໒໕໓໖

໙) ສຶກສາສາດດຸດສະດີບັນດິດກິດຕິມະສັກຈາກມະຫາວິທະຍາໄລສົງຂານະຄະຣິນ ປີ ພ.ສ ໒໕໓໗

໑໐) ຕຣີປີຕະກາຈານກິດຕິມະສັກ ຈາກນະວະນາລັນທຳມະຫາວິຫານ ຣັດພິຫານ ປະເທດອິນເດຍ ປີ ພ.ສ ໒໕໓໘

໑໑) ອັກສອນສາດດຸດສະດີບັນດິດກິດຕິມະສັກ (ຈະຣິຍະສາດສຶກສາ) ຈາກມະວິທະຍາໄລມະຫິດົນ ປີ ພ.ສ ໒໕໓໙

໑໔) ວິທະຍາສາດດຸດສະດີບັນດິດກິດຕິມະສັກ ຈາກ ມ. ຊຽງໃໝ່ ປີ ພ.ສ ໒໕໔໑

໑໓) ສາສະນະສາດດຸດສະດີບັນດິດກິດຕິມະສັກ ສາຂາພຸດທະສາດ ຈາກມະຫາວິທະຍາໄລມະຫາມະກຸດຣາຊະວິທະຍາໄລ ປີ ພ.ສ ໒໕໔໔

໑໔) ຄະຣຸສາດດຸດສະດີບັນດິດກິດຕິມະສັກ ສາຂາພຸດທະສາສະໜາ ຈາກສະຖາບັນຣາຊະພັດບ້ານສົມເດັດເຈົ້າພະຍາ ປີ ພ.ສ ໒໕໔໔

໑໕) ສິລະປະສາດດຸດສະດີບັນດິດກິດຕິມະສັກ ສາຂາການບໍລິຫານອົງການ ຈາກມະຫາວິທະຍາໄລສີປະທຸມ ປີ ພ.ສ ໒໕໔໕

**ສາສະນະກິດ**

ພ.ສ ໒໕໐໕ - ໒໕໐໗ ສອນພະແນກບາລີກຽມອຸດົມສຶກສາ

ພ.ສ ໒໕໐໗ - ໒໕໑໗ ສອນໃນຊັ້ນປະລິນຍາຕີພຸດທະສາດບັນດິດຂອງມະຫາຈຸລາລົງກອນຣາຊະວິທະຍາໄລ ລະຫວ່າງນັ້ນບາງປີບັນລະຍາຍທີ່ຄະນະບູຣານນະຄະດີມະຫາໄລສິລະປະກອນ ແລະໃນໂຄງການສາສະໜາປຽບທຽບມະຫາວິທະຍາໄລມະຫິດົນ

ພ.ສ ໒໕໐໗ - ໒໕໑໗ ດຳລົງຕຳແໜ່ງຜູ້ຊ່ວຍເລຂາທິການ ແລະ ຕໍ່ມາເປັນຮອງເລຂາທິການມະຫາຈຸລາລົງກອນຣາຊະວິທະຍາໄລ

ພ.ສ ໒໕໑໕ - ໒໕໑໘ ເປັນເຈົ້າອາວາດວັດພິເຣນ

ພ.ສ ໒໕໑໕ ບັນລະຍາຍວິຊາພຸດທະສາສະໜາກັບວັດທະນະທຳໄທທີ່ University Museum, University of Pennsylvania

ພ.ສ ໒໕໑໘ ບັນລະຍາຍວິຊາທາງພຸດທະສາສະໜາ ທີ່ Swarthmore College, Pennysylvania

ພ.ສ ໒໕໔໔ ໄດ້ຮັບອາຣາທະນາເປັນ Visiting Scholar ທີ່ Center of the Study World Religions ແລະ ບັນລະຍາຍວິຊາທາງພຸດທະສາສະໜາສຳລັບ Divinity Faculty ແລະ Arts Faculty, Harvard University

ພ.ສ ໒໕໓໗ ເປັນເຈົ້າອະທິການວັດຍານະເວສະກະວັນ ຕຳບົນບາງກະທຶກ ອຳເພີສາມພານ ຈັງຫວັດນະຄອນປະຖົມ ຈົນປັດຈຸບັນ

## ປະກາດກຽດຕິຄຸນ ແລະ ລາງວັນ

ພ.ສ ໒໕໔໕ ໄດ້ຮັບການປະກາດກຽດຕິຄຸນໃນຖານະເຮັດຄຸນປະໂຫຍດແກ່ພຣະພຸດທະສາສະໜາ ໃນການສະຫຼອງ ໒00 ປີ ກຸງຣັດຕະນະໂກສິນ

ພ.ສ ໒໕໔໕ ໄດ້ຮັບລາງວັນວັນນະກຳຊັ້ນ ໑ ປະເພດຮ້ອຍແກ້ວສຳລັບງານນິພົນພຸດທະທຳ ຈາກມູນນິທິທະນາຄານກຸງເທບ

ພ.ສ ໒໕໓໒ ໄດ້ຮັບພະຣາຊະທານໂລ້ລາງວັນ ມະຫິດົນອະຣານຸສອນ

ພ.ສ ໒໕໓໒ ຮັບໄດ້ໂລ້ລາງວັນຜູ້ເຮັດຄຸນປະໂຫຍດຕໍ່ການສຶກສາໃນວາລະຄົບຮອບ ໒໐ ປີ ຄະນະສຶກສາສາດມະຫາວິທະຍາໄລກະເສດສາດ

ພ.ສ ໒໕໓໓ ໄດ້ຮັບລາງວັນກິດຕິຄຸນ ສັງເງິນ ສາຂາເຜີຍແຜ່ພຣະພຸດທະສາສະໜາ

ພ.ສ ໒໕໓໓ ໄດ້ຮັບລາງວັນການສຶກສາເພື່ອສັນຕິພາບຈາກອົງການຢູເນດສະໂກ (UNESCO Prize for Peace Education)

ພ.ສ ໒໕໓໘ ຄະນະກົມການວັດທະນະທຳວັດທະນະທຳແຫ່ງຊາດປະເພດເຊີດຊູກຽດເປັນຜູ້ຊົງຄຸນນະວຸດທາງວັດທະນະທຳ

ພ.ສ ໒໕໔໑ ມະຫາວິທະຍາໄລທຳມະສາດ ແລະ ມູນນິທິໂຕໂຍຕ້າ ປະເທດໄທ ຖວາຍລາງວັນ TTF Award ສາຂາສັງຄົມສາດ ແລະ ມະນຸດວິທະຍາ ສຳລັບຜົນງານທາງວິຊາການດີເດັ່ນ ໜັງສືການພັດທະນາທີ່ຍັ້ງຢືນ

ພ.ສ ໒໕໔໔ ລາງວັນ ສາໂຣດບົວສີ ປຣາດຜູ້ຊົງສິນ ຈາກມະຫາວິທະຍາໄລສີນະຄະລິນວິໂຣດ

ພ.ສ ໒໕໔໔ ມີພຣະບໍຣົມຣາຊະອົງການໂປດເກົ້າ ແຕ່ງຕັ້ງພຣະທຳປິດົກ (ປ.ອ. ປະຍຸດໂຕ) ເປັນສາສະດາຈານພິເສດຂອງມະຫາວິທະຍາໄລມະຫາຈຸລາລົງກອນຣາຊີວິທະຍາໄລ

ພ.ສ ໒໕໔໗ ມະຫາວິທະຍາໄລພຣະພຸດທະສາສະໜາແຫ່ງໂລກ ຖວາຍຕຳແໜ່ງເມທາຈານ (Most Eminent Scholar) ແກ່ພຣະທຳປິດົກ (ປ.ອ. ປະຍຸດໂຕ) ໃນຖານະນັກປຣາດທາງພຣະພຸດທະສາສະໜາສາຍເຖຣະວາດ

**ສະມະນະສັກ**

ພ.ສ ໒໕໑໒ ໄດ້ຮັບພຣະຣາຊະທານສຳມະນະສັກເປັນ ພຣະສີວິສຸທິດໂມລີ

ພ.ສ ໒໕໑໖ ໄດ້ຮັບພຣະຣາຊະທານເລື່ອນສຳມະນະສັກເປັນ ພຣະຣາດວໍຣະມຸນີ

ພ.ສ ໒໕໓໐ ໄດ້ຮັບພຣະຣາຊະທານເລື່ອນສຳມະນະສັກເປັນ ພຣະເທບເວທີ

ພ.ສ ໒໕໓໖ ໄດ້ຮັບພຣະຣາຊະທານເລື່ອນສຳມະນະສັກເປັນ ພຣະທຳປິດົກ

ພ.ສ ໒໕໔໗ ໄດ້ຮັບພຣະຣາຊະທານເລື່ອນສຳມະນະສັກເປັນ ພຣະພົມຄຸນາພອນ

ພ.ສ ໒໕໕໙ ໄດ້ຮັບພຣະຣາຊະທານໂປດສະຖາປານາສະມະນະສັກເປັນ ສົມເດັດພຣະຣາຊາຄະນະ ຊັ້ນສຸພັນນະບັດ ສົມເດັດພຣະພຸດທະໂຄສາຈານ

## ຜົນງານເຜີຍແຜ່ພຣະພຸດທະສາສະໜາ

ງານຫຼັກຂອງພຣະພົມຄຸນາພອນ ດ້ານໜຶ່ງ ປາກົດອອກມາໃນການບັນລະຍາຍປາຖະກະຖາ ທຳມະກະຖາ ແລະ ທຳມະເທດສະໜາ ພ້ອມກັບດ້ວຍການຂະຫຍາຍພົມແດນແຫ່ງວິຊາການ ໂດຍມີຜູ້ຂໍນຳໄປພິມເປັນໜັງສືແຈກຈ່າຍໃຫ້ກວ້າງຂວາງອອກໄປ

ງານນິພົນຂອງພຣະພົມຄຸນາພອນໃນລັກສະນະຕຳລາ ເອກະສານທາງວິຊາການ ແລະ ໜັງສືອະທິບາຍທຳທົ່ວໆໄປ ມີຈຳນວນກວ່າ ໓໑໓ ເລື່ອງເຊັ່ນ ພຸດທະທຳ, ພົດຈະນານຸກົມພຸດທະສາດ: ສະບັບປະມວນທຳ, ພົດຈະນານຸກົມພຸດທະສາດ:ສະບັບປະມວນສັບ, ທຳມະນູນຊີວິດ, ການສຶກສາຂອງຄະນະສົງ: ບັນຫາທີ່ຖ້າທາງອອກ, ການສຶກສາທີ່ສາກົນບົນຖານແຫ່ງພູມປັນຍາໄທ, Thai Buddhism in the Buddhist World, ທາງສາຍອິດສະຫຼະພາບຂອງການສຶກສາໄທ, Buddhist Economics, ພຣະພຸດທະສາສະໜາໃນຖານະເປັນຮາກຖານຂອງວິທະຍາສາດ, ນິຕິສາດແນວພຸດ, A Buddhist Solution for the Twenty-first Century, ສິດທິມະນຸດສະຍະຊົນ: ສ້າງສັນຕິສຸກ ຫຼື ສະຫຼາຍສັງຄົມ, ກໍລະນີທຳມະກາຍ: ບົດຮຽນເພື່ອສຶກສາພຣະພຸດທະສາສະໜາ, ສ້າງສັນສັງຄົມໄທ ແລະ ທຳມະກັບທຸລະກິດເປັນຕົ້ນ

ນອກຈາກນັ້ນພຣະພົມຄຸນາພອນ (ປ.ອ. ປະຍຸດໂຕ) ຍັງໄດ້ຮັບນິມົນເປັນທີ່ປຶກສາຂອງມະຫາວິທະຍາໄລມະຫິດົນ ໃນການສ້າງພຣະໄຕຣປິດົກ ສະບັບຄອມພິວເຕີ ສຳເລັດສົມບູນເປັນອັນດັບທຳອິດຂອງໂລກ ເຮັດໃຫ້ການສຶກສາຄົ້ນຄວ້າຫຼັກຄຳສອນຂອງພຣະພຸດທະສາສະໜາເປັນໄປຢ່າງສະດວກ, ວ່ອງໄວ ແລະ ຖືກຕ້ອງ.

# ລາຍຊື່ເຈົ້າສັດທາພິມ

1. ພຣະຄູບາ ຄຳແສນ ພົມປັນຍາ 1,000,000 ກີບ

2. ພຣະ ອະລຸນຕະຊາດ ເທບທິລາດ 250,000 ກີບ

3. ພຣະ ບຸນປັນ ແກ້ວມະນີ 1,000 ບາດ

4. ພຣະ ວົງພະຈັນ ໄຊຍະເພັດ 200,000 ກີບ

5. ພຣະ ພູວົງ ຂາວຄູນປະເສີດ 200,000 ກີບ

6. ພຣະ ອາຈານ Dr. ວັດຊະຣິນ ປີຍະທັມໂມ 500 ບາດ

7. ພຣະ ສົມຈັນ ສະມະຈິດໂຕ 500 ບາດ

8. ພຣະ ພັນທອງ ດາວມະນີຈັນ 100,000 ກີບ

9. ພຣະ ວອນໄຊ ສີວຽງໄຊ 100,000 ກີບ

10.ຊົມຣົມນັກສຶກສາສົງລາວໃນຣາຊະອານາຈັກໄທ 100,000 ກີບ

11.ພຣະ ນັນ ຈັນທະລາດ 50,000 ກີບ

12.ພຣະ ຈັນນະສອນ ວິລອຍສອນ 50,000 ກີບ

13.ພຣະ ນ້ອຍ ດາວມະນີຈັນ 50,000 ກີບ

14.ພຣະ ວັດ ສີທະປັນຍາ 30,000 ກີບ

15.ສາມະເນນ ດອກແກ້ວ ມິ່ງເມືອງ 45,000 ກີບ

16.ສາມະເນນ ສົມຊາຍ ຄຳພາວົງ 100 ບາດ

17.ສາມະເນນ ສີຫຼ້າ ສີສົມພອນ 20,000 ກີບ

18.ແມ່ໃຫຍ່ ພອນວິໄລ ແສນປະເສີດ 5,000,000 ກີບ

19.ທ່ານ ພູຂົງ+ນາງ ຄູນດີ ຈັນທະຈັກ ພ້ອມຄອບຄົວ 1,000,000 ກີບ

20.ແມ່ຂາວ ເພນແຂ ສັບພະກິດຈຳນົງ ພ້ອມລູກຫລານ 1,000 ບາດ

21.Pawana Fikowski And Family 1,000 ບາດ

22.ແມ່ອອກ ຮັກສຸກໃຈ ປັນຍາສິດ 200,000 ກີບ

23.ນາງ ກອງຄຳ ບໍລິວົງ ພ້ອມແມ່ 150,000 ກີບ

24.ແມ່ອອກ ທັນຍະຣັດ ທະວັດມົງຄົນສັກ 500 ບາດ

25.ແມ່ອອກ ສຸກສະຫວັນ ທອງສີສຸກ 100,000 ກີບ

26.ທ່ານ ປທ. ສອນ ແສງຄຳທິວົງ 100,000 ກີບ

27.ທ້າວ ແສງນວນ ສີລຳໄພ 100,000 ກີບ

28.ແມ່ອອກ ອອນອະນົງ ປັນຍາສີ 300 ບາດ

29.ແມ່ອອກ ຂັນຄຳ ສີວິໄລ ພ້ອມຄອບຄົວ 50,000 ກີບ

30.ແມ່ອອກ ພຸດ ຫຼວງລູກພະຄູນ 50,000 ກີບ